# ປື້ມຄູ່ມື ແນະນຳຄຸນນະພາບ ເຂົ້າ ແລະ ສົ່ງອອກເຂົ້າໄປ ສປ ຈີນ



# ສາລະບານ

ໜ້າ

1. ທີ່ມາຂອງປື້ມຄູ່ມື 2
2. ສະພາບລວມ 3
3. ການກຽມຄວາມພ້ອມ 4
4. ການສົ່ງເສີມຄຸນນະພາບເຂົ້າ 5
5. ຂັ້ນຕອນການຊື້-ຂາຍເຂົ້າ: ເງື່ອນໄຂທີ່ຈຳເປັນຕ້ອງຮູ້ 17
6. ຂັ້ນຕອນການສົ່ງອອກເຂົ້າໄປຈຳໜ່າຍຢູ່ຕ່າງປະເທດ 18
7. ສ່ວນເພີ່ມຕື່ມ 34

ເອກະສານອ້າງອີງ 37

# *ບົດນຳ*

*ເພື່ອເປັນການສືບຕໍ່ຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍຜົນຂອງການຈັດຕັ້ງປະບິບັດໂຄງການຜະລິດເຂົ້າ ແລະ ສັດ ໃນໂຄງການຄໍ້າປະກັນສະບຽງອາຫານ ແລະ ເປັນສິນຄ້າ ຢູ່ໃນ10 ແຂວງເປົ້າໝາຍຂອງໂຄງການ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ, ກົມສົ່ງເສີມການຄ້າ ໄດ້ມີການຮຽບຮຽງບັນດານິຕິກຳ, ເອກະສານຕ່າງໆ ກ່ຽວກັບກົນໄກການສົ່ງອອກເພື່ອຊຸກຍູ້ສົ່ງເສີມໃຫ້ທຸລະກິດສາມາດຂະຫຍາຍຕະຫລາດໄດ້.*

*ສະນັ້ນ, ເພື່ອເຮັດໃຫ້ໂຄງການໄດ້ສຳເລັດຕາມເປົ້າຫມາຍ ແລະ ເປັນການຜັນຂະຫຍາຍ ຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງຄະນະປະສານງານຂັ້ນສູນກາງປະຕິ ບັດໂຄງການຜະລິດປັນສິນຄ້າ ແລະ ໂຄງການຄໍ້າປະກັນຄວາມໝັ້ນຄົງສະບຽງອາຫານແຫ່ງຊາດ ແລະ ທັງເປັນການກະຕຸກຊຸກຍູ້ການຜະລິດ, ການປຸງແຕ່ງ, ການຈໍລະຈອນ ແລະ ການຄ້າ ແນໃສ່ ຍົກສູງຄຸນນະພາບຊີວິດຂອງຊາວກະສິກອນໃຫ້ສູງຂຶ້ນ, ຍູ້ດັນການພົວພັນການຜະລິດໃຫ້ສອດຄ່ອງ ກັບກຳລັງການຜະລິດ ພ້ອມທັງປະກອບສວ່ນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມ ໃຫ້ຂະຫຍາຍ ຕົວຢ່າງຕໍ່ເນື່ອງ. ກົມສົ່ງເສີມການຄ້າ ໃນນາມຮອງກອງເລຂາ ໄດ້ສ້າງ* **“ປຶ້ມຄູ່ມືການ ການສົ່ງເສີມຄຸນນະພາບເຂົ້າ ລາວ ແລະ ສົ່ງອອກເຂົ້າໄປ ສປ ຈີນ”** *ເພື່ອເປັນການສ້າງສິ່ງ ອຳນວຍຄວາມສະດວກ ໃຫ້ແກ່ກຸ່ມຜູ້ຜະລິດ, ຜູ້ປະກອບການສົ່ງອອກສິນຄ້າປະສິກຳປະເພດ ເຂົ້າ. ປຶ້ມຄູ່ມືດັ່ງກ່າວແມ່ນເປັນແນວທາງ ແລະ ຂໍ້ມູນຂ່າວສານທັງເປັນກົນໄກ ແລະ ຂໍ້ແນະນຳ ໃນການ ຈັດຕັ້ງປະຕິບັດທຸລະກິດເຂົ້າ ຂອງ ສປປ ລາວ ທີ່ຜະລິດໄດ້ ແລະ ທັງເປັນການພັດທະນາຍົກລະ ດັບມາດຕະຖານ, ຄຸນະພາບຂອງ ເຂົ້າລາວ ໃຫ້ສາມາດຮູ້ປັບປຸງມາດຕະຖານເຂົ້າຂອງຕົນເອງ ເພື່ອໃຫ້ເຊື່ອມໂຍ່ງເຂົ້າ ມາດຕະຖານ ແລະ ຄຸນະພາບຂອງປະເທດທີ່ນຳເຂົ້າຈາກປະເທດອາຊຽນ ແລະ ຢູໂຣບ.*

*ການສ້າງຄູ່ມືການສົ່ງອອກເຂົ້າໄປ ສສ ຫວຽດນາມ, ສປ ຈີນ ແລະ ສະຫະພາບຢູໂຣບໄດ້ເຮັດການຈັດພິມເປັນເທື່ອທຳອິດ ແລະ ຖ້າຫາກຍັງມີບາງຂໍ້ມູນທີ່ມີການຂາດຕົກບົກຜ່ອງດ້ານຕ່າງໆຍັງບໍ່ທັນສົມບູນແບບນັ້ນທາງກົມສົ່ງເສີມການຄ້າ ມີຄວາມຍິນດີຮັບການຕຳນິຕິຊົມຈາກພາກສ່ວນ ທີ່ກ່ຽວຂ້ອງພາຍໃນ ແລະ ອົງການຈັດຕັ້ງສາກົນຂັ້ນຕ່າງໆ ເພື່ອນຳມາປັບປຸງບັນດາເນື້ອໃນໃຫ້ດີ ຂຶ້ນກວ່າເກົ່າ ແລະ ເພື່ອເປັນບົດຮຽນເຂົ້າໃນການປັບປູງໃຫ້ດີຂຶ້ນກວ່າເກົ່າໃນຕໍ່ໜ້າ.*

*ຫວັງຢ່າງຍິ່ງວ່າ ການຈັດພິມ ແລະ ຈຳໜ່າຍໃນຄັ້ງນີ້ ແມ່ນມີຄວາມໝາຍ ແລະ ຄວາມສຳຄັນ ເຂົ້າໃນການປະກອບສ່ວນໃຫ້ແກ່ຜູ້ປະກອບການທຸລະກິດ ເຂົ້າ ລວມທັງພະນັກງານ ພາກລັດ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ສາມາດນຳໃຊ້ປຶ້ມດັ່ງກ່າວໃນການປັບປູງເຂົ້າໃສ່ໃນວຽກງານຂອງຕົນ ໃຫ້ເກີດດອກອອກຜົນ ແລະ ປະສົບຜົນສຳເລັດ ຕາມຄວາມຕ້ອງການ.*

# 1. ທີ່ມາຂອງການສ້າງຄູ່ມື

ການຄໍ້າປະກັນສະບຽງອາຫານ ໃນປີ 2025 ຮັບປະກັນວ່າປະຊາຊົນຈະຕ້ອງຮັບປະກັນສານອາຫານ 2,600 ກິໂລແຄລໍລີ ຕໍ່ຄົນ ຕໍ່ມື້. ໃນນັ້ນ, ເຂົ້າ ແລະ ທັນຍະພືດ ຈະຕ້ອງໄດ້ 54 ສ່ວນຮ້ອຍ, ຊີ້ນ, ໄຂ່ ແລະ ປາ 13 ສ່ວນຮ້ອຍ, ຜັກ ໝາກໄມ້ 8 ສ່ວນຮ້ອຍ, ນົມ ແລະ ນໍ້າຕານ 25 ສ່ວນຮ້ອຍ. ໃນແຜນການຜະລິດເຂົ້າ ແມ່ນຕັ້ງເປົ້າໝາຍໃຫ້ສະໜອງພາຍໃນ ແລະ ສົ່ງອອກໄປຕ່າງປະເທດໄດ້ 1.5 ລ້ານໂຕນ ພາຍໃນປີ 2025 (ກະຊວງກະສິກຳ ແລະ ປ່າໄມ້, 2015). ເພື່ອເຮັດໃຫ້ໄດ້ຕາມເປົ້າໝາຍການສົ່ງອອກນັ້ນ ຕ້ອງມີການເພີ່ມຜົນຜະລິດເຂົ້າ, ຊອກຫາຕະຫຼາດຮອງຮັບ ແລະ ສ້າງມາດຕະຖານການຜະລິດ ແລະ ການສົ່ງອອກໃຫ້ກົງກັບມາດຕະຖານການນຳເຂົ້າຂອງລູກຄ້າໃນຕ່າງປະເທດ.

ຈາກຕົວເລກທາງສະຖິຕິປະລິມານການນຳເຂົ້າສິນຄ້າເຂົ້າ ຈາກທົ່ວໂລກ ຂອງບັນດາກຸ່ມປະເທດເອີຣົບ, ສປ ຈີນ ແລະ ຫວຽດນາມ ຖືວ່າມູນຄ່າການນຳເຂົ້າຂອງປະເທດເຫຼົ່ານີ້ມີມູນຄ່າສູງຫຼາຍໃນແຕ່ລະປີ ແລະ ການນຳເຂົ້າກໍ່ມາຈາກຫຼາຍປະເທດ, ສຳລັບກຸ່ມປະເທດເອີຣົບ ນັບແຕ່ປີ 2015 ເປັນຕົ້ນມາມູນຄ່າການນຳເຂົ້າຄິດເປັນມູນຄ່າເງິນເທົ່າກັບ 2.69 ຕື້ໂດລາ, ຕໍ່ມາໃນປີ 2016 ມີມູນຄ່າ 2.52 ຕື້ໂດລາ ແລະ ປີ 2017 ມີມູນຄ່າ 2.72 ຕື້ໂດລາ, ສ່ວນ ສປປ ຈີນ ປະລິມານການນຳເຂົ້າໃນທົ່ວໂລກ ໃນປີ 2013 ມີມູນຄ່າທັງໝົດ 1.05 ຕື້ ໂດລາ, ປີ 2014 ມີມູນຄ່າ 1.22 ຕື້ໂດລາ, ປີ 2015 ມີມູນຄ່າ 1,47 ຕື້ ໂດລາ, ປີ 2016 ມີມູນຄ່າ 1,58 ຕື້ ໂດລາ ແລະ ປີ 2017 ມີມູນຄ່າ 1,82 ຕື້ໂດລາ. ສຸດທ້າຍຄື ສສ ຫວຽດນາມ ມູນຄ່າການນຳເຂົ້າເຂົ້ານັບແຕ່ປີ 2013 ມີມູນຄ່າ 58.65 ລ້ານ ໂດລາ, ປີ 2014 ມີມູນຄ່າ 53.15 ລ້ານໂດລາ, ປີ 2015 ມີມູນຄ່າ 46.47 ລ້ານ ໂດລາ, ປີ 2016 ມີມູນຄ່າ 40.49 ລ້ານ ໂດລາ ແລະ ປີ 2017 ມີມູນຄ່າ 37.69 ລ້ານໂດລາ

ເຂົ້າ ຖືເປັນສິນຄ້າກະສິກຳທີ່ສຳຄັນປະເພດໜຶ່ງ ທີ່ ສປປ ລາວ ໄດ້ມີການສົ່ງອອກໄປຂາຍໃນບັນດາປະເທດຕ່າງໆ ແລະ ມີການເຕີບໂຕຢ່າງຕໍ່ເນື່ອງ. ພ້ອມກັນນັ້ນ, ບັນດາປະເທດທີ່ສປປ ລາວ ສົ່ງໄປຂາຍກໍ່ໄດ້ແກ່ກຸ່ມປະເທດເອີຣົບ, ສປ ຈີນ ແລະ ສສ ຫວຽດນາມ ເຊິ່ງໃນປີ 2013 ເປັນຕົ້ນມາ ມູນຄ່າການສົ່ງອອກເຂົ້າໄປຂາຍໃນປະເທດກຸ່ມສະຫະພາບເອີຣົບ ໂດຍມີມູນຄ່າ 5.74 ລ້ານໂດລາ ແລະ ມີມູນຄ່າທີ່ເພີ່ມຂຶ້ນໃນປີ 2017 ເປັນ 32.76 ໂດລາ, ສຳລັບ ສສ ຫວຽດນາມ ໃນປີ 2013 ມີມູນຄ່າການສົ່ງອອກເຂົ້າ 378,000 ໂດລາ ແລະ ມີມູນຄ່າເພີ່ມຂຶ້ນໃນປີ 2017 ເປັນ 1,690,000 ໂດລາ ສຸດທ້າຍຄື ສປ ຈີນ ມູນຄ່າການສົ່ງອອກເຂົ້າໃນປີ 2013 ມີມູນຄ່າເທົ່າກັບ 5,743,000 ໂດລາ ແລະ ມີມູນຄ່າທີ່ເພີ່ມຂຶ້ນໃນປີ 2017 ເປັນ 32,760,000ໂດລາ

ຈາກທີ່ໄດ້ກ່າວມາໃນຂ້າງຕົ້ນ ເພື່ອໃຫ້ ສປປ ລາວ ສາມາດທີ່ຈະສົ່ງອອກເຂົ້າໄປຂາຍໃນປະເທດຕ່າງໆ ແລະ ສາມາດແຂ່ງຂັນກັບບັນດາປະເທດຜູ້ສົ່ງອອກເຂົ້າ ຈຶ່ງມີຄວາມຈຳເປັນທີ່ຈະຕ້ອງໄດ້ສ້າງຄູ່ມືມາດຕະຖານໃນການສົ່ງອອກເຂົ້າ ເພື່ອໃຫ້ເປັນບ່ອນອີງແກ່ຜູ້ທີ່ຕ້ອງການຈະສົ່ງອອກເຂົ້າໄປບັນດາປະເທດເຫຼົ່ານີ້ໃຫ້ກົງກັບຄວາມຕ້ອງການຂອງຜູ້ນຳເຂົ້າໃນປະເທດທີ່ເປັນຄູ່ຄ້າທີ່ສຳຄັນຂອງ ສປປ ລາວ.

## 2. ສະພາບລວມ

ການດຳເນີນທຸລະກິດການສົ່ງອອກເຂົ້າ ເປັນທຸລະກິດທີ່ມີການແຂ່ງຂັນກັນຂ້ອນຂ້າງສູງ, ຜູ້ທີ່ມີຄວາມຕ້ອງການທີ່ຈະດຳເນີນທຸລະກິດນີ້ຈຶ່ງຈຳເປັນຕ້ອງວາງແຜນ ແລະ ກະກຽມຄວາມພ້ອມໃນການດຳເນີນການດ້ວຍຄວາມຮອບຄອບທຸກຂັ້ນຕອນ ເລີ່ມຕັ້ງແຕ່ການຕັດສິນໃຈດຳເນີນທຸລະກິດໄປຈົນເຖິງການສົ່ງສິນຄ້າໃຫ້ຜູ້ຊື້. ດັ່ງນັ້ນ, ເພື່ອເປັນແນວທາງດຳເນີນການໃນການສົ່ງອອກເຂົ້າ ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ສະຫຼຸບຂໍ້ມູນ ທີ່ຜູ້ມີຄວາມຕ້ອງການສົ່ງອອກເຂົ້າຄວນຮູ້ເພື່ອປະກອບການພິຈາລະນາ ດັ່ງນີ້:

- ການກະກຽມຄວາມພ້ອມກ່ອນຈົດທະບຽນເປັນຜູ້ສົ່ງອອກເຂົ້າ
- ຂັ້ນຕອນການຊື້-ຂາຍເຂົ້າ: ເງື່ອນໄຂທີ່ຈຳເປັນຕ້ອງຮູ້
- ບາງຕົວຢ່າງກ່ຽວກັບ ຄຸນນະພາບຂອງເຂົ້າ
- ຄ່າໃຊ້ຈ່າຍໃນການສົ່ງອອກເຂົ້າໄປຈຳໜ່າຍຢູ່ຕ່າງປະເທດ
- ລະບຽບ ແລະ ວິທີການປະຕິບັດກ່ຽວກັບການສົ່ງອອກເຂົ້າໄປຈຳໜ່າຍຢູ່ຕ່າງປະເທດທີ່ສຳຄັນ

ອີງຕາມບົດລາຍງານຂອງ ກະຊວງກະສິກຳ ແລະ ປ່າໄມ້ ໃນປີ 2017 ຜ່ານມາ, ໂດຍສົມທຽບ ການຜະລິດເຂົ້າ ກັບ ບັນດາ ປະເທດ ສະມາຊິກ ປະເທດ ອາຊຽນ ໂດຍສະເພາະ ສສ ຫວຽດນາມ, ໄທ ແລະ ກຳປູເຈຍ ທີ່ມີການຜະລິດ ເປັນອຸດສາຫະກຳ. ຖ້າສົມທຽບລະຫວ່າງ ຫວຽດນາມ ແລະ ໄທ ເຫັນວ່າ ຫວຽດນາມ ມີຜົນຜະລິດ ຫຼາຍກວ່າ ໄທ; ແຕ່ການສົ່ງອອກ ຂອງ ໄທ ພັດຫຼາຍກວ່າ ຫວຽດນາມ ເມື່ອສົມທຽບກັບ ສປປ ລາວ ເຫັນວ່າ ລາວເຮົາ ມີການຜະລິດ ຍັງໜ້ອຍ ລາຍລະອຽດ ດັ່ງນີ້:

**ກ. ປະເທດ ສສ ຫວຽດນາມ:** ມີຜົນຜະລິດ ເຂົ້າ ທັງໝົດ ຈຳນວນ 27,800,000 ໂຕນ, ຊຶ່ງມີລາຄາຂາຍ ພຽງແຕ່ 345 ໂດລາ/ໂຕນ ເຂົ້າສານ (ປະເພດເຂົ້າຫັກ 5 %; ຂໍ້ມູນ ໃນເດືອນ 5 ປີ 2017 (ແລະ ສາມາດສົ່ງອອກໄດ້ ປະມານ 5,8 ລ້ານໂຕນເຂົ້າສານ) ຂໍ້ມູນປີ(2016 .

**ຂ. ປະເທດ ໄທ:** ກໍ່ແມ່ນ ປະເທດໜຶ່ງ ທີ່ມີຜົນຜະລິດ ເຂົ້າ ທັງໝົດ ຈຳນວນ 18,600,000 ໂຕນ ແລະ ມີລາຄາຂາຍ 461 ໂດລາ/ໂຕນເຂົ້າສານ (ປະເພດເຂົ້າຫັກ 5%, ຂໍ້ມູນ ໃນເດືອນ 6 ປີ 2017) ແລະ ສາມາດ ສົ່ງອອກ ໄດ້ປະມານ 9,8 ລ້ານກວ່າໂຕນເຂົ້າສານ) ຂໍ້ມູນປີ(2016 .

**ຄ. ປະເທດ ກຳປູເຈຍ:** ມີຜົນຜະລິດເຂົ້າ ທັງໝົດ ຈຳນວນ 4,700,000 ໂຕນ, ລາຄາ 635 ໂດລາ/ໂຕນເຂົ້າສານ (ປະເພດເຂົ້າຫັກ 5%, ຂໍ້ມູນໃນເດືອນ 3 ປີ 2017) ແລະ ສາມາດ ສົ່ງອອກ ໄດ້ປະມານ 212,394 ໂຕນເຂົ້າສານ )ຂໍ້ມູນຮອດເດືອນ(2017/4 .

ບັນຫາ ການຜະລິດ ແລະ ການສົ່ງອອກ ໃນໄລຍະຜ່ານມາ ເຫັນວ່າຄວາມເຂົ້າໃຈ ຂອງ ຊາວກະສິກອນ ໃນການຜະລິດ ເຂົ້າ ຄຸນນະພາບ ເປັນສິນຄ້າ ຍັງບໍ່ທັນເລິກເຊິ່ງ ເຮັດໃຫ້ ການເກັບກ່ຽວ, ການເກັບຮັກສາ ຍັງບໍ່ທັນໄດ້ຕາມມາດຕະຖານ ທີ່ກຳນົດໄວ້ ເຊັ່ນ: ຄວາມຊຸ່ມ, ສິ່ງເຈືອປົນ, ລາຄາ ປຸງແຕ່ງ (ສີ), ລາຄາ ຮົມຢາ, ຂະໜາດເມັດເຂົ້າ, ແລະ ຄວາມອາດສາມາດໃນການແຂ່ງຂັນດ້ານຄຸນນະພາບ ແລະ ລາຄາ ຖ້າທຽບໃສ່ປະເທດ ອ້ອມຂ້າງ ຄື: ປະເທດ ໄປ, ຫວຽດ ແລະ ກຳປູເຈຍ ແມ່ນຫຍັງສູງ ແລະ ແຂ່ງຂັນບໍ່ໄດ້.

## 3. ການກຽມຄວາມພ້ອມ

ຜູ້ທີ່ມີຄວາມຕ້ອງການທີ່ຈະສົ່ງອອກເຂົ້າຄວນມີການກຽມຄວາມພ້ອມດ້ານຕ່າງໆ ເຊັ່ນ ບຸກຄະລາກອນທີ່ຈະມາເຮັດວຽກ ທັງໃນຫ້ອງການ, ໃນໂຮງສີ ແລະ ຂອດການບໍລິຫານ, ເງິນທຶນ, ສະຖານທີ່, ອຸປະກອນ ຕະຫຼອດຮອດວິທີການດຳເນີນງານເພື່ອຄວາມສຳເລັດຂອງທຸລະກິດ ດັ່ງນີ້:

1. **ບຸກຄະລາກອນ** ການຄັດເລືອກບຸກຄະລາກອນທີ່ມີຄວາມສາມາດສະເພາະທາງໃນແຕ່ລະສາຍວຽກທີ່ກ່ຽວຂ້ອງ ເຊັ່ນ ການບໍລິຫານວຽກທົ່ວໄປ, ການຕິດຕໍ່ທຸລະກິດກັບລູກຄ້າໃນຕ່າງປະເທດ, ການກະກຽມເອກະສານທາງການຄ້າ ແລະ ການເງິນ, ການຈັດຫາເຂົ້າ, ການກວດສອບຄຸນນະພາບເຂົ້າ, ການເກັບຮັກສາ, ການຂົນສົ່ງ, ການຈັດຫາລົດ ແລະ ເຮືອຂົນສົ່ງເຂົ້າ ແລະ ອື່ນໆ ເປັນຕົ້ນ.
2. **ເງິນທຶນ** ເປັນປັດໄຈທີ່ສຳຄັນໃນການທີ່ຈະດຳເນີນທຸລະກິດ ຜູ້ທີ່ມີຄວາມຕ້ອງການທີ່ຈະສົ່ງອອກເຂົ້າຕ້ອງມີເງິນໝູນວຽນຫຼາຍພຽງພໍສຳລັບຄ່າໃຊ້ຈ່າຍທຸກດ້ານ ໄດ້ແກ່
   - ຄ່າຊື້ເຂົ້າທີ່ຕ້ອງຈັດຫາໃຫ້ພ້ອມສົ່ງມອບ
   - ຄ່າໃຊ້ຈ່າຍໃນການບໍລິຫານວຽກທົ່ວໄປ ເຊັ່ນ ເງິນເດືອນ, ຄ່າຈ້າງ
   - ຄ່າໃຊ້ຈ່າຍກ່ຽວກັບອາຄານ, ສະຖານທີ່, ສາງເກັບມ້ຽນສິນຄ້າ, ເຄື່ອງມື-ອຸປະກອນ ແລະ ໄຟຟ້າ ແລະ ນ້ຳປະປາ, ອຸປະກອນສື່ສານ ໂທລະສັບ ຫລື ອິນເຕີເນັດ
   - ຄ່າພາຫະນະຂົນຍ້າຍສິນຄ້າຈົນເຖິງການສົ່ງສິນຄ້າລົງເຮືອ ຫຼື ຈົນເຖິງຜູ້ຮັບປາຍທາງ ແລ້ວແຕ່ເງື່ອນໄຂທີ່ຕົກລົງກັນ
   - ຄ່າຊົດໃຊ້ສິນຄ້າຫາກມີເສຍຫາຍເກີດຂຶ້ນ
   - ຄ່າໃຊ້ຈ່າຍອື່ນໆ
3. **ວັດຖຸດິບ** ຄື ເຂົ້າທີ່ຈະສົ່ງອອກນັ້ນ ຜູ້ສົ່ງອອກຈະຕ້ອງວາງແຜນການຈັດຊື້ໃຫ້ສອດຄ້ອງກັບຄຳສັ່ງຊື້ທີ່ໄດ້ຮັບຈາກຕ່າງປະເທດ ໂດຍພິຈາລະນາຈາກ
   - ຊະນິດ
   - ປະລິມານ ແລະ ຄຸນນະພາບຂອງເຂົ້າທີ່ຕ້ອງການຈາກຜູ້ຊື້
   - ແຫຼ່ງຜະລິດ, ຜູ້ຂາຍ
   - ຜູ້ຊື້ (ລູກຄ້າ)
   - ລາຄາ, ເງື່ອນໄຂການສົ່ງມອບ ແລະ ໄລຍະເວລາຂົນສົ່ງ
   - ອື່ນໆ
4. **ການດຳເນີນການ** ເຊິ່ງເປັນສ່ວນສຳຄັນໃນການປະກອບການນັ້ນ ຜູ້ສົ່ງອອກຈະຕ້ອງພິຈາລະນາ ເຖິງຂັ້ນຕອນດຳເນີນການຕັ້ງແຕ່ການວາງແຜນໄປຈົນເຖິງການສົ່ງອອກ ໄດ້ແກ່
   - ການວາງແຜນຂະບວນການສົ່ງອອກ
   - ການສຶກສາຕະຫຼາດ ທັງຄູ່ຄ້າ ແລະ ຄູ່ແຂ່ງ
   - ການຕິດຕໍ່ຜູ້ຊື້
   - ການເຈລະຈາຊື້-ຂາຍ
   - ການເຮັດສັນຍາ, ຂໍ້ຕົກລົງ, ການກວດສອບເອກະສານ L/C
   - ການປັບປຸງເຂົ້າ

- ການປະສານກັບຜູ້ກວດສອບຄຸນນະພາບ ແລະ ຜູ້ຮັບຂົນສົ່ງ
- ການເຄື່ອນຍ້າຍສິນຄ້າ
- ການປະສານງານກັບສ່ວນພາກລັດຖະບານທີ່ກ່ຽວຂ້ອງ ເຊັ່ນ ກົມພາສີ, ກົມສົ່ງອອກນຳເຂົ້າ..
- ອື່ນໆ

# 4. ການສົ່ງເສີມຄຸນນະພາບເຂົ້າ

ກົມສົ່ງເສີມ ການຄ້າ ກະຊວງອຸດສາຫະກຳ ແລະ ການຄ້າ ,ຈະໄດ້ດຳເນີນ "ໂຄງການ ສົ່ງເສີມການຜະລິດເຂົ້າ ໃຫ້ໄດ້ມາດຕະຖານ" ເພື່ອພັກດັນການຜະລິດເຂົ້າ ໃຫ້ໄດ້ຄຸນນະພາບ ແລະ ໃຫ້ເປັນໄປຕາມກົນໄກຕະຫຼາດ ກໍ່ຄືໃຫ້ໄດ້ຕາມຄວາມຕ້ອງການຂອງລູກຄ້າ ເປັນຕົ້ນຜູ້ທີ່ຊື້ຈາກທັງພາຍໃນ ແລະ ຕ່າງປະເທດ .ເມື່ອເວົ້າເຖິງຄຸນນະພາບເຂົ້າລາວ ຍັງເປັນທີ່ບໍ່ທັນໄດ້ກຳນົດຊັດເຈນ ແລະ ຈັດຕັ້ງປະຕິບັດການສົ່ງເສີມຢ່າງເປັນລະບົບທີ່ແນ່ນອນ .ເມື່ອເວົ້າເຂົ້າດີມີຄຸນນະພາບ ສິ່ງນີ້ຍັງເປັນສິ່ງທີ່ບໍ່ທັນໄດ້ພິສູດໄດ້ .ຕ້ອງໄດ້ມີການກຳນົດມາດຕະຖານ ແລະ ການຮັບຮອງຢ່າງເປັນລະບົບ .ໂຄງການຈະເລີ່ມຕົ້ນຈາກການກຳນົດມາດຕະຖານຄຸນນະພາບ ,ລະບົບການສົ່ງເສີມການຜະລິດເຂົ້າຄຸນນະພາບ ,ການຮັບຮອງເຂົ້າມາດຕະຖານດ້ວຍເຄື່ອງໝາຍທີ່ແນ່ນອນເພື່ອຢັ້ງຢືນຄຸນນະພາບ .ເພື່ອສ້າງໃຫ້ມີກົນໄກສົ່ງເສີມຄຸນນະພາບເຂົ້າໃຫ້ໄດ້ຕາມຈຸດປະສົງຂອງລັດຖະບານ, ກົມສົ່ງເສີມການຄ້າຈິ່ງໄດ້ຍົກຕົວຢ່າງມາດຕະຖານເຂົ້າ ຂອງປະເທດໄທ ແລະ ມາດຕະຖານເຂົ້າ ຂອງ ສປປ ລາວ ຈຳນວນໜຶ່ງມາແນະນຳໃນປື້ມຄູ່ມືນີ້ ເພື່ອເປັນຂໍ້ມູນບາງສ່ວນ ໃຫ້ຜູອ່ານ ແລະ ສາມາດ ນຳເອົາໄປນຳໃຊ້ ແລະ ປັບປຸງຕໍ່ຍອດປື້ມຄູ່ມື ໃຫ້ດີຂຶ້ນໄປ ເພື່ອປະໂຫຍດຂອງຜູ້ຊົມໃຊ້ ແລະ ເປັນຂໍ້ມູນຂ່າວສານໃນອານາຄົດ.

### 4.1. ການສົ່ງເສີມ ແລະ ປັບປຸງມາດຕະຖານເຂົ້າ:

ການປະສານສົມທົບຂອງພາກສ່ວນກ່ຽວຂ້ອງຂອງພາກລັດ ໃນການວາງແຜນຊຸກຍູ້ສົ່ງເສີມຢ່າງກົມ ກຽວແມ່ນມີຄວາມ ສຳຄັນທີ່ສຸດ ເພື່ອສຶກສາ ແຕ່ລະຂັ້ນຂອດ ໃນລະບົບຕ່ອງໂສ້ມູນຄ່າເພີ່ມຂອງເຂົ້າ ຊຶ່ງຈະຕ້ອງໄດ້ວາງແນວທາງການ ບໍລິຫານຢ່າງເປັນລະບົບຕ່ອງໂສ້ ເປັນຕົ້ນ

1). ຂະແໜງການ ກະສິກຳ- ປ່າໄມ້ ຊ່ວຍເຫຼືອດ້ານ ວິຊາການ ເພື່ອຜະລິດ ເຂົ້າທີ່ມີຄຸນນະພາບ ແລະ ໄດ້ມາດຕະຖານ ດ້ວຍການໃຫ້ຄຳແນະນຳ ດ້ານວິຊາການ ແກ່ຊາວນາ ໃນການວາງແຜນ, ຄຸ້ມຄອງ-ບໍລິຫານແນວພັນ, ປູກ, ບົວລະບັດຮັກສາ, ເກັບກ່ຽວ ແລະ ຕາກ/ອົບແຫ້ງ ແລະ ນຳໃຊ້ເຕັກໂນໂລຊີຫຼັງການ ເກັບກ່ຽວ ເຂົ້າຊ່ວຍ ກ່ອນເຂົ້າຫາຂອດສີ ຫຼື ເອີ້ນວ່າ ລະບົບ ກະສິກຳທີ່ດີ (Good Agriculture Practice (GAP));

2). ຂະແໜງການອຸດສາຫະກຳ ແລະ ການຄ້າ ຊ່ວຍດ້ານວິຊາການ ເພື່ອປັບປຸງ ແລະ ເພີ່ມ ຜະລິດຕະພາບລະບົບໂຮງສີເຂົ້າ ໂດຍນຳໃຊ້ ລະບົບການບໍລິຫານ ຄຸນະພາບ (ISO,TQM,QCC), ລະບົບການຜະ ລິດທີ່ດີ (Good Manufacturing Practice (GMP)) ທີ່ປະກອບດ້ວຍ ລະບົບ ການເກັບຊື້ເຂົ້າເປືອກ, ການຂົນສົ່ງ, ການເກັບມ້ຽນ/ຮັກສາ ແລະ ອານາໄມເຂົ້າເປືອກ, ການສີເຂົ້າ, ການແຍກສິ່ງເຈືອປົນ, ການຄັດເກຣດເຂົ້າ, ການບັນຈຸຫຸ້ມຫໍ່, ການສ້າງເອກະສານກຳກັບການຄວບຄຸມຄຸນນະພາບ, ການບໍລິຫານໂຮງສີເຂົ້າ ທີ່ຖືກວິທີ ແລະ ພັດທະນາກາ ໝາຍໂຮງສີເຂົ້າສະອາດ, ເຄື່ອງໝາຍຜະລິດຕະພັນເຂົ້າ ແລະ ການປັບປຸງສະຖານທີ່ໂຮງສີເຂົ້າ/ຈັດມາດຕະຖານໂຮງ ສີເຂົ້າ, ການກຳນົດລະບົບການສົ່ງອອກ ເຂົ້າທີ່ສະດວກ ແລະ ງ່າຍດາຍ (ໂດຍສະເພາະດ້ານເອກະສານ ແລະ ກົນໄກ ກວດກາການສົ່ງອອກ), ການຊ່ວຍຊອກຫາ ແລະ ເຈລະຈາຕະຫຼາດເຂົ້າ

ແລະ ການສົ່ງເສີມການສ້າງກຸ່ມ/ສຳພັນທຸລະ ກິດ ໃຫ້ເປັນ ລະບົບ ແລະ ຕ່ອງໂສ້ທີ່ເກາະກ່າຍກັນ ເຊັ່ນ ກຸ່ມຊາວນາ, ກຸ່ມເກັບຊື້ເຂົ້າ, ກຸ່ມໂຮງສີ ແລະ ກຸ່ມຜູ້ສົ່ງອອກ ແລະ

3). ຂະແໜງການເງິນ ແລະ ທະນາຄານ ຊ່ວຍດ້ານການສ້າງ/ປັບປຸງ ກົນໄກການເຂົ້າເຖິງແຫຼ່ງທຶນ ແລະ ນະໂຍບາຍດ້ານສິນເຊື່ອ ແກ່ຊາວນາ ແລະ ຜູ້ຜະລິດເຂົ້າສານ (ໂຮງສີ).

### 4.2 ມາດຖານຄຸນລັກສະນາເຂົ້າ ລາວ, ຈີນ ແລະ ໄທ

ມາດຕະຖານຄຸນລັກສະນະເຂົ້າ ຂອງແຕ່ລະປະເທດ ຈະມີຄວາມແຕກຕ່າງກັນ, ບາງປະເທດໄດ້ກຳນົດຕາມມາດຖານຄວາມອາດສາມາດ ແລະ ແນວພັນທີ່ໂດດເດັ່ນ ແລະ ກຳນົດເອົາເປັນມາດຖານ, ຄຸນນະພາບ ແລະ ຄຸນລັກສະນະຂອງເຂົ້າ ຂອງປະເທດຕົນເອງ. ສຳລັບປະເທດ ລາວ ແມ່ນໄດ້ຍົກກຳນົດມາດຕະຖານເຂົ້າລາວ ໃນປີ 2006 ໃຫ້ເປັນຂໍ້ມູນດັ່ງຕາຕະລາງ ຂ້າງລຸ່ມນີ້:

**ມາດຕະຖານຄຸນລັກສະນະເຂົ້າສານລາວ ມລ 64 – 2006**

| ລ/ດ | ລັກສະນະ<br>ຄິດໄລ່ເປັນສ່ວນຮ້ອຍ | ລັກສະນະທີ່ຕ້ອງການໃນແຕ່ລະປະເພດ | | |
|---|---|---|---|---|
| | | ເຂົ້າປະເພດ 1 | ເຂົ້າປະເພດ 2 | ເຂົ້າປະເພດ 3 |
| 1 | ອັດຕາສ່ວນຄວາມຊຸ່ມສູງສຸດ (Moisture) | 14 | 14 | 14 |
| 2 | ອັດຕາສ່ວນ ຂອງສິ່ງເຈືອປົນຈາກວັດຖຸອື່ນ (Foreign matter) | 0 | 0.1 | 0.2 |
| 3 | ອັດຕາສ່ວນເຂົ້າສານເມັດເຕັມບໍ່ຕໍ່າກວ່າ (Head Rice Milled) | 60 | 55 | 50 |
| 4 | ອັດຕາສ່ວນເມັດເຂົ້າຫັກໃຫຍ່ (Broken grain) | 35 | 30 | 27 |
| 5 | ອັດຕາສ່ວນເມັດເຂົ້າຫັກນ້ອຍ (Broken grain) | <5 | <15 | <25 |
| 6 | ອັດຕາສ່ວນຂອງການເຈືອປົນຈາກເຂົ້າຊະນິດອື່ນ (Type admixture) | 0 | 2 | 3 |
| 7 | ອັດຕາສ່ວນຂອງການເຈືອປົນຈາກເມັດເຂົ້າທີ່ຖືກທຳລາຍ (Damaged grain) | 0 | 1 | 3 |
| 8 | ອັດຕາສ່ວນຂອງການເຈືອປົນຈາກເຂົ້າເປືອກ (Paddy seed) ເມັດ/ກິໂລກລາມ | 1 | 5 | 10 |
| | - ເຂົ້າຕ້ອງສະອາດ, ມີສີເດີມຕາມຄຸນລັກສະນະສະເພາະຂອງເຂົ້າ ແລະ ປາສະຈາກສິ່ງເຈືອປົນອື່ນໆ ຫຼືຖືກທຳລາຍຕ່າງໆ.<br>- ເຂົ້າຕ້ອງປາສະຈາກການຕົກຄ້າງຂອງສານເຄມີ. | | | |

**ມາດຕະຖານເຂົ້າໜຽວ ສປ ຈີນ GB 1354-2009**

| ປະເພດເຂົ້າສານ | | | ປະເພດ ໜຶ່ງ | ປະເພດ ສອງ | ປະເພດ ສາມ |
|---|---|---|---|---|---|
| ລະດັບການປຸງແຕ່ງ | | | ທົດສອບປຽບທຽບ | | |
| ເຂົ້າເມັດຫັກ | ລວມ (%) | ≤ | 5.0 | 10.0 | 15.0 |
| | ເຂົ້າຫັກນ້ອຍ (%) | ≤ | 0.5 | 1.0 | 1.5 |
| ເມັດເຂົ້າທີ່ບໍ່ສົມບູນ (%) | | ≤ | 3.0 | | 4.0 |
| ຄະແນນລົດຊາດ | | ≥ | 75 | | |
| ອັດຕາທາດແປ້ງ (%) | | ≤ | 2.0 | | |
| ສິ່ງເຈືອປົນ | ລວມ (%) | ≤ | 0.25 | | 0.3 |
| | ແປ້ງເຂົ້າ (%) | ≤ | 0.15 | | 0.2 |
| | ແຮ່ທາດ (%) | ≤ | 0.02 | | |
| | ເຂົ້າແກບ (ເມັດ/kg) | ≤ | 3 | | 5 |
| | ເຂົ້າເປືອກ (ເມັດ/kg) | ≤ | 4 | | 6 |
| ຄວາມຊຸ່ມ (%) | | ≤ | 14.5 | | |
| ເຂົ້າເມັດເຫຼືອງ (%) | | ≤ | 1.0 | | |
| ສິ່ງປົນເປື້ອນ (%) | | ≤ | 5.0 | | |
| ສີ, ກິ່ນ | | | ບໍ່ມີສີຜິດປົກກະຕິ, ບໍ່ມີກິ່ນ | | |

**ມາດຕະຖານ ແລະ ຄຸນນະພາບ ເຂົ້າຫອມມະລິ ປະເທດ ໄທ**

ເຂົ້າທີ່ມີຄຸນນະພາບ ແມ່ນເລີ່ມຕົ້ນນັບແຕ່ແນວພັນ ແລະ ຂະບວນການຜະລິດກະສິກຳເທດປະສຳລັບ . ສະອາດກຳລິຫຼັກການ ກະກຳນົດໄດ້ລີ ມະເຂົ້າຫອມເພາະສະໂດຍ ,ໄທ(Good Agricultural Practice) ເປັນຫຼັກການລວມໃນການຜະລິດເຂົ້າ (ເຂົ້າຫອມມະລິ) ເຊິ່ງໄດ້ກຳນົດທຸກໆຂັ້ນຕອນການຜະລິດ ໃຫ້ນອນໃນລະບົບດຽວ, ມີຂະບວນການກວດກາ ແລະ ຮັບຮອງທີ່ເປັນເອກະພາບດຽວກັນ ໃນແຕ່ລະຂະບວນການຜະລິດ, ຂະບວນການ ແລະ ຂັ້ນຕອນການສົ່ງເສີມຄຸນນະພາບເຂົ້າແມ່ນປະກອບມີ ດັ່ງນີ້:

**1. ແຫຼ່ງນໍ້າ**

ຂໍ້ກຳນົດການເກີດໃຫ້ກໍ່ລ້ອມ ທີ່ແວດສະພາບບໍ່ມີທີ່ແຫຼ່ງນໍ້າຈາກໄດ້ປູກຝັງ ຕ້ອງການໃນເຂົ້າໃຊ້ທີ່ນໍ້າ : .ອັນຕະລາຍເປັນທີ່ເປື້ອນປົນ

ການປະເມີນ :ກວດເບິ່ງສະພາບແວດລ້ອມການຜະລິດຖ້າຢູ່ໃນສະຖານະການມີຄວາມສ່ຽງຕິດສິ່ງເປັນອັນຕະລາຍ, ຕ້ອງສິ່ງຕົວຢ່າງ ເພື່ອຕິດຕາມ ແລະ ການວິເຄາະຄຸນນະພາບນໍ້າ

**2. ເຂດທີ່ໃຊ້ປູກ**

ຂໍ້ກຳນົດ :ຕ້ອງເປັນພື້ນທີ່ບໍ່ມີສິ່ງຂອງ ຫຼື ສິ່ງໃດ ເປັນອັນຕະລາຍໃນການຜະລິດ ຫຼືສິ່ງປົນເປື້ອນໃນເຂົ້າ .

ການປະເມີນ :ກວດເບິ່ງສະພາບແວດລ້ອມຖ້າມັນມີຢູ່ ໃນສະຖານະການທີ່ມີຄວາມສ່ຽງ, ຕ້ອງສິ່ງຕໍ່ຢ່າງ ເພື່ອຕິດຕາມ ແລະ ການວິເຄາະຄຸນນະພາບຂອງດິນ

**3. ການໃຊ້ວັດຖຸອັນຕະລາຍທາງການກະເສດ**

ຂໍ້ກຳນົດ 1: ຜູ້ເຮັດວຽກຕ້ອງມີຄວາມຮູ້ພື້ນຖານ ຮູ້ນຳໃຊ້ສານອັນຕະລາຍທາງດ້ານກະສິກຳຢ່າງ ຖືກຕ້ອງແລະ ປອດໄພ

ການປະເມີນ : 1 ປະເມີນຄວາມຮູ້ຫຼືຄວາມເຂົ້າໃຈ, ກວດສອບເບິ່ງການປະຕິບັດຫຼືຫຼັກຖານສະແດງ ຜົນແລະ ມີ , ການຝຶກອົບຮົມ ແລະ ບັນທຶກຂໍ້ມູນທີ່ນຳໃຊ້ວັດຖຸ ອັນຕະລາຍຕິດພັນກັບການຜະລິດກະສິກຳ

ຂໍ້ກຳນົດ 2: ໃຊ້ຕາມຄຳແນະນຳຂອງກົມອາຫານ ຫຼືກະຊວງກະສິກຳ ແລະ ຄຳແນະນຳອື່ນໆ ກ່ຽວ ກັບປ້າຍຊື່ທີ່ ຖືກຕ້ອງກັບກົມການກະເສດ, ກະຊວງກະສິກຳ ແລະ ການຮ່ວມມື

ການປະເມີນ :2 ບ່ອນທີ່ມີຂໍ້ມູນຫຼືສາເຫດທີ່ສົມເຫດສົມຜົນ ການນຳໃຊ້ອຸປະກອນອັນຕະລາຍທີ່ສົງ ໃສວ່າ ການກະສິກຳບໍ່ໄດ້ຕອບຄຳແນະນຳແບບສຸ່ມ ເຂົ້າເພື່ອວິເຄາະອາຫານທີ່ເປັນສານພິດ.

ຂໍ້ກຳນົດ :3 ຫ້າມໃຊ້ສານອັນຕະລາຍທີ່ກຳນົດໃນການລົງທະບຽນ. ສານອັນຕະລາຍກະສິກຳທີ່ຖືກ ຫ້າມແລະ ກໍລະນີທີ່ຜະລິດສຳລັບການສົ່ງອອກ ຢ່າໃຊ້ສານອັນຕະລາຍ. ການກະສິກຳໃນປະເທດຄູ່ຮ່ວມງານ ແມ່ນຖືກຫ້າມ.

ການປະເມີນກວດສອບສະຖານທີ່ເກັບຮັກສາວັດຖຸ ອັນຕະລາຍຂອງການກະສິກຳ :3

**4. ການຈັດການຄຸນນະພາບໃນກະບວນການພະລິດກ່ອນການເກັບກ່ຽວ**

**4.1 ການຜະລິດເພື່ອໃຫ້ໄດ້ເຂົ້າຖືກຕ້ອງຕາມແນວພັນ**

ບໍ່ມີແນວພັນເຂົ້າອື່ນ ໂດຍນ້ຳຫນັກ 5% ແລະ ເຂົ້າສີນ້ຳຕານບໍ່ມີສີແດງເກີນໄປ ນ້ຳຫນັກບໍ່ເກີນ 1% ຈາກປະລິມານທັງໝົດ

ຂໍ້ກຳນົດ :1 ການຄັດເລືອກເມັດທີ່ມີຄຸນນະພາບກົງກັນຂ້າມກັບສາຍພັນແລະມາຈາກແຫຼ່ງແນວພັນທີ່ ເຊື່ອຖືໄດ້

ການປະເມີນ :1ກວດເບິ່ງເອກະສານຢັ້ງຢືນແກ່ນ ຂໍ້ມູນຕົ້ນກຳເນີດຫຼືບັນທຶກ ຂອງແກ່ນ

ຂໍ້ກຳນົດ : 2 ການປູກແລະການຄຸ້ມຄອງດູແລ ເພື່ອຫຼຸດຜ່ອນຈຳນວນເຂົ້າແລະແນວພັນອື່ນໆ ແລະຂໍ້ ມູນທີ່ໄດ້ບັນທຶກ

ການປະເມີນ : 2 ການບັນທຶກການກະກຽມດິນ ແລະການລົບລ້າງແນວພັນເຂົ້າອື່ນໆ

ຂໍ້ກຳນົດ :3ຈຳນວນແນວພັນເຂົ້າອື່ນໆ ເພື່ອບໍ່ໃຫ້ເກີນ 2%

ການປະເມີນ :3 ເກັບກຳຕົວຢ່າງກວດສອບຈາກຜົນຜະລິດພາກສະໜາມ ວ່າມີພັນອື່ນເຈື່ອປົນມາຫຼືບໍ່ ແລະ ໃນກໍລະນີມີຄວາມສົງໃສຫຼັງຈາກກວດສອບ ໃຫ້ມີການກວດສອບສະເພາະ ໃນການຄັດເລືອກແນວພັນເຂົ້າເພື່ອວິເຄາະ

### 4.2 ການປ້ອງກັນສັດຕູພືດແລະພະຍາດທີ່ຈະສ້າງຄວາມເສຍຫາຍແກ່ຜະລິດຕະພັນ

ຂໍ້ກຳນົດ :1ຄົ້ນຫາການທຳລາຍສັດຕູພືດ ທີ່ມີຜົນກະທົບຕໍ່ເຂົ້າ

ການປະເມີນ :1ບັນທຶກການສຳຫຼວດຂໍ້ມູນ ການຄວບຄຸມສັດຕູພືດ ແລະ ການຄຸ້ມຄອງ

ຂໍ້ກຳນົດ :2 ມີການປ້ອງກັນການນຳໃຊ້ຢາປາບສັດຕູພືດ ແລະ ຫຍ້າມີປະສິດທິຜົນ ໂດຍຮູບແບບກຳນົດຢ່າງຖືກຕ້ອງໂດຍກະຊວງ.

ການປະເມີນ :2 ກວດສອບ ການທຳລາຍ ສັດຕູພືດໃນທົ່ງນາ ລວມທັງຫຍ້າໃນທົ່ງນາໃນກໍລະນີສົງໃສ

## 5. ການເກັບກ່ຽວແລະການປະຕິບັດຫຼັງການເກັບກ່ຽວ

### 5.1 ການຈັດການເພື່ອໃຫ້ໄດ້ເຂົ້າທີ່ມີຄຸນນະພາບດີ

ຂໍ້ກຳນົດ :1 ການເກັບກ່ຽວໃນເວລາທີ່ຖືກຕ້ອງເພື່ອໃຫ້ໄດ້ ຄຸນນະພາບຕາມເມັດພືດຢ່າງເຕັມທີ່ແລະບໍ່ມີເມັດເຂົ້າມາດຕະຖານຂັ້ນຕ່ຳເຈືອປົນ ຕາມທີ່ກຳຫນົດໂດຍມາດຕະຖານ ເຂົ້າຫອມມະລິໄທ ໃນເວລາຫຼັງເກັບກ່ຽວ ອອກດອກ ຫຼືຫຼັງຈາກວັນ 35 ຫາ 25 ອາຍຸເຂົ້າມີຮ່ອງ .ເຂົ້າແມ່ນຢູ່ໃນໄລຍະສຸກເຫັນເປັນສີເຫຼືອງທີ່ປຸງແຕ່ງ ບໍ່ຫນ້ອຍກວ່າສາມສ່ວນສີ່

ການປະເມີນ :1 ກວດສອບບັນທຶກການເກັບກ່ຽວ ແລະ ການນວດເຂົ້າ ;ກໍລະນີຈຳເປັນໃຫ້ກວດສອບຄືນການເກັບກ່ຽວ ,ການນວດເຂົ້າ ແລະ/ຫຼື ການພິດຈາລະນາຜົນຜະລິດກວດໄປາເຂົ້ເອົານຳໃຫ້ໃສນີສົງກໍລະ ; ນະພຄຸນສອບາບເຂົ້າເປືອກ

### 5.2 ການເກັບກ່ຽວ ແລະ ການນວດເຂົ້າ

ຂໍ້ກຳນົດ :1 ເຄື່ອງມື, ເຄື່ອງໃຊ້ແລະເຄື່ອງໃຊ້ ການຫຸ້ມຫໍ່ທີ່ໃຊ້ສຳລັບການຂຸດຄົ້ນແລະການຂັດຂືນ. ບໍ່ຕ້ອງມີຜົນກະທົບຕໍ່ຄຸນນະພາບ. ຂອງຜະລິດຕະພັນແລະບໍ່ໄດ້ເຮັດໃຫ້ເກີດການໃດໆ ຂອງແນວພັນເຂົ້າ

ການປະເມີນ :1 ອຸປະກອນການກວດສອບ ແລະ ເຄື່ອງມືໃຊ້ບັນຈຸເຂົ້າ

ຂໍ້ກຳນົດ :2 ວິທີການຂຸດຄົ້ນບໍ່ຄວນເຮັດໃຫ້ເກີດຂຶ້ນ ຜົນກະທົບຕໍ່ຄຸນນະພາບຂອງຜະລິດຕະພັນແລະບໍ່ຜະລິດແນວພັນອື່ນໆຂອງເຂົ້າ .

ການປະເມີນ :2 ກວດບັນທຶກຂໍ້ມູນການເກັບກ່ຽວ ແລະ ການນວດເຂົ້າ

ຂໍ້ກຳນົດ :3 ນວດດ້ວຍເຄື່ອງຈັກຫຼືຮ້ານຄ້າ. ກ່ຽວກັບການສົມທົບຖ້າການເກັບກ່ຽວ . ຊະນິດອື່ນຕ້ອງຖືກລຶບລ້າງ. ອາໃສຢູ່ໃນເຄື່ອງອອກ

ການປະເມີນ :3ກວດບັນທຶກການເກັບກ່ຽວ ແລະ ການນວດເຂົ້າ

**6ຊື່ນຄວາມນລິດແລະ ກາເປືອກ ເຂົ້າຂອງຊື່ນຄວາມ 3.**

ຂໍ້ກຳນົດ :1ຖ້າບໍ່ໄດ້ຂາຍເປັນເຂົ້າເປືອກສົດ ໃຫ້ເລີ່ມຕົ້ນສິດຊຸ່ມຊື່ນໃນ 24 ຊົ່ວໂມງຫຼັງຈາກການເກັບກູ້

ການປະເມີນ :1 ກວດບັນທຶກຂໍ້ມູນການລົດຄວາມຊື່ນ ເຂົ້າເປືອກ

ຂໍ້ກຳນົດ :2 ວິທີການລົດຄວາມຊື່ນຕ້ອງບໍ່ເຮັດໃຫ້ເມັດເຂົ້າເປືອກເກີດການແຕກຫັກ ເພື່ອເຮັດໃຫ້ສາມາດສີເຂົ້າໄດ້ເຕັມເມັດ ແລະ ຕົ້ນເຂົ້າຕໍ່າກ່ວາຂໍ້ກຳນົດໃນມາດຕະຖານສິນຄ້າເຂົ້າຫອມມະລິໄທ

ການປະເມີນ :ກວດປະຫວັດຂໍ້ມູນການລົດຄວາມຊື້ນ ແລະ ຫາກກໍລະນີມີຂໍ້ສົງໃສໃຫ້ສຸ່ມເຂົ້າເປືອກໄປກວດຄຸນນະພາບການສີເຂົ້າເປືອກ

ຂໍ້ກຳນົດ :3ເມັດເຂົ້າເປືອກແຫ້ງສຳລັບການຊື້ຂາຍ ຕ້ອງມີຄວາມຊື່ນບໍ່ເກີນ 15% ແລະ ສຳລັບການເກັບຮັກສາຕ້ອງບໍ່ເກີນ 14%

ການປະເມີນ :3 ກວດສອບບັນທຶກຂໍ້ມູນການລົດຄວາມຊື່ນເຂົ້າເປືອກ ແລະ ຫາກກໍລະນີມີຂໍ້ສົງໃສໃຫ້ເກັບຕົວຢ່າງເຂົ້າເປືອກໄປກວດສອບວັດຄວາມຊື່ນ

**7. ການບັນຍາຍ ການຮັກສາ ແລະການລວບລວມພະລິດຜົນເຂົ້າເປືອກ**

ຂໍ້ກຳນົດ :1 ອຸປະກອນບັນຈຸ ແລະ ເຄື່ອງທີ່ໃຊ້ໃນການຂົນຍ້າຍ ແລະ ການເກັບຮັກສາຕ້ອງສະອາດສາມາດປ້ອງກັນຜົນກະທົບ ຕໍ່ຄຸນນະພາບຂອງເຂົ້າເປືອກ ແລະ ປ້ອງກັນການປົນເປື້ອນຈາກອັນຕະລາຍ ແລະ ສິ່ງແປກປອມທີ່ມີຜົນຕໍ່ກັບຄວາມປອດໄພ ໃນການບໍລິໂພກ ລວມທັງບໍ່ກໍ່ໃຫ້ເກີດການປົນຂອງເຂົ້າພັນອື່ນໆ.

ການປະເມີນ :1 ກວດສອບອຸປະກອນ ທີ່ນຳໃຊ້ບັນຈຸ ແລະ ສິ່ງຂອງທີ່ໃຊ້ໃນການຂົນ້າຍ ແລະ ການເກັບຮັກສາ

ຂໍ້ກຳນົດ :2 ການເກັບແລະສະຖານທີ່ ການເກັບຮັກສາຕ້ອງມີສຸຂະອະນາໄມ ແລະມີການລະບາຍອາກາດທີ່ດີ. ປ້ອງກັນການປົນເປື້ອນຈາກອັນຕະລາຍແລະ ຕ້ອງມີຄວາມປອດໄພໃນການບໍລິໂພກແລະປົກປ້ອງການຜະສົມແນວພັນເຂົ້າອື່ນໆ.

ການປະເມີນ :2 ກວດເບິ່ງສະຖານທີ່ ແລະ ຂໍ້ມູນການເກັບຮັກສາແລະການເກັບຮັກສາ

ຂໍ້ກຳນົດ :3 ວິທີການຂົນຍ້າຍ, ເກັບຮັກສາ ຕ້ອງບໍ່ເຮັດໃຫ້ເຂົ້າເປືອກເສຍຫາຍແລະເຮັດໃຫ້ເກີດ ແນວພັນເຂົ້າອື່ນມາປະສົມ ແລະ ກໍລະນີເຂົ້າເປືອກມີຫຼາຍ ແນວພັນ ຈະຕ້ອງໄດ້ຮັບການຄຸ້ມຄອງ ເພື່ອບໍ່ໃຫ້ແນວພັນເຂົ້າປະສົມກັນ .

ການປະເມີນ :3 ກວດສອບການບັນທຶກຂໍ້ມູນ ໃນເວລາບັນຈຸ ,ການຂົນຍ້າຍ ແລະ ການເກັບຮັກສາເຂົ້າເປືອກ

ຂໍ້ກຳນົດ :4 ເຂົ້າເປືອກທີ່ຢູ່ລະຫວ່າງການເກັບຮັກສາ ແລະ ການຂົນຍ້າຍ ຕ້ອງມີການລະບຸຂໍ້ມູນລະຫັດ ຫຼື ເຄື່ອງໝາຍ ໃຫ້ສາມາດບົ່ງບອກທີ່ມາຂອງເຂົ້າເປືອກ ໄດ້

ການປະເມີນ ເປືອກເຂົ້າຂອງມາແຫຼ່ງທີ່ແດງສະທີ່ມູນຂໍ້ບັນທຶກເຄື່ອງໝາຍ ຫຼື ບົດປະຫວັດສອບກວດ :

### 8. ການບັນທຶກ ແລະ ການຈັດເກັບຂໍ້ມູນ

ຂໍ້ກຳນົດ :ຂໍ້ມູນຕ້ອງໄດ້ຮັບການບັນທຶກເພື່ອໃຫ້ສາມາດເຮັດການປະເມີນ ແລະ ການຕິດຕາມໄດ້

5.3 ແຫຼ່ງທີ່ມາຂອງເມັດພັນ

5.4 ການສະໜອງນ້ຳ

5.5 ການກະກຽມດິນ

5.6 ການລຶບລ້າງແນວພັນເຂົ້າອື່ນ.

5.7 ການສຳຫຼວດພະຍາດສັດຕູພືດ ແລະ ການຄຸ້ມຄອງ

5.8 ການນຳໃຊ້ເຄື່ອງມືອັດຕະລາຍ ເຂົ້າໃນການຜະລິດ

5.9 ການເກັບກ່ຽວ ແລະ ການກວດສອບ .

5.10 ການຫຼຸດຄວາມຊຸ່ມເຂົ້າເປືອກ

5.11 ການຫຸ້ມຫໍ່ແລະການເກັບຮັກສາເມັດ

5.12 ແຫຼ່ງຂໍ້ມູນແລະການຈັດຈຳໜ່າຍເຂົ້າເປືອກ

ການປະເມີນ: ກວດສອບບັນທຶກຂໍ້ມູນ

ໃນບັນດາຂັ້ນຕອນດັ່ງກ່າວ, ທີມງານວິຊາການ ໃນການກວດສອບ ໄດ້ມີກົດເກນ ໃນການກວດສອບເພື່ອໃຫ້ແນ່ໃຈວ່າເຂົ້າໄດ້ມາດຖານ ແລະ ມີຄຸນນະພາບທີ່ໄດ້ກຳນົດໄວ້.

## *ມາດຕະຖານ ແລະ ກົດລະບຽບໃນການສົ່ງອອກ ຂອງໄທ*

**ມາດຕະຖານເຂົ້າຂາວ**

| **ຊະນິດເຂົ້າ** | **ລະດັບການສີເຂົ້າ** |  |
|---|---|---|
| ເຂົ້າຂາວ 100% ຊັ້ນ 1 | ສີດີພິເສດ | |
| ເຂົ້າຂາວ %100ຊັ້ນ 2 | ສີດີພິເສດ | |
| ເຂົ້າຂາວ %100ຊັ້ນ 3 | ສີດີພິເສດ | |
| ເຂົ້າຂາວ %5 | ສີດີ | |
| ເຂົ້າຂາວ %10 | ສີດີ | |
| ເຂົ້າຂາວ %15 | ສີດີປານກາງ | |
| ເຂົ້າຂາວ %25 ເລີດ | ສີດີປານກາງ | |
| ເຂົ້າຂາວ %25 | ສີທຳມະດາແຕ່ບໍ່ເກີນສີດີປານກາງ | |
| ເຂົ້າຂາວ %35 | ສີທຳມະດາແຕ່ບໍ່ເກີນສີດີປານກາງ | |
| ເຂົ້າຂາວ %45 | ສີທຳມະດາແຕ່ບໍ່ເກີນສີດີປານກາງ | |
| ເຂົ້າຂາວຫັກ A1 ເລີດພິເສດ | - | |
| ເຂົ້າຂາວຫັກ A 1ເລີດ | - | |

**ມາດຖານເຂົ້າກ້ອງ**

| ຊະນິດເຂົ້າ | ລະດັບການສີເຂົ້າ | |
|---|---|---|
| ເຂົ້າກ້ອງ %100ຊັ້ນ 1 | - |  |
| ເຂົ້າກ້ອງ %100ຊັ້ນ 2 | - | |
| ເຂົ້າກ້ອງ %100ຊັ້ນ 3 | - | |
| ເຂົ້າກ້ອງ %5 | - | |
| ເຂົ້າກ້ອງ %10 | - | |
| ເຂົ້າກ້ອງ 1%5 | - | |

**ມາດຖານເຂົ້າໜຽວຂາວ**

| ຊະນິດເຂົ້າ | ລະດັບການສີເຂົ້າ | |
|---|---|---|
| ເຂົ້າໜຽວຂາວ 10% | ສີດີ |  |
| ເຂົ້າໜຽວຂາວ %25 | ສີທຳມະດາ | |
| ເຂົ້າໜຽວຂາວຫັກ A1 | - | |

**ມາດຖານເຂົ້າໜຶ້ງ**

| ຊະນິດເຂົ້າ | ລະດັບການສີເຂົ້າ | |
|---|---|---|
| ເຂົ້າໜຶ້ງ 100% ຄັດ | ສີດີພິເສດ |  |
| ເຂົ້າໜຶ້ງ %100 | ສີດີພິເສດ | |
| ເຂົ້າໜຶ້ງ %100ຄັດ | ສີດີ | |
| ເຂົ້າໜຶ້ງ %5 | ສີດີ | |
| ເຂົ້າໜຶ້ງ %10ຄັດ | ສີດີ | |
| ເຂົ້າໜຶ້ງ %10 | ສີດີ | |
| ເຂົ້າໜຶ້ງ %15 | ສີດີປານກາງ | |
| ເຂົ້າໜຶ້ງ %25 | ສີດີທຳມະດາ | |
| ເຂົ້າໜຶ້ງຫັກ A1 | - | |

## ມາດຖານເຂົ້າຫອມໄທ

ເຂົ້າຫອມໄທທຸກປະເພດ ແລະ ຊະນິດ ຕ້ອງມີມາດຖານດັ່ງຕໍ່ໄປນີ້:

1. ມີເຂົ້າຫອມໄທບໍ່ໜ້ອຍກ່ວາຮ້ອຍລະ 80.0 ໂດຍປະລິມານ
2. ມີຄວາມຊຸ່ມບໍ່ເກີນຮ້ອຍລະ 14.0
3. ມີລັກສະນະໂດຍທົ່ວໄປເປັນເຂົ້າເມັດຍາວ
4. ບໍ່ມີແມງທີ່ຍັງມີຊີວິດຢູ່
5. ມີຂະໜາດເມັດດັ່ງນີ້:
    - ຄວາມຍາວສະເລ່ຍຂອງເຂົ້າເຕັມເມັດທີ່ບໍ່ມີສ່ວນໃດຫັກຕ້ອງບໍ່ຕໍ່າກ່ວາ 7.0 ມິນລີແມັດ
    - ອັດຕາຄວມຍາວສະເລ່ຍຕໍ່ຄວາມກ້ວາງສະເລ່ຍຂອງເຂົ້າເຕັມເມັດທີ່ບໍ່ມີສ່ວນໃດຫັກຕ້ອງບໍ່ຕໍ່າກ່ວາ 3.2: 1
6. ມີຄຸນສົມບັດທາງເຄມີດັ່ງນີ້:
    - ມີປະລິມານອະມີໂຣດສ ບໍ່ເກີນຮ້ອຍລະ 20.0 ທີ່ລະດັບຄວາມຊຸ່ມຮ້ອຍລະ 14.0
    - ມີຄ່າສະຫຼາຍເມັດເຂົ້າໃນດ່າງ ລະດັບ 6-7

| **ຊະນິດເຂົ້າ** | **ລະດັບການສີເຂົ້າ** |  |
|---|---|---|
| ເຂົ້າຂາວ 100% | ສີດີພິເສດ | |
| ເຂົ້າຂາວ %5 | ສີດີ | |
| ເຂົ້າຂາວ %10 | ສີດີ | |
| ເຂົ້າຂາວ %15 | ສີດີປານກາງ | |
| ເຂົ້າຂາວຫັກ A1 ພິເສດ | - | |
| ເຂົ້າຂາວຫັກ A 1ເລີດ | - | |
| ເຂົ້າກ້ອງ 100% | - | |
| ເຂົ້າກ້ອງ %5 | - | |
| ເຂົ້າກ້ອງ %10 | - | |
| ເຂົ້າກ້ອງ %15 | - | |

### *ມາດຖານເຂົ້າຫອມມະລິໄທ*

ສິນຄ້າມາດຕະຖານເຂົ້າຫອມະລິໄທທຸກຊັ້ນປະເພດ ແລະ ຊະນິດຕ້ອງມີມາດຕະຖານດັ່ງຕໍ່ໄປນີ້:

1. ມີເຂົ້າຫອມມະລິໄທບໍ່ໜ້ອຍກ່ວາຮ້ອຍລະ 92.0
2. ມີຄວາມຊຸມບໍ່ເກີນຮ້ອຍລະ 14.0
3. ມີລັກສະນະໂດຍທົ່ວໄປເປັນເຂົ້າເມັດຍາວ
4. ບໍ່ມີແມງທີ່ຍັງມີຊີວິດຢູ່

5. ມີຂະໜາດເມັດ ດັ່ງນີ້:
    - ຄວາມຍາວສະເລ່ຍຂອງເຂົ້າເຕັມເມັດ ທີ່ບໍ່ມີສ່ວນໃດຫັກ ຕ້ອງບໍ່ຕໍ່າກ່ວາ 7.0 ມິນລີແມັດ
    - ອັດຕາສ່ວນຄວາມຍາວສະເລ່ຍຕໍ່ຄວາມກ້ວາງສະເລ່ຍຂອງເຂົ້າເຕັມເມັດທີ່ບໍ່ມີສ່ວນໃດຫັກ ຕ້ອງບໍ່ຕໍ່າກ່ວາ 3.2: 1
6. ມີຄຸນສົມບັດທາງເຄມີ ດັ່ງນີ້:
    - ມີປະລິມານອະມີໂລດສ ບໍ່ຕໍ່າກ່ວາຮ້ອຍລະ 13.0 ແລະ ບໍ່ເກີນຮ້ອຍລະ 18.0 ທີ່ລະດັບຄວາມຊຸ່ມຮ້ອຍລະ 14.0
    - ມີຄ່າສະຫຼາຍເມັດເຂົ້າໃນດ່າງ ລະດັບ 7-6

| **ຊະນິດເຂົ້າ** | **ລະດັບການສີເຂົ້າ** |  |
|---|---|---|
| ເຂົ້າຂາວ %100 | ສີງາມພິເສດ | |
| ເຂົ້າຂາວ %5 | ສີງາມ | |
| ເຂົ້າຂາວ %10 | ສີງາມ | |
| ເຂົ້າຂາວ %15 | ສີງາມປານກາງ | |
| ເຂົ້າຂາວຫັກ A1 ເລີດພິເສດ | - | |
| ເຂົ້າຂາວຫັກ A 1ເລີດ | - | |
| ເຂົ້າກ້ອງ %100 | - | |
| ເຂົ້າກ້ອງ %5 | - | |
| ເຂົ້າກ້ອງ %10 | - | |
| ເຂົ້າກ້ອງ %15 | - | |

**ຄໍານິຍາມ**

ຊັ້ນຂອງເມັດເຂົ້າ ລະດັບການສີເຂົ້າ ພ້ອມດ້ວຍ ຄວາມໝາຍຂອງຄໍາທີ່ໃຊ້ໃນມາດຖານນີ້ ມີດັ່ງນີ້:

1. ມາດຖານສິນຄ້າເຂົ້າ (Rice Standards) ໝາຍເຖິງ ຂໍ້ກໍານົດຂັ້ນຕໍ່າສໍາລັບເຂົ້າແຕ່ລະປະເພດ ແລະ ຊະນິດ ສໍາລັບເຂົ້າແຕ່ລະຊະນິດ ສໍາລັບການຄ້າພາຍໃນປະເທດ ແລະ ການຄ້າລະຫວ່າງປະເທດ
2. ເຂົ້າ (Rice) ໝາຍເຖິງ ເຂົ້າຈ້າວ ແລະ ເຂົ້າໜຽວ (Oryza sativa L.) ບໍ່ວ່າຈະຢູ່ໃນຮູບໃດ
3. ເຂົ້າເປືອກ (Paddy) ໝາຍເຖິງເຂົ້າທີ່ຍັງບໍ່ຜ່ານການເອົາເປືອກອອກ
4. ເຂົ້າກ້ອງ (Cargo rice, Loonzain rice, Brown rice, Husked rice) ໝາຍເຖິງເຂົ້າທີ່ຜ່ານການເອົາເປືອກອອກເທົ່ານັ້ນ
5. ເຂົ້າຂາວ (White rice) ໝາຍເຖິງເຂົ້າທີ່ໄດ້ຈາກການນໍາເຂົ້າກ້ອງຈ້າວໄປຄັດເອົາລໍາອອກແລ້ວ
6. ເຂົ້າໜຽວຂາວ (White glutinous rice) ໝາຍເຖິງເຂົ້າທີ່ໄດ້ຈາກການນໍາເຂົ້າກ້ອງໜຽວໄປຄັດລໍາອອກແລ້ວ

7. ເຂົ້າໜຶ້ງ (Parboiled rice) ໝາຍເຖິງເຂົ້າຈ້າວທີ່ໄດ້ຜ່ານຂະບວນການເຮັດເຂົ້າໜຶ້ງ ແລະ ຄັດເອົາລຳເຂົ້າແລ້ວ
8. ເຂົ້າຫອມມະລິໄທ (THAI HOM MALI RICE ຫຼື THAI JASMINE RICE ຫຼື THAI FRAGRANT RICE ຫຼື ຊື່ອື່ນທີ່ມີຄວາມໝາຍດຽວກັນ ບໍ່ວ່າຈະມີຄຳທີ່ມີຄວາມໝາຍວ່າ "ໄທ" ຫຼື ບໍ່ກໍ່ຕາມ ) ໝາຍຄວາມວ່າເຂົ້າກ້ອງ ແລະ ເຂົ້າຂາວທີ່ແປຮູບມາຈາກເຂົ້າເປືອກຈ້າວພັນເຂົ້າຫອມທີ່ໄວຕໍ່ຊ່ວງແສງ ຊຶ່ງຜະລິດໃນປະເທດໄທໃນລະດູເຮັດນາ ແລະ ກະຊວງກະເສດ ປະກາດຮັບຮອງວ່າເປັນພັນຂາວດອກມະລິ 105 ແລະ ພັນຂາວ 15 ຊຶ່ງມີກິ່ນຫອມຕາມທຳມະຊາດ ຂຶ້ນຢູ່ກັບວ່າເປັນເຂົ້າໃໝ່ ຫຼື ເຂົ້າເກົ່າ ເມື່ອຫຸງເປັນເຂົ້າສວຍແລ້ວ ເມັດເຂົ້າສວຍ ຈະອ່ອນນຸ້ມ
9. ອະມິໂລດສ (Amylose) ໝາຍຄວາມວ່າເປັນແປ້ງຊະນິດໜຶ່ງທີ່ມີຢູ່ໃນເມັດເຂົ້າ ເມື່ອຫຸງແລ້ວເຮັດໃຫ້ເຂົ້າສວຍມີຄວາມອ່ອນນຸ້ມ ຫຼື ກະດ້າງ ແຕກຕ່າງກັນໄປຕາມປະລິມານອະມິໂລດສ
10. ພື້ນຂາວ) Rice classification) ໝາຍເຖິງເມັດເຂົ້າທີ່ມີຄວາມຍາວລະດັບຕ່າງໆ ຕາມທີ່ກຳນົດ ຊຶ່ງເປັນສ່ວນປະສົມຂອງເຂົ້າແຕ່ລະຊັ້ນຕາມອັດຕາສ່ວນທີ່ກຳນົດ
11. ຊັ້ນຂອງເມັດເຂົ້າ (Classes of rice kernels) ໝາຍເຖິງຊັ້ນຂອງເມັດເຂົ້າທີ່ແບ່ງຕາມລະດັບຄວາມຍາວຂອງເຂົ້າເຕັມເມັດ
12. ສ່ວນຂອງເມັດເຂົ້າ) Parts of rice kernels ) ສ່ວນຂອງເຂົ້າເຕັມເມັດແຕ່ລະສ່ວນທີ່ແບ່ງຕາມຄວາມຍາວຂອງເມັດອອກເປັນ 10 ສ່ວນເທົ່າໆກັນ
13. ເຂົ້າເຕັມເມັດ (Whole kernels) ເມັດເຂົ້າທີ່ຢູ່ໃນສະພາບເຕັມເມັດ ບໍ່ມີສ່ວນໃດຫັກ ແລະ ລວມເຖິງເມັດເຂົ້າທີ່ມີຄວາມຍາວຕັ້ງແຕ່ 9 ສ່ວນຂຶ້ນ
14. ຕົ້ນເຂົ້າ (Head rice) ໝາຍເຖິງເມັດເຂົ້າຫັກທີ່ມີຄວາມຍາວຫຼາຍກ່ວາເຂົ້າຫັກແຕ່ບໍ່ເຖິງຄວາມຍາວຂອງເຂົ້າເຕັມເມັດ ແລະ ໃຫ້ລວມເຖິງເມັດເຂົ້າແຕກເປັນຊີກທີ່ມີເນື້ອທີ່ເຫຼືອຢູ່ຕັ້ງແຕ່ຮ້ອຍລະ 80 ຂອງເມັດ
15. ເຂົ້າຫັກ (Brokens) ໝາຍເຖິງເມັດເຂົ້າຫັກທີ່ມີຄວາມຍາວຕັ້ງແຕ່ 2.5 ສ່ວນຂຶ້ນໄປ ແຕ່ບໍ່ເຖິງຄວາມຍາວຂອງຕົ້ນເຂົ້າ ແລະ ໃຫ້ລວມເຖິງເມັດເຂົ້າແຕກເປັນຊີກ ທີ່ມີເນື້ອທີ່ເຫຼືອຢູ່ບໍ່ເຖິງຮ້ອຍລະະ 80 ຂອງເມັດ
16. ປາຍເຂົ້າ C 1(Small brokens C1) ໝາຍເຖິງເມັດເຂົ້າຫັກຂະໜາດນ້ອຍທີ່ຮ່ອນຜ່ານຕະແກງໂລຫະຣູກົມເບີ 7
17. ເຂົ້າເມັດສີຕ່ຳກ່ວາມາດຕະຖານ (Undermilled kernels) ໝາຍເຖິງເມັດເຂົ້າທີ່ຜ່ານການຄັດສີຕ່ຳກ່ວາລະດັບການສີທີ່ກຳນົດໄວ້ສຳລັບເຂົ້າແຕ່ລະຊະນິດ
18. ເຂົ້າເມັດແດງ (Red kernels) ໝາຍເຖິງເມັດເຂົ້າທີ່ມີລຳສີແດງຫຸ້ມຢູ່ທັງເມັດ ຫຼື ຕິດຢູ່ເປັນບາງສ່ວນຂອງເມັດ
19. ເຂົ້າເມັດເຫຼືອງ (Yellow kernels) ໝາຍເຖິງເມັດເຂົ້າທີ່ມີບາງສ່ວນຂອງເມັດກາຍເປັນສີເຫຼືອງຢ່າງຊັດແຈ້ງ ລວມທັງເມັດເຂົ້າໜຶ້ງທີ່ເປັນສີນ້ຳຕານອ່ອນບາງສ່ວນ ຫຼື ທັງເມັດ
20. ເຂົ້າເມັດດຳ )Black kernels) ໝາຍເຖິງເມັດເຂົ້າໜຶ້ງທີ່ເປັນສີດຳທັງເມັດ ລວມທັງທີ່ເປັນສີນ້ຳຕານແກ່ທັງເມັດ
21. ເຂົ້າເມັດດຳບາງສ່ວນ (Partly black kernels) ໝາຍເຖິງເມັດເຂົ້າໜຶ້ງທີ່ເປັນສີດຳ ລວມທັງທີ່ເປັນສີນ້ຳຕານແກ່ ຕັ້ງແຕ່ 2.5 ສ່ວນຂຶ້ນໄປ ແຕ່ບໍ່ເຖິງເຕັມ

22. ເຂົ້າເມັດຈຸດດໍາ (Peck kernels) ເມັດເຂົ້າໜຶ່ງທີ່ເປັນສີດໍາຢ່າງຊັດເຈນ ລວມທັງທີ່ເປັນສີນໍ້າຕານແກ່ຢ່າງຊັດເຈນບໍ່ເຖິງ 2.5 ສ່ວນ
23. ເຂົ້າເມັດທ້ອງໄຂ່ (Chalky kernels) ເມັດເຂົ້າຈ້າວທີ່ເປັນສີຂາວຂຸ່ນ ມີເນື້ອທີ່ຕັ້ງແຕ່ຮ້ອຍລະ 50 ຂຶ້ນໄປຂອງເນື້ອທີ່ເມັດເຂົ້າ
24. ເຂົ້າເມັດເສຍ (Damaged kernels) ເມັດເຂົ້າທີ່ເສຍຢ່າງເຫັນໄດ້ຊັດເຈນດ້ວຍຕາເປົ່າ ຊຶ່ງເກີດຈາກຄວາມຊຸ່ມ ຄວາມຮ້ອນ ເຊື້ອລາ ແມງ ຫຼື ອື່ນໆ
25. ເຂົ້າເມັດລີບ (Undeveloped kernels) ໝາຍເຖິງເມັດເຂົ້າທີ່ບໍ່ຈະເລີນເຕີບໂຕ ຕາມທໍາມະດາທີ່ຄວນຈະເປັນມີລັກສະນະແຟບ, ແປ
26. ເຂົ້າເມັດອ່ອນ )Immature kernels) ໝາຍເຖິງເມັດເຂົ້າທີ່ມີສີຂຽວອ່ອນໄດ້ຈາກເຂົ້າເປືອກທີ່ຍັງບໍ່ແກ່
27. ເມັດພືດອື່ນ )Other seed) ໝາຍເຖິງເມັດພືດອື່ນໆທີ່ບໍ່ແມ່ນເມັດເຂົ້າ
28. ວັດຖຸອື່ນ (Foreign matter) ໝາຍເຖິງສິ່ງອື່ນໆ ທີ່ບໍ່ແມ່ນເຂົ້າ ລວມທັງແກບ ແລະ ລໍາ ທີ່ລຸດຈາກເມັດເຂົ້າ
29. ລະດັບການສີເຂົ້າ (Milling degree) ໝາຍເຖິງລະດັບຂອງການສີເຂົ້າ
30. ຕະແກງ (Sieve) ໝາຍເຖິງຕະແກງໂລຫະຮູກົມເບີ 7 ໜາ 0.79 ມີນລີແມັດ (0.0031 ນີ້ວ) ແລະ ເສັ້ນຜ່ານສູນກາງຮູ 1.75 ມີລີແມັດ (0.069 ນີ້ວ)
31. ຮ້ອຍລະ ໝາຍເຖິງ ຮ້ອຍລະໂດຍນໍ້າໜັກ ຍົກເວັ້ນຮ້ອຍລະຂອງພື້ນເຂົ້າເປັນຮ້ອຍລະໂດຍປະມານ

## 6. ຂັ້ນຕອນການຊື້-ຂາຍເຂົ້າ: ເງື່ອນໄຂທີ່ຈຳເປັນຕ້ອງຮູ້

ຂັ້ນຕອນການຊື້-ຂາຍເຂົ້າເປັນຂັ້ນຕອນທີ່ຈຳເປັນທີ່ຜູ້ດຳເນີນທຸລະກິດນີ້ຕ້ອງໃຫ້ຄວາມສຳຄັນ ແລະ ລະມັດລະວັງໃນການດຳເນີນງານ ເນື່ອງຈາກເປັນເລື່ອງທີ່ກ່ຽວຂ້ອງໂດຍກົງກັບຜົນຕອບແທນຂອງການດຳເນີນທຸລະກິດປະກອບດ້ວຍ

- ການຕິດຕໍ່ຫາລູກຄ້າ ເພື່ອຮູ້ລາຍລະອຽດ ແລະ ເງື່ອນໄຂທີ່ຜູ້ຊື້ ແລະ ຜູ້ຂາຍຈະຕ້ອງປະຕິບັດໃຫ້ມີຄວາມເຂົ້າໃຈຖືກຕ້ອງກົງກັນ ສິ່ງທີ່ຕ້ອງເຈລະຈາໃຫ້ຊັດເຈນໄດ້ແກ່

1. **ການກຳນົດເມືອງທ່າເຮືອປາຍທາງທີ່ຈະສົ່ງມອບເຂົ້າທີ່ແນ່ນອນ** ເພື່ອປະຫຍັດຄ່າຂົນສົ່ງ ແລະ ເພື່ອບໍ່ໃຫ້ສິນຄ້າເສຍຫາຍ ຫຼື ຫຼົງທາງ

2. **ຊະນິດ ແລະ ປະລິມານຂອງເຂົ້າທີ່ຕົກລົງຊື້-ຂາຍ** ພ້ອມເງື່ອນໄຂເພີ່ມ / ຫຼຸດ ຕາມຫຼັກເກນສາກົນ

3. **ການກຳນົດຊ່ວງເວລາສົ່ງ-ມອບ** ຂຶ້ນຢູ່ກັບຄວາມຕ້ອງການຂອງຜູ້ຊື້ ຜູ້ຊື້ ແລະ ຜູ້ຂາຍຈາເປັນຕ້ອງສ້າງຄວາມເຂົ້າໃຈໃຫ້ຖືກຕ້ອງກົງກັນວ່າ ກຳນົດເວລາຕາມສັນຍານັ້ນຄອບຄຸມເຖິງຂັ້ນຕອນປະຕິບັດແນວໃດ ໃນຊ່ວງເວລາໃດ

4. **ເງື່ອນໄຂການສົ່ງມອບ** ຄືການກຳນົດຂອບເຂດ, ຄວາມຮັບຜິດຊອບຂອງຜູ້ຊື້-ຜູ້ຂາຍ ເຊິ່ງ ຈະເລືອກດຳເນີນການໄດ້ໃນເງື່ອນໄຂແບບ FOB, C&F ຫຼື CFR ແລະ CIF ເງື່ອນໄຂການສົ່ງມອບຈະມີຜົນຕໍ່ການກຳນົດລາຄາໂດຍກົງ ຜູ້ສົ່ງອອກຈຳເປັນຕ້ອງສຶກສາຂໍ້ມູນເຫຼົ່ານີ້ໃຫ້ເຂົ້າໃຈກ່ອນຕົກລົງຊື້-ຂາຍ

5. **ການກວດກາຄຸນນະພາບ** ແນວທາງປະຕິບັດໃນການຊື້-ຂາຍເຂົ້າລະຫວ່າງປະເທດ ຜູ້ຊື້ ຈະແຕ່ງຕັ້ງຜູ້ກວດສອບຄຸນນະພາບເຂົ້າທີ່ຈະສົ່ງມອບຕາມສັນຍາ. ດັ່ງນັ້ນ, ຈຶ່ງຕ້ອງມີການຕົກລົງກັນເຖິງສິດທິໃນການເປັນຜູ້ເລືອກ, ຜູ້ກວດສອບຄຸນນະພາບ ແລະ ໜ້າທີ່ຮັບຜິດຊອບຂອງຜູ້ກວດສອບ

6. **ເງື່ອນໄຂການຊຳລະເງິນ** ຜູ້ຂາຍຈຳເປັນຕ້ອງເຈລະຈາເຮັດຂໍ້ຕົກລົງໃນເລື່ອງເງື່ອນໄຂການຊຳລະເງິນວ່າຜູ້ຊື້ຈະຊຳລະເງິນແນວໃດ ເຊັ່ນ ຊຳລະເປັນເງິນສົດ ຫຼື ເງິນເຊື່ອ ກໍລະນີຊຳລະເປັນເງິນເຊື່ອຈະຊຳລະພາຍໃນເວລາເທົ່າໃດ ເຊັ່ນ 60 ວັນ, 90 ວັນ, 120 ວັນ ຫຼື ອື່ນໆ ເຊິ່ງການຊຳລະນີ້ອາດຊຳລະໃນຮູບຂອງການເປີດ (Letter of Credit: L/C), ການໂອນເງິນທາງໂທລະເລກ (Telegraphic Transfer:T/T) Document Against Acceptance: D/P ແຕ່ລະວິທີຈະມີຄ່າໃຊ້ຈ່າຍ ແລະ ພາວະຄວາມສ່ຽງຕໍ່ການບໍ່ໄດ້ຮັບຊຳລະເງິນແຕກຕ່າງກັນ ຜູ້ຂາຍຄວນໃຊ້ຄວາມລະອຽດຮອບຄອບ ແລະ ສຶກສາສ້າງຄວາມເຂົ້າໃຈເຖິງວິທີການຊຳລະເງິນໃຫ້ເຂົ້າໃຈລະອຽດ

ນອກຈາກນີ້ ຍັງຕ້ອງພິຈາລະນາຕົກລົງກັນໃນເລື່ອງເອກະສານປະກອບການຊຳລະເງິນນຳ ເຊັ່ນ ຜູ້ຂາຍຕ້ອງສົ່ງມອບເອກະສານຕ່າງໆ ແນວໃດ, ໃນຊ່ວງເວລາໃດ ເຊັ່ນ Commercial Invoice, Bill of Lading, Certificate of Weight Inspection and Fumigation ແລະ Certificate of Origin Phytosanitary Certificate ເປັນຕົ້ນ

7. **ການຕັ້ງຕົວແທນ** ໃນທາງປະຕິບັດຜູ້ຊື້ສາມາດຕັ້ງຕົວແທນໃນປະເທດ ເພື່ອຕິດຕໍ່ປະສານ ງານ ແລະ ຕິດຕາມການສົ່ງມອບເຂົ້າໄດ້ໂດຍຜູ້ຊື້ຕ້ອງແຈ້ງໃຫ້ຜູ້ຂາຍຮູ້ຊື່, ທີ່ຢູ່ ແລະ ໜ້າທີ່ຂອງຕົນແທນນັ້ນ ກ່ອນເລີ່ມປະຕິບັດງານ

8. **ການກຳນົດລາຄາຊື້-ຂາຍ** ການເຈລະຈາເລື່ອງລາຄາເປັນປະເດັນທີ່ສຳຄັນທີ່ຄວນພິຈາລະນາຫຼັງຈາກຮູ້ຂໍ້ມູນຂ້າງເທິງຄົບຖ້ວນແລ້ວ.

## 7. ຂັ້ນຕອນການສົ່ງອອກເຂົ້າໄປຈຳໜ່າຍຢູ່ຕ່າງປະເທດ

ໃນພາກສ່ວນນີ້ຈະໄດ້ອີງໃສ່ຂັ້ນຕອນການສົ່ງອອກນຳເຂົ້າທີ່ອອກແບບ ແລະ ສ້າງຂຶ້ນ ຈາກຄູ່ມືການສົ່ງອອກສິນຄ້າລາວໄປ ສປ ຈີນທີ່ສ້າງຂຶ້ນໂດຍ International Trade Center ໃນປີ 2017ເປັນຫລັກ. ສ່ວນການສົ່ງອອກເຂົ້າໄປຍັງ ສສ ຫວຽດນາມ ແລະ ສະຫະພາບຢູໂຫລບ ກໍ່ມີລັກສະນະ ແລະ ຂັ້ນຕອນຄ້າຍຄືກັນ ຈະ ແຕກຕ່າງໃນເງື່ອນໄຂສະເພາະໃນພາກທີ 6.

### 6.1. ກໍລະນີສົ່ງອອກເຂົ້າໄປຈຳໜ່າຍຢູ່ ສປ ຈີນ

ຂັ້ນຕອນການສົ່ງອອກເຂົ້າໄປຈຳໜ່າຍຢູ່ ສປ ຈີນໂດຍທົ່ວໄປມີ 5 ຂັ້ນຕອນທີ່ບໍລິສັດຕ້ອງຮູ້ກ່ອນທີ່ຈະສົ່ງອອກເຂົ້າໄປຈຳໜ່າຍ ຢູ່ ສປ ຈີນດັ່ງນີ້:

ຮູບທີ 1 ຂັ້ນຕອນການສົ່ງອອກເຂົ້າອອກໄປຈຳໜ່າຍຢູ່ ສປ ຈີນ



**ໝາຍເຫດ:** AQSIQ ຄືອົງການບໍລິຫານການຄຸ້ມຄອງ, ກວດກາຄຸນນະພາບ ແລະ ການກັກກັນພືດ ແລະ ສັດ ແຫ່ງ ສປ ຈີນ. ສຳລັບ ສາລີ, ມັນຕົ້ນ, ເຂົ້າ, ກ້ວຍ ແລະ ໝາກໂມ

ຂັ້ນຕອນທີ 0 ໃຊ້ກັບ ສາລີ, ມັນຕົ້ນ, ເຂົ້າ, ກ້ວຍ ແລະ ໝາກໂມ ທີ່ສົ່ງອອກໄປ ສປ ຈີນ, ສປປ ລາວ ແລະ ສປ ຈີນໄດ້ເຊັນສັນຍາຮ່ວມມືກັນລະຫວ່າງສອງຝ່າຍສຳລັບສິນຄ້າດັ່ງກ່າວ ເຫຼົ່ານີ້ທີ່ຕ້ອງການໃຫ້ຜະລິດຢູ່ ສປປ ລາວ ທີ່ຕ້ອງການສົ່ງອອກສິນຄ້າຂອງຕົນເອງຕ້ອງປະຕິບັດຕາມມາດຕະຖານການຜະລິດເປັນສິນຄ້າຢ່າງເຂັ້ມງວດ, ຂະບວນການ ແລະ ມາດຕະຖານການຂົນສົ່ງ ຂັ້ນຕອນທີ 1 ແລະ 2 ໃຊ້ກັບທຸກໆ ຜູ້ຜະລິດທີ່ຕ້ອງການສົ່ງອອກໄປ ສປ ຈີນ, ບໍ່ໄດ້ກຳນົດວ່າຜົນລະປູກທີ່ຕ້ອງການສົ່ງອອກນັ້ນຈະແມ່ນຫຍັງ. ຂັ້ນຕອນທີ 3 ແມ່ນແບ່ງອອກເປັນສອງ-ສາມຂັ້ນຕອນຍ່ອຍທີ່ຈຳເປັນຕ້ອງມີການແຈ້ງພາສີ. ຂັ້ນຕອນສຸດທ້າຍເປັນຂັ້ນຕອນທົ່ວໄປທີ່ທຸກໆ ບໍລິສັດສົ່ງອອກຕ້ອງປະຕິບັດ.

ພາກຕໍ່ໄປຈະເວົ້າເຖິງລາຍລະອຽດກ່ຽວກັບຂັ້ນຕອນທີ່ຈຳເປັນໃນການສົ່ງສິນຄ້າໄປ ສປ ຈີນ ຢ່າງມີປະສິດທິພາບ:

**ຂັ້ນຕອນທີ 0:** ຂໍ້ກຳນົດຂອງສຳນັກງານຄວບຄຸມຄຸນນະພາບ, ກວດສອບ ແລະ ກັກກັນໂລກ General Administration of Quality Supervision, Inspection and Quarantine: AQSIQ)

| | |
|---|---|
| **ສະຖານທີ່** | • ກະຊວງປ່າໄມ້ ແລະ ກະສິກຳ<br>• ການບໍລິຫານທົ່ວໄປກ່ຽວກັບການຄວບຄຸມຄຸນນະພາບ, ການກວດກາ ແລະ ການກັກກັນພືດ ແລະ ສັດ (AQSIQ)<br>ໝາຍເຫດ: ສະເພາະສາລີ, ມັນຕົ້ນ, ເຂົ້າ, ໝາກໂມ ແລະ ໝາກກ້ວຍ |
| **ເອກະສານທີ່ຕ້ອງການ** | • ລາຍລະອຽດຕ່າງໆລວມມີຊື່ບໍລິສັດ, ທີ່ຕັ້ງຂອງດິນ, ຂະໜາດດິນ, ຊື່ຜູ້ອຳນວຍການບໍລິສັດ, ປະສົບການໃນການປູກຝັງ, ການໃຊ້ປຸ໋ຍ ແລະ ຢາຂ້າແມງໄມ້.<br>• ໃບຢັ້ງຢືນການຈົດທະບຽນພື້ນທີ່ປູກ<br>• ໃບອະນຸຍາດດຳເນີນກິດຈະກຳຈາກກະຊວງກະຊິກຳ<br>• ໃບທະບຽນອາກອນ<br>• ລາຍລະອຽດສິ່ງບັນຈຸ ໃນຫີບຫໍ່ |
| **ເອກະສານທີ່ໄດ້ຮັບ** | • ໃບຢັ້ງຢືນ AQSIQ<br>• ໃບຢັ້ງຢືນກຸ່ມສົ່ງອອກຜະລິດຕະພັນກະສິກຳ |
| **ເປັນເອກະສານບັງຄັບ** | ແມ່ນ, ສຳລັບ ສາລີ, ມັນຕົ້ນ, ເຂົ້າ, ໝາກໂມ ແລະ ກ້ວຍ |
| **ຄ່າທຳນຽມ** | ບໍ່ມີ |
| **ໄລຍະເວລາທີ່ໃຊ້** | ພາຍໃນ 90 ວັນ |
| **ຂໍ້ມູນຕິດຕໍ່** | • AQSIQ: webmaster@aqsiq.gov.cn<br>• ກະຊວງກະສິກຳ ແລະ ປ່າໄມ້: 856 21 412340 |
| ລັດຖະບານລາວ, ໂດຍມີກະຊວງກະສິກຳ ແລະ ປ່າໄມ້ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈກັບ AQSIQ ຢູ່ຈີນໃນການສົ່ງອອກສາລີ, ມັນຕົ້ນ, ເຂົ້າ, ໝາກໂມ ແລະ ກ້ວຍ, ທີ່ລະບຸວ່າອາດເປັນສິນຄ້າທີ່ມີທ່າແຮງສູງ. ບໍລິສັດຢູ່ລາວທີ່ຕ້ອງການສົ່ງສິນຄ້າເຫຼົ່ານີ້ຈະຕ້ອງໄປລົງທະບຽນກັບກະຊວງກະສິກຳ ແລະ ປ່າໄມ້ ເຊິ່ງເປັນຜູ້ທີ່ປະສານກັບ AQSIQ ຕາງໜ້າໃຫ້ກຸ່ມບໍລິສັດທີ່ຕ້ອງການສົ່ງອອກສິນຄ້າກະສິກຳແຕ່ລະປະເພດ. ແຕ່ລະບໍລິສັດທີ່ຈົດທະບຽນກັບກະຊວງກະສິກຳ ແລະ ປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ຈະປະສານງານຫາ AQSIQ ເພື່ອສົ່ງຕົວຢ່າງດິນ, ໃນປະເທດເພື່ອໃຫ້ AQSIQ ກວດສອບຜົນຜະລິດຕ່າງໆ, ສິ່ງທີ່ໃຊ້ໃນຂະບວນ | |

ການປູກ, ແລະ ຈັດບັນຈຸໃສ່ຫີບຫໍ່. ກະຊວງກະສິກຳ ແລະ ປ່າໄມ້ຈະສະໜັບສະໜູນບັນດາບໍລິສັດໂດຍໃຫ້ຄວາມຮູ້ທາງດ້ານເຕັກນິກວິຊາການດ້ານກະສິກຳ ເຊັ່ນດຽວກັນກັບສິ່ງທີ່ຕ້ອງມີໃນການສົ່ງອອກໄປຈີນ; ໃຫ້ການຊ່ວຍເຫຼືອບໍລິສັດໃນການແລ່ນເອກະສານກ່ຽວກັບໃບຢັ້ງຢືນ ສຸຂານາ ແລະ ສຸຂານາພືດ SPS ແລະ ໃບອະນຸຍາດສົ່ງອອກ.

## ຂັ້ນຕອນທີ 1: ການຈົດທະບຽນວິສາຫະກິດ

### 1.1 ໃບທະບຽນວິສາຫະກິດ

| | |
|---|---|
| **ສະຖານທີ່** | • ໃບທະບຽນວິສາຫະກິດ: ກະຊວງອຸດສາຫະກຳ ແລະ ການຄ້າ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ<br>• ຄຸ້ມຄອງຊັບສິນ, ກະຊວງການເງິນ |
| **ເອກະສານທີ່ຕ້ອງການ** | • ສັນຍາສ້າງຕັ້ງບໍລິສັດ 3 ຊຸດ<br>• ກົດລະບຽບບໍລິສັດ 3 ຊຸດ<br>• ສັນຍາຮ່ວມທຸລະກິດ (ຖ້າມີຜູ້ລົງທຶນຮ່ວມ) 3 ຊຸດ<br>• ສຳເນົາບັດປະຈຳຕົວຜູ້ລົງທຶນ 3 ຊຸດ<br>• ຮູບຜູ້ອຳນວຍ 6 ໃບ<br>• ສັນຍາເຊົ່າຫ້ອງການ<br>• ໃບຢັ້ງຢືນສະຖານະການເງິນຂອງຜູ້ລົງທຶນ<br>• ແຜນທຸລະກິດ-ໜັງສືສະແດງເຈດຈຳນົງດຳເນີນທຸລະກິດ, ໃບລາຍຊື່ພະນັກງານ ແລະ ອື່ນໆ. |
| **ເອກະສານທີ່ໄດ້ຮັບ** | • ໃບທະບຽນວິສາຫະກິດ<br>• ໃບຢັ້ງຢືນການຈອງທະບຽນວິສາຫະກິດ<br>• ຢັ້ງຢືນການຈົດທະບຽນກົດລະບຽບບໍລິສັດ |
| **ເປັນເອກະສານບັງຄັບ** | ແມ່ນ |
| **ຄ່າທຳນຽມ** | • 10,000 ກີບ ຄ່າໃບຢັ້ງຢືນການຈອງທະບຽນວິສາຫະກິດ<br>• 10,000 ກີບ (ແບບຟອມສ້າງຕັ້ງບໍລິສັດ)<br>• 70,000 ກີບ (ແບບຟອມຂໍຈົດທະບຽນບໍລິສັດ)<br>• 30,000 ກີບ (ຄ່າທຳນຽມຈົດທະບຽນ) |
| **ໄລຍະເວລາທີ່ໃຊ້** | 2 ອາທິດ |
| **ຂໍ້ມູນຕິດຕໍ່** | ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ<br>ທີ່ຢູ່: ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ<br>ໂທ: 856 21 412 011<br>ຫ້ອງການຈົດທະບຽນຊັບສິນ, ກະຊວງການເງິນ<br>ໂທ/ແຟັກ: 856 21 900905<br>Email: reg_simp@mof.gov.la. |
| ບໍລິສັດທີ່ຕ້ອງການສົ່ງສິນຄ້າທາງການຄ້າຈາກ ສປປ ລາວ ທຳອິດຈະຕ້ອງມີ: ຈົດທະບຽນບໍລິສັດກັບກະຊວງອຸດສາຫະກຳ ແລະ ການຄ້າ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ.<br><br>ແບບຟອມຈອງຊື່ວິສາຫະກິດທີ່ສົມບູນ, ໃຫ້ຂຽນຊື່ບໍລິສັດເປັນ 3 ຊື່ ເພື່ອຂໍສ້າງຕັ້ງເປັນບໍລິສັດແລ້ວຍື່ນໃຫ້ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດເພື່ອຍື່ນໃບສະເໜີຂໍຈອງຊື່ບໍລິສັດ. ໃນເວລາດຽວກັນນີ້ທ່ານຕ້ອງຂໍຈົດທະບຽນບໍລິສັດໄປພ້ອມກັນ, ສາມາດດາວໂຫຼດແບບຟອມໄດ້ຕາມເວບໄຊ້ຂ້າງລຸ່ມ. http//:www.erm.gov.la/index.php/en/downloads | |

| |
|---|
| ຫຼັງຈາກນ ້ັ້ນທ່ານຕ້ອງຂໍຈົດທະບຽນກົດລະບຽບບໍລິສັດກັບຫ້ອງການຈົດທະບຽນຊັບສິນ, ກະຊວງການເງິນ.<br><br>ເປັນສິ່ງສຳຄັນຕອນຂໍຈົດທະບຽນວິສາຫະກິດໃຫ້ໃສ່ລາຍລະອຽດກິດຈະກຳຕາມແຜນທີ່ທ່ານຈະດຳເນີນ: ຕົວຢ່າງ, ອີງຕາມຜູ້ຜະລິດເຄື່ອງນຸ່ງຫົ່ມທີ່ມີແຜນສົ່ງອອກໄປຕ່າງປະເທດ. ຖ້າໃບທະບຽນວິສາຫະກິດຂອງທ່ານບໍ່ໄດ້ລະບຸລະອຽດກິດຈະກຳຖີ່ຖ້ວນ, ທ່ານອາດພົບກັບບັນຫາໃນການສົ່ງອອກຜະລິດຕະພັນຂອງທ່ານ, ເຖິງແມ່ນວ່າຈະສາມາດຜະລິດເຄື່ອງໄດ້ສຳເລັດແລ້ວກໍ່ຕາມ |

## 1.2 ໃບຢັ້ງຢືນທະບຽນອາກອນ

| | |
|---|---|
| **ສະຖານທີ່** | • ກົມສ່ວຍສາອາກອນ, ກະຊວງການເງິນ |
| **ເອກະສານທີ່ຕ້ອງການ** | • ແບບຟອມຂໍໃບຢັ້ງຢືນທະບຽນອາກອນ<br>• ໃບຢັ້ງຢືນທີ່ຢູ່<br>• ລາຍການຊັບສິນ<br>• ລາຍຊື່ພະນັກງານ<br>• ສັນຍາເຊົ່າຫ້ອງການ<br>• ຂໍ້ມູນທີ່ຕັ້ງບໍລິສັດ<br>• ແຜນທີ່ທີ່ຕັ້ງບໍລິສັດຮັບຮອງໂດຍນາຍບ້ານ<br>• ຮູບອຳນວຍການບໍລິສັດ 2 ໃບ<br>• ສັນຍາຮ່ວມທຸລະກິດ<br>• ໃບທະບຽນວິສາຫະກິດ<br>• ບັດປະຈຳຕົວ<br>• ກົດລະບຽບບໍລິສັດທີ່ໄດ້ຈົດທະບຽນແລ້ວ |
| **ເອກະສານທີ່ໄດ້ຮັບ** | • ໃບຢັ້ງຢືນເລກປະຈຳຕົວຜູ້ເສຍອາກອນ<br>• ໃບຢັ້ງຢືນທະບຽນອາກອນ |
| **ເປັນເອກະສານບັງຄັບ** | ແມ່ນ |
| **ຄ່າທຳນຽມ** | • 25,000 ກີບ (ແບບຟອມຈົດທະບຽນໃບຢັ້ງຢືນທະບຽນອາກອນ)<br>• 10,000 ກີບ ຄ່າໃບຢັ້ງຢືນທະບຽນອາກອນ |
| **ໄລຍະເວລາທີ່ໃຊ້** | 2 ອາທິດ (+1 ອາທິດສຳລັບການຈົດທະບຽນອາກອນມູນຄ່າເພີ່ມ) |
| **ຂໍ້ມູນຕິດຕໍ່** | ຫ້ອງການກະຊວງການເງິນ<br>ໂທ:(856 21 911336<br>Email: webmaster@mof.gov.la<br>Email: ict@mof.gov.la |

| |
|---|
| ທ່ານຕ້ອງຂໍໃບຢັ້ງຢືນທະບຽນອາກອນຈາກກະຊວງການເງິນ. ວິສາຫະກິດທີ່ດຳເນີນທຸລະກິດຢູ່ລາວແມ່ນຕ້ອງຮັບຜິດຊອບອາກອນທາງກົງ ແລະ ທາງອ້ອມ. ບໍລິສັດທັງໝົດທີ່ມີທຶນຈົດທະບຽນສູງກວ່າ 400,000,000 ກີບ ຈະຕ້ອງເສຍອາກອນມູນຄ່າເພີ່ມກັບເຈົ້າໜ້າທີ່ສ່ວຍສາອາກອນ - ເຊິ່ງຈະໃຊ້ເວລາເພີ່ມຂຶ້ນອີກໜຶ່ງອາທິດໃຈຂະບວນການຂໍຈົດທະບຽນ. |

## 1.3 ກາປະທັບບໍລິສັດ

| | |
|---|---|
| **ສະຖານທີ່** | • ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ<br>• ຫ້ອງການຄວັດກາປະທັບ, ກະຊວງປ້ອງກັນຄວາມສະຫງົບ |
| **ເອກະສານທີ່ຕ້ອງການ** | ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ<br>• ແບບຟອມຂໍຄວັດກາປະທັບ<br>• ໃບສະເໜີຂໍຄວັດກາປະທັບ<br>ຫ້ອງການຄວັດກາປະທັບ, ກະຊວງປ້ອງກັນຄວາມສະຫງົບ |

| | |
|---|---|
| | • ໃບສະເໜີຂໍຈົດທະບຽນກາປະທັບ |
| **ເອກະສານທີ່ໄດ້ຮັບ** | • ໃບຢັ້ງຢືນນໍາໃຊ້ກາປະທັບ<br>• ກາປະທັບ ແລະ ຈົດທະບຽນກາປະທັບບໍລິສັດ |
| **ເປັນເອກະສານບັງຄັບ** | ແມ່ນ |
| **ຄ່າທໍານຽມ** | • 10,000 ກີບ (ແບບຟອມຂໍຄວັດກາປະທັບບໍລິສັດ)<br>• 60,000 ກີບ (ໃບຢັ້ງຢືນນໍາໃຊ້ກາປະທັບ)<br>• 50,000 ກີບ (ຄູ່ຄວັດກາປະທັບເປັນພາສາລາວ)<br>• 53,000 ກີບ (ຄູ່ຄວັດກາປະທັບເປັນພາສາລາວ ແລະ ຕ່າງປະເທດ) |
| **ໄລຍະເວລາທີ່ໃຊ້** | 2 ອາທິດ (ເຮັດໃນເວລາດຽວກັນພ້ອມກັບໃບຢັ້ງຢືນທະບຽນອາກອນ) |
| **ຂໍ້ມູນຕິດຕໍ່** | ສົມແກ້ວ ສີລາວົງ<br>ຕູ້ໄປສະນີ 7040, ນະຄອນຫຼວງວຽງຈັນ ສປປ ລາວ<br>ແຟັກ 856 21 214208 |
| ຫຼັງຈາກແລ່ນໃບທະບຽນວິສາຫະກິດແລ້ວ, ທ່ານຈະໄດ້ຮັບໜັງສືຂໍຄວັດກາປະທັບຈາກກົມທະບຽນ ແລະ ຄຸ້ມຄອງທະບຽນວິສາຫະກິດ, ກະຊວງອຸດສາຫະກໍາ ແລະ ການຄ້າ, ໜັງສືນີ້ພ້ອມກັບແບບຟອມຈະຕ້ອງຍື່ນຕໍ່ກະຊວງປ້ອງກັນຄວາມສະຫງົບ, ຜູ້ທີ່ຈະອອກໜັງສືຈົດທະບຽນກາປະທັບບໍລິສັດທີ່ຈະໄດ້ໃຊ້ເວລາຍື່ນຕໍ່ໃຫ້ພະແນກປ້ອງກັນຄວາມສະຫງົບຂັ້ນແຂວງເພື່ອຈົດທະບຽນກາປະທັບຢ່າງເປັນທາງການ. | |

## 1.4 ໃບອະນຸຍາດດໍາເນີນທຸລະກິດສະເພາະຂະແໜງການ

| | |
|---|---|
| **ສະຖານທີ່** | ຂໍໃບອະນຸຍາດດໍາເນີນທຸລະກິດສະເພາະຂະແໜງການ: ກະຊວງກະສິກໍາ ແລະ ປ່າໄມ້ |
| **ເອກະສານທີ່ຕ້ອງການ** | ແບບຟອມຂໍໃບອະນຸຍາດດໍາເນີນທຸລະກິດ<br>• ໃບທະບຽນວິສາຫະກິດ<br>• ໃບທະບຽນອາກອນ<br>• ໃບອະນຸຍາດນໍາໃຊ້ກາປະທັບບໍລິສັດ<br>ເອກະສານເພີ່ມຕື່ມ:<br>• ກົດລະບຽບບໍລິສັດ<br>• ໃບຕາດິນ ຫຼື ໃບອະນຸຍາດນໍາໃຊ້ທີ່ດິນ<br>• ບົດສຶກສາຄວາມເປັນໄປໄດ້ຂອງທຸລະກິດ (ລາຍລະອຽດແຕກຕ່າງກັນຕາມແຕ່ລະທຸ ລະກິດ)<br>• ໃບຢັ້ງຢືນການປະເມີນສິ່ງແວດລ້ອມ<br>ສໍາລັບຕໍ່ໃບອະນຸຍາດ<br>• ມີການກວດຄືນການດໍາເນີນທຸລະກິດປະຈໍາປີ |
| **ເອກະສານທີ່ໄດ້ຮັບ** | ໃບອະນຸຍາດດໍາເນີນທຸລະກິດ ສະເພາະຂະແໜງການ |
| **ເປັນເອກະສານບັງຄັບ** | ແມ່ນ |
| **ຄ່າທໍານຽມ** | • 20,000 ກີບ (ຄ່າແບບຟອມ)<br>• 30,000 ກີບ (ຄ່າອອກໃບອະນຸຍາດດໍາເນີນທຸລະກິດ) |
| **ໄລຍະເວລາທີ່ໃຊ້** | 35 ວັນລັດຖະການ |
| **ຂໍ້ມູນຕິດຕໍ່** | ກະຊວງກະສິກໍາ ແລະ ປ່າໄມ້<br>ຖະໜົນລ້ານຊ້າງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ, ຕູ້ ປນ 811<br>ໂທ: +856 21 412340 |
| | |

| |
|---|
| ບໍລິສັດທີ່ດໍາເນີນກິດຈະກໍາກ່ຽວກັບກະສິກໍາຈະຕ້ອງຂໍໃບອະນຸຍາດດໍາເນີນທຸລະກິດ (ທີ່ໃຊ້ສໍາລັບສະເພາະຂະແໜງການ) ຈາກກະຊວງກະສິກໍາ ແລະ ປ່າໄມ້. ກົມທີ່ເອກະສານຂອງທ່ານຈະໄປຍື່ນແມ່ນຂຶ້ນກັບກິດຈະກໍາຂອງທຸລະກິດ.<br>• ກົມກະສິກໍາ: ຮັບຜິດຊອບດ້ານການປູກຝັງ, ຟຸ່ນຊີວະພາບ ແລະ ຢາຂ້າແມງໄມ້<br>• ກົມສົ່ງເສີມກະສິກໍາ ແລະ ສະຫະກອນ: ຮັບຜິດຊອບດ້ານການສີເຂົ້າ ແລະ ກິດຈະກໍາອື່ນໆ<br>• ກົມປ່າໄມ້: ການປູກຕົ້ນໄມ້ ແລະ ເຄື່ອງປ່າຂອງດົງ<br>• ກົມຊົນລະປະທານ: ທຸລະກິດທີ່ເຮັດກ່ຽວກັບການກໍ່ສ້າງ ແລະ ສ້ອມແປງລະບົບຊົນລະປະທານ<br>• ທຸລະກິດທີ່ກ່ຽວຂ້ອງກັບການລ້ຽງສັດ ແລະ ການປະມົງ<br><br>ແຕ່ລະປີຕ້ອງຕໍ່ໃບອະນຸຍາດດໍາເນີນທຸລະກິດກັບກະຊວງກະສິກໍາ ແລະ ປ່າໄມ້, ຄ່າທໍານຽມ 50,000 ກີບ + 300,000 ກີບ ສໍາລັບຕໍ່ໃບອະນຸຍາດ - ການຕໍ່ໃບອະນຸຍາດດໍາເນີນທຸລະກິດແມ່ນກໍານົດໃຫ້ກວດເບິ່ງຄືນການດໍາເນີນທຸລະກິດປະຈໍາປີນັ້ນ. |

## **ຂັ້ນຕອນທີ 2**: ໃບຢັ້ງຢືນ ແລະ ມາດຕະຖານ

### 2.1: ການຂໍໃບຢັ້ງຢືນສຸຂານາໄມ ແລະ ສຸຂານາໄມພືດ (SPS)

| | |
|---|---|
| **ສະຖານທີ່** | • ກະຊວງກະສິກໍາ ແລະ ປ່າໄມ້<br>• ກົມລ້ຽງສັດ ແລະ ການປະມົງ<br>• ພະແນກກັກກັນພືດ |
| **ເອກະສານທີ່ຕ້ອງການ** | • ໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ<br>• ສໍາເນົາໃບທະບຽນວິສາຫະກິດ<br>• ໃບແຈ້ງໜີ້ (Invoice)<br>• ໃບສະເໜີ |
| **ເອກະສານທີ່ໄດ້ຮັບ** | • ໃບຢັ້ງຢືນສຸຂານາໄມພືດ (SPS)<br>• ໃບອະນຸຍາດສົ່ງອອກສັດປ່າ ແລະ ຊັບພະຍາກອນສັດນໍ້າ |
| **ເປັນເອກະສານບັງຄັບ** | ແມ່ນ, ສໍາລັບສິນຄ້າບາງປະເພດ |
| **ຄ່າທໍານຽມ** | ຄ່າທໍານຽມສໍາລັບການອອກໃບຢັ້ງຢືນສຸຂານາໄມ ແລະ ສຸຂານາໄມພືດໂດຍກະຊວງກະສິກໍາ ແລະ ປ່າໄມ້ ຂຶ້ນກັບນໍ້າໜັກຂອງສິນຄ້າ:<br>• ໃບຢັ້ງຢືນສຸຂານາໄມພືດ= 15.000 ກີບ<br>• ສິນຄ້າໜັກ 5-10 ໂຕນ, ເກັບຄ່າທໍານຽມ 40.000 ກີບ<br>• ສິນຄ້າໜັກ 11-100 ໂຕນ, ເກັບຄ່າທໍານຽມ 65.000 ກີບ<br>• ສິນຄ້າໜັກ 101 ໂຕນ, ເກັບຄ່າທໍານຽມ 90.000 ກີບ |
| **ໄລຍະເວລາທີ່ໃຊ້** | ຂຶ້ນຢູ່ກັບກົດລະບຽບຂອງແຕ່ລະສິນຄ້າ. ປົກກະຕິແມ່ນໃຊ້ເວລາປະມານ 5-10 ວັນລັດຖະການ |
| **ຂໍ້ມູນຕິດຕໍ່** | ໂທ: 856 21 412340 |

| |
|---|
| ສິນຄ້າບາງປະເພດແມ່ນຕ້ອງເຮັດການກວດກາສຸຂານາໄມ ແລະ ສຸຂານາໄມພືດ. ທ່ານສາມາດຄົ້ນຫາລາຍການສິນຄ້າຢູ່ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ ວ່າສິນຄ້າໃດຕ້ອງມີການກວດກາສຸຂານາໄມ ແລະ ສຸຂານາໄມພືດ.<br><br>ສໍາລັບສິນຄ້າທີ່ກ່ຽວຂ້ອງ, ຜູ້ສົ່ງອອກຕ້ອງຂໍໂຄຕາ ແລະ ໃບຢັ້ງຢືນສຸຂານາໄມ ແລະ ສຸຂານາໄມພືດ ຈາກພະແນກກະສິກໍາ ແລະ ປ່າໄມ້ຢູ່ຂັ້ນແຂວງ. ແລ້ວຂະແໜງກະສິກໍາ ແລະ ປ່າໄມ້ຈະສົ່ງວິຊາການເຕັກນິກ (ປົກກະຕິແມ່ນຈາກເຈົ້າໜ້າທີ່ຄຸ້ມຄອງພືດ (PPA) ເພື່ອເຮັດການກວດກາ ແລະ ເກັບຕົວຢ່າງສໍາລັບແຕ່ລະຂັ້ນຕອນເພື່ອອອກໂຄຕາ ແລະ ອອກໃບຢັ້ງຢືນສຸຂານາໄມ້ ແລະ ສຸຂານາໄມພືດ.<br><br>ການຂໍໃບຢັ້ງຢືນສຸຂານາໄມ ແລະ ສຸຂານາໄມພືດ SPS ແມ່ນສາມາດຂໍໄດ້ຈາກ: |

| |
|---|
| ຢູ່ຂັ້ນສູນກາງ, ກົມກະສິກຳ, ກະຊວງກະສິກາ ແລະ ປ່າໄມ້<br>ຢູ່ຂັ້ນແຂວງ ແລະ ນະຄອນຫຼວງວຽງຈັນ, ພະແນກກະສິກຳ ແລະ ປ່າໄມ້<br>ຢູ່ຂັ້ນເມືອງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ |

**ຂັ້ນຕອນທີ 3:** ເອກະສານປະກອບການແຈ້ງພາສີ

3.1: ການແລ່ນໃບອະນຸຍາດສົ່ງອອກ (ສໍາລັບການສົ່ງອອກເຂົ້າ)

| | |
|---|---|
| **ສະຖານທີ່** | ກະຊວງອຸດສາຫະກຳ ແລະ ການຄ້າ, ກົມການນຳເຂົ້າ ແລະ ສົ່ງອອກ |
| **ເອກະສານທີ່ຕ້ອງການ** | • ແບບຟອມຂໍໃບອະນຸຍາດສົ່ງອອກ<br>• ໃບສະເໜີ<br>• ໃບທະບຽນວິສາຫະກິດ<br>• ໃບທະບຽນອາກອນ |
| **ເອກະສານທີ່ໄດ້ຮັບ** | ໃບອະນຸຍາດສົ່ງອອກ |
| **ເປັນເອກະສານບັງຄັບ** | ແມ່ນ, ສໍາລັບບາງຜະລິດຕະພັນ |
| **ຄ່າທຳນຽມ** | 10,000 ກີບ ສໍາລັບກົມການນຳເຂົ້າ ແລະ ສົ່ງອອກ |
| **ໄລຍະເວລາທີ່ໃຊ້** | 30 ວັນ |
| **ຂໍ້ມູນຕິດຕໍ່** | ກະຊວງອຸດສາຫະກຳ ແລະ ການຄ້າ<br>ທີ່ຢູ່: ບ້ານ ໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ<br>ໂທ: 856 21 412 011 |

ແບບຟອມສໍາລັບໃຊ້ໃນການຂໍໃບອະນຸຍາດນຳເຂົ້າ ແລະ ສົ່ງອອກ ແມ່ນຕ້ອງເປັນແບບຟອມທີ່ເຮັດຈາກກົມການນຳເຂົ້າ ແລະ ສົ່ງອອກ. ຂໍ້ກຳນົດຕ່າງໆ ແມ່ນຂຶ້ນກັບປະເພດຂອງສິນຄ້າ ແລະ ກະຊວງທີ່ກ່ຽວຂ້ອງ. ລາຍລະອຽດຂັ້ນຕອນສໍາລັບການຂໍໃບອະນຸຍາດນຳເຂົ້າ ຫຼື ສົ່ງອອກແມ່ນສາມາດເບິ່ງຕາມລິ້ງລຸ່ມນີ້:

ການສົ່ງອອກເພື່ອການຄ້າ: http://www.laotradeportal.gov.la/index.php?r=site/display&id=8
ສິນຄ້າຕ້ອງຫ້າມ: http://www.laotradeportal.gov.la/index.php?r=site/display&id=20#1
ສິນຄ້າທີ່ກຳນົດໃຫ້ມີໃບອະນຸຍາດ: http://www.laotradeportal.gov.la/index.php?r=site/display&id=76
ດຳລັດວ່າດ້ວຍຂັ້ນຕອນການນຳເຂົ້າ ແລະ ສົ່ງອອກຜະລິດຕະພັນເຂົ້າ
http://www.laotradeportal.gov.la/index.php?r=site/display&id=456

ຖ້າຜະລິດຕະພັນກະສິກຳບໍ່ໄດ້ກຳນົດໃຫ້ມີໃບອະນຸຍາດ, ທ່ານສາມາດດຳເນີນຂັ້ນຕອນການແຈ້ງພາສີການນຳເຂົ້າ ຫຼື ສົ່ງອອກຂອງຜະລິດຕະພັນໄດ້ໂດຍກົງກັບເຈົ້າໜ້າທີ່ພາສີ.

3.2: ການແລ່ນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ

| | |
|---|---|
| **ສະຖານທີ່** | • ກະຊວງອຸດສາຫະກຳ ແລະ ການຄ້າ, ກົມການຄ້າ<br>• ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ |
| **ເອກະສານທີ່ຕ້ອງການ** | ຟອມ E (ກະຊວງອຸດສາຫະກຳ ແລະ ການຄ້າ, ກົມການຄ້າ) |
| **ເອກະສານທີ່ໄດ້ຮັບ** | ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ |

| | |
|---|---|
| **ເປັນເອກະສານບັງຄັບ** | ບໍ່ແມ່ນ, ແຕ່ວ່າຈຳເປັນຕ້ອງມີເພື່ອເສຍຄ່າອັດຕາພາສີທີ່ຕ່ຳກວ່າ ຈາກສັນຍາວ່າດ້ວຍການຄ້າເສລີກັບ ສປ ຈີນ |
| **ຄ່າທຳນຽມ** | ຂຶ້ນກັບມູນຄ່າການສົ່ງອອກ:<br>• ແບບຟອມໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຟອມ E: 10,000 ກີບ/ຊຸດ<br>• ມູນຄ່າການສົ່ງອອກຕ່ຳກວ່າ 10,000ໂດລາ, ເກັບຄ່າທຳນຽມ 40,000 ກີບ<br>• ມູນຄ່າການສົ່ງອອກແຕ່ 10,001-30,000 ໂດລາ, ເກັບຄ່າທຳນຽມ 60,000 ກີບ<br>• ມູນຄ່າການສົ່ງອອກແຕ່ 30,001-60,000ໂດລາ, ເກັບຄ່າທຳນຽມ 80,000 ກີບ<br>• ມູນຄ່າການສົ່ງອອກແຕ່ 60,001 ໂດລາຂຶ້ນໄປ, ເກັບຄ່າທຳນຽມ 100,000 ກີບ |
| **ໄລຍະເວລາທີ່ໃຊ້** | 1 ຫາ 2 ມື້ລັດຖະການ |
| **ຂໍ້ມູນຕິດຕໍ່** | ພະແນກຢັ້ງຢືນແຫຼ່ງກຳເນີດ ແລະ ມາດຕະຖານສິນຄ້າ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ<br>ຖະໜົນໄກສອນພົມວິຫານ, ບ້ານໂພນພະເນົາ<br>ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ<br>ຕູ້ ປ.ນ 4596<br>ໂທ: 856 21 453 312 Ext: 118, 119<br>Email: lncci@laocci.com |

ເພື່ອໃຫ້ມີເງື່ອນໄຂສຳລັບການຍົກເວັ້ນອັດຕາຄ່າພາສີໄປຈີນ, ບໍລິສັດຕ້ອງຍື່ນໃບຢັ້ງຢືນການຄ້າເສລີລະຫວ່າງ ອາຊຽນ-ຈີນຂອງປະເທດຕົ້ນທາງ ເອີ້ນໃຫ້ສະເພາະສຳລັບເບື້ອງປະເທດຈີນ, ບໍລິສັດສາມາດຍື່ນຟອມ E ຢູ່ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວເພື່ອຂໍໃບຢັ້ງຢືນສັນຍາການຄ້າເສລີລະຫວ່າງອາຊຽນ-ຈີນ. ບໍ່ໄດ້ບັງຄັບໃຫ້ມີຟອມ E ແຕ່ມັນສາມາດຊ່ວຍໃນການຫຼຸດອັດຕາພາສີໃຫ້ຕ່ຳລົງ ຈາກສັນຍາການຄ້າເສລີກັບ ສປ ຈີນ.

### 3.3: ການແຈ້ງພາສີ

| | |
|---|---|
| **ສະຖານທີ່** | ກະຊວງການເງິນ, ກົມພາສີ |
| **ເອກະສານທີ່ຕ້ອງການ** | • ແບບຟອມໃບແຈ້ງພາສີ<br>• ໃບແຈ້ງລາຄາທາງການຄ້າ ຫຼື ສັນຍາຊື້-ຂາຍ<br>• ໃບບິນຢັ້ງຢືນການຂົນສົ່ງສິນຄ້າ<br>• ໃບລາຍການສິນຄ້າທີ່ສົ່ງ (ຖ້າມີ)<br>• ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ<br>• ໃບແຈ້ງຄ່າໃຊ້ຈ່າຍ ຫຼື ໃບແຈ້ງຂັ້ນຕອນດຳເນີນການແຈ້ງ (ກໍລະນີນຳເຂົ້າສິນຄ້າດິບ) |
| **ເອກະສານທີ່ໄດ້ຮັບ** | • ໃບບິນຢັ້ງຢືນການຈ່າຍພາສີ<br>• ໃບສົ່ງປ່ອຍສິນຄ້າ |
| **ເປັນເອກະສານບັງຄັບ** | ແມ່ນ |
| **ຄ່າທຳນຽມ** | ອຸດຕາພາສີຂຶ້ນກັບແຕ່ລະປະເພດສິນຄ້າ |
| **ໄລຍະເວລາທີ່ໃຊ້** | ມື້ດຽວກັນກັບສົ່ງອອກ |
| **ຂໍ້ມູນຕິດຕໍ່** | ກົມພາສີ<br>ໂທ: 856 21 213810, 223520 |

ເຄື່ອງທຸກຢ່າງທີ່ໄດ້ສົ່ງອອກຈາກ ສປປ ລາວ ຕ້ອງມີການແຈ້ງພາສີ. ສປປ ລາວ ໃຊ້ 2 ແບບສຳລັບການແຈ້ງພາສີ: ຂັ້ນຕອນແຈ້ງທົ່ວໄປ, ແລະ ຂັ້ນຕອນການແຈ້ງແບບ ASYCUDA.

| |
|---|
| ການແຈ້ງພາສີໝາຍເຖິງການຍື່ນຟອມ ACDD ທີ່ເຊັນແລ້ວ ພ້ອມກັບເອກະສານຄັດຕິດອື່ນໆ. ການແຈ້ງພາສີຕ້ອງຍື່ນພາຍໃນ 15 ວັນ ຈາກມື້ທີ່ຍື່ນເອກະສານກັບພາສີ (ຕົວຢ່າງ: ການແຈ້ງເອກະສານ) ເປັນການແຈ້ງພາສີກ່ຽວກັບມື້ທີ່ເຄື່ອງຈະມາຮອດ.<br><br>ໃນເວລາພິມຂໍ້ມູນ, ການແຈ້ງພາສີແບບອັດຕະໂນມັດຂອງລະບົບ ASYCUDA ໄດ້ຕິດຕັ້ງ ແລະ ໄດ້ນໍາໃຊ້ຢູ່ດ່ານພາສີສາກົນຈໍານວນ 11 ແຫ່ງ, ໃນອະນາຄົດການແຈ້ງພາສີຜ່ານລະບົບ ASYCUDA ຈະຖືກນໍາໃຊ້ຢູ່ທຸກໆ ດ່ານສາກົນໃນທົ່ວປະເທດ. |

### 3.4: ຂໍ້ກໍານົດຂອງພໍ່ຄ້າຄົນຈີນ

| | |
|---|---|
| **ສະຖານທີ່** | ບຸກຄົນທີສາມ |
| **ເອກະສານທີ່ຕ້ອງການ** | N/A |
| **ເອກະສານທີ່ໄດ້ຮັບ** | ໃບຢັ້ງຢືນຕ່າງໆທີ່ລູກຄ້າກໍານົດໃຫ້ມີ |
| **ເປັນເອກະສານບັງຄັບ** | ແມ່ນ |
| **ຄ່າທໍານຽມ** | ຂຶ້ນກັບວ່າໃບຢັ້ງຢືນທີ່ຕ້ອງການ ແລະ ຄ່າບໍລິການຂອງບຸກຄົນທີ່ສາມ |
| **ໄລຍະເວລາທີ່ໃຊ້** | N/A |
| **ຂໍ້ມູນຕິດຕໍ່** | N/A |
| ອາດຈະກໍານົດໃຫ້ລູກຄ້າປາຍທາງຕ້ອງມີໃບຢັ້ງຢືນອື່ນໆເພື່ອໃຊ້ໃນການສົ່ງອອກຜະລິດຕະພັນເຄື່ອງນຸ່ງຫົ່ມໄປຈີນ. ບໍລິສັດຈະຕ້ອງປະສານງານກັບຜູ້ຊື້ເພື່ອຊອກເບິ່ງວ່າມີໃບຢັ້ງຢືນຫຍັງແດ່ທີ່ຕ້ອງມີ ແລະ ຈ້າງບໍລິສັດບຸກຄົນທີ່ສາມເພື່ອເຮັດການທົດລອງສິນຄ້າກ່ອນສົ່ງອອກໄປຈີນ. | |

## **ຂັ້ນຕອນທີ 4:** ການເຄື່ອນຍ້າຍສິນຄ້າ ແລະ ການຈ່າຍພາສີ-ອາກອນ

### 4.1: ຈ້າງງຜູ້ຂົນສົ່ງລະຫວ່າງປະເທດ / ຂົນສົ່ງເຄື່ອງ

| | |
|---|---|
| **ສະຖານທີ່** | ຜູ້ຂົນສົ່ງລະຫວ່າງປະເທດ |
| **ເອກະສານທີ່ຕ້ອງການ** | • ແບບຟອມແຈ້ງພາສີ<br>• ໃບອະນຸຍາດສົ່ງອອກ<br>• ໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ<br>• ໃບແຈ້ງລາຄາຫາຜູ້ຊື້<br>• ໃບລາຍການສິນຄ້າ<br>• ໃບສັນຍາຊື້-ຂາຍ<br>• ຫຼັກຖານການໂອນເງິນ<br>• ຕົວຢ່າງສິນຄ້າ<br>• ໃບຢັ້ງຢືນສຸຂານາໄມ ແລະ ສຸຂານາໄມພືດ SPS<br>• ໃບຢັ້ງຢືນ ແລະ ເອກະສານອື່ນໆ ຕາມຜູ້ຊື້ໄດ້ຂໍ |
| **ເອກະສານທີ່ໄດ້ຮັບ** | ໃບສະເໜີລາຄາສໍາລັບການຈັດສົ່ງສິນຄ້າໄປຈີນ |
| **ເປັນເອກະສານບັງຄັບ** | ແມ່ນ |
| **ຄ່າທໍານຽມ** | ຂຶ້ນກັບແຕ່ລະຜູ້ຂົນສົ່ງ |
| **ໄລຍະເວລາທີ່ໃຊ້** | N/A |
| **ຂໍ້ມູນຕິດຕໍ່** | ຂຶ້ນກັບແຕ່ລະການຈ້າງຜູ້ຂົນສົ່ງ |
| ບໍລິສັດທີ່ຈົດທະບຽນໃນລາວສ່ວນໃຫ່ຍທີ່ຕ້ອງການສົ່ງອອກໄປຈີນຈະຕ້ອງຈ້າງບໍລິສັດຂົນສົ່ງລະຫວ່າງປະເທດເພື່ອຂົນສົ່ງເຄື່ອງ. ມີ | |

| |
|---|
| ຫຼາຍກໍລະນີທີ່ພວກເຮົາແນະນໍາເພື່ອໃຫ້ຂັ້ນຕອນການສົ່ງໄປຈີນໄວຂຶ້ນ. ລາຍຊື່ຜູ້ຂົນສົ່ງລະຫວ່າງປະເທດທີ່ເຄີຍເຮັດການຂົນສົ່ງໄປຈີນມີຢູ່ທ້າຍບົດລາຍງານນີ້. |

4.2: ການຈ່າຍພາສີ-ອາກອນ

| | |
|---|---|
| **ສະຖານທີ່** | ກະຊວງການເງິນ, ກົມພາສີ |
| **ເອກະສານທີ່ຕ້ອງການ** | ໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ |
| **ເອກະສານທີ່ໄດ້ຮັບ** | • ໃບບິນຢັ້ງຢືນການຈ່າຍພາສີ<br>• ໃບສົ່ງປ່ອຍສິນຄ້າ |
| **ເປັນເອກະສານບັງຄັບ** | ແມ່ນ |
| **ຄ່າທໍານຽມ** | ຂຶ້ນກັບແຕ່ລະຜະລິດຕະພັນ, 0% ສໍາລັບຜະລິດຕະພັນເຄື່ອງນຸ່ງຫົ່ມ |
| **ໄລຍະເວລາທີ່ໃຊ້** | ມື້ດຽວກັນກັບມື້ທີ່ສົ່ງອອກ |
| **ຂໍ້ມູນຕິດຕໍ່** | ກົມພາສີ<br>ໂທ 856 21 213810, 021 223520 |

| |
|---|
| ເພື່ອສົ່ງເສີມການສົ່ງອອກຂອງຜະລິດຕະພັນບາງປະເພດ, ລວມທັງຜະລິດຕະພັນເຄື່ອງນຸ່ງຫົ່ມສ່ວນໃຫ່ຍ, ຜະລິດຕະພັນສ່ວນໃຫ່ຍໄດ້ມາຈາກຊັບພະຍາກອນທໍາມະຊາດ ຫຼື ຜະລິດຕະພັນຜະລິດຈາກໂຮງງານແມ່ນໄດ້ຮັບການຍົກເວັ້ນການຈ່າຍອັດຕາພາສີສົ່ງອອກ.<br><br>ອັດຕາພາສີສົ່ງອອກສໍາລັບຜະລິດຕະພັນເຄື່ອງນຸ່ງຫົ່ມສາມາຄົ້ນຫາໄດ້ຕາມລິ້ງເວັບໄຊ້ລຸ່ມນີ້:<br>http://www.laotradeportal.gov.la/index.php?r=tradeInfo/index |

### 1.2 ຂໍ້ກຳນົດສະເພາະຂອງຈີນ

ຂັ້ນຕອນການນຳເຂົ້າຂອງຈີນປະກອບດ້ວຍ 7 ຂັ້ນຕອນ, ສ່ວນໃຫ່ຍແມ່ນເຮັດສຳເລັດກ່ອນທີ່ສິນຄ້າຈະຖືກສົ່ງໄປຈີນ

ຮູບທີ 2: ຂັ້ນຕອນນຳເຂົ້າຂອງ ສປ ຈີນ



**ຂັ້ນຕອນ 1:** ການກວດເບິ່ງລະຫັດ HS

| | |
|---|---|
| **ສະຖານທີ່** | ຄົ້ນຫາທາງອອນລາຍ, e-to-china |
| **ເອກະສານທີ່ໄດ້ຮັບ** | ລະຫັດ HS ສິນຄ້າຂອງເບື້ອງຈີນ |

ບັນດາວິສາຫະກິດຂະໜາດນ້ອຍ ແລະ ກາງຈະຕ້ອງເຂົ້າໃຈວ່າສິນຄ້າຂອງເຂົາເຈົ້າຕົກຢູ່ໃນລະຫັດ HS ໃດ, ເພື່ອປ້ອງກັນບັນຫາຢູ່ດ່ານພາສີ ແລະ ເພື່ອຮັບປະກັນວ່າອັດຕາພາສີທີ່ຈ່າຍແມ່ນຖືກຕ້ອງ. ວິສາຫະກິດຂະໜາດນ້ອຍ ແລະ ກາງຕ້ອງຮັບປະກັນວ່າລະຫັດ HS ຢູ່ສິນຄ້າຂອງເຂົາເຈົ້າມີ 8 ຕົວເລກ.

ຕົວຢ່າງ, ສໍາລັບການສົ່ງອອກຖົ່ວຂຽວລະຫັດ HS ແມ່ນ 07133190, ແລະ ເປັນປະເພດ “ເມັດຖົ່ວແຫ້ງຕ່າງໆຂອງສາຍພັນຖົ່ວດໍາ (L.)”

**ຂັ້ນຕອນ 2:** ການຈົດທະບຽນກັບອົງການບໍລິຫານການຄຸ້ມຄອງ, ກວດກາຄຸນນະພາບ ແລະ ການກັກກັນພືດ ແລະ ສັດຂອງ ສປ ຈີນ (AQSIQ)

| | |
|---|---|
| **ສະຖານທີ່** | ຫ້ອງການນໍາເຂົ້າ ແລະ ສົ່ງອອກອາຫານປອດໄພຂອງອົງການບໍລິຫານການຄຸ້ມຄອງ ກວດກາຄຸນນະພາບ ແລະ ກັກກັນພືດ ແລະ ສັດຂອງ ສປ ຈີນ (AQSIQ) |
| **ເອກະສານທີ່ຕ້ອງການ** | ແບບຟອມສໍາລັບຜູ້ສົ່ງອອກສິນຄ້າປະເພດອາຫານ, ປະກອບມີຂໍ້ມູນດັ່ງຕໍ່ໄປນີ້:<br>• ຜູ້ສົ່ງອອກ ແລະ ຊື່ຕົວແທນທີ່ແລ່ນເອກະສານ<br>• ທີ່ຢູ່, ຂົງເຂດ, ປະເທດ<br>• ຊື່ ແລະ ເບີໂທຕິດຕໍ່<br>• ປະເພດອາຫານ |
| **ເອກະສານທີ່ໄດ້ຮັບ** | ໃບຢັ້ງຢືນ/ໜັງສືຮັບຮອງການຈົດທະບຽນຈາກອົງການບໍລິຫານການຄຸ້ມຄອງ ກວດກາຄຸນນະພາບ ແລະ ກັກກັນພືດ ແລະ ສັດຂອງ ສປ ຈີນ (AQSIQ) |
| **ເປັນເອກະສານບັງຄັບ** | ແມ່ນ |
| **ຄ່າທໍານຽມ** | 230 ໂດລາ (ທຸກໆ 3 ປີ) |
| **ໄລຍະເວລາທີ່ໃຊ້** | 2 ອາທິດ |
| **ຂໍ້ມູນຕິດຕໍ່** | https://www.aqsiq.net/food-register.htm<br>ສູນຈົດທະບຽນ ແລະ ບໍລິການເຮັດໃບຢັ້ງຢືນຂອງອົງການບໍລິຫານການຄຸ້ມຄອງ ກວດກາຄຸນນະພາບ ແລະ ກັກກັນພືດ ແລະ ສັດຂອງ ສປ ຈີນ (AQSIQ)<br>ເບີໂທ: +86 (010) 8202 – 4319 #1802<br>No. 9-1 Madian East Road Haidian District Beijing |

ບັນດາວິສາຫະກິດຂະໜາດນ້ອຍ ແລະ ກາງທີ່ສົ່ງອອກສິນຄ້າກະສິກໍາໄປຈີນຈະຕ້ອງຈົດທະບຽນກັບອົງການບໍລິຫານການຄຸ້ມຄອງ ກວດກາຄຸນນະພາບ ແລະ ກັກກັນພືດ ແລະ ສັດຂອງ ສປ ຈີນ (AQSIQ). ຂັ້ນຕອນແລ່ນເອກະສານແບບທາງການແມ່ນຍັງບໍ່ຊັດເຈນ ແລະ ຫຍຸ້ງຍາກສໍາລັບຄົນທີ່ບໍ່ໄດ້ຢູ່ໃນປະເທດຈີນ ແລະ ບໍ່ໄດ້ຮັບການຊ່ວຍເຫຼືອ. ເນື່ອງຈາກບັນຫານີ້ ຂັ້ນຕອນການແລ່ນເອກະສານສາມາດເຮັດໄດ້ຈາກນອກປະເທດຈີນໂດຍຜ່ານບຸກຄົນທີ 3 ທີ່ຊ່ວຍອໍານວຍຄວາມສະດວກການແລ່ນເອກະສານ, ເຊັ່ນໃນເວບໄຊ້ມີຂໍ້ມູນຕິດຕິດຕໍ່ຜູ້ທີ່ຊ່ວຍແລ່ນເອກະສານ

**ຂັ້ນຕອນ 3:** ການຂໍໃບອະນຸຍາດນຳເຂົ້າ

| | |
|---|---|
| **ສະຖານທີ່** | ກະຊວງການຄ້າຂອງສາທາລະນະລັດ ປະຊາຊົນຈີນ ຫຼື ຜູ້ຕາງໜ້າຂອງເຂດພາກພື້ນ |
| **ເອກະສານທີ່ຕ້ອງການ** | • ໃບທະບຽນວິສາຫະກິດ<br>• ໃບຢັ້ງຢືນເລກລະຫັດອົງການ<br>• ໃບບັນທຶກການຈົດທະບຽນຈາກຜູ້ດຳເນີນການຄ້າຕ່າງປະເທດ<br>• ຕົ້ນສະບັບ ຫຼື ສຳເນົາໃບແຈ້ງພາສີ<br>• ສັນຍາກັບບໍລິສັດເກັບມ້ຽນສິນຄ້າໃນຫ້ອງເຢັນ (ສະເພາະສິນຄ້າປະເພດຊີ້ນ) |
| **ເອກະສານທີ່ໄດ້ຮັບ** | ໃບອະນຸຍາດນຳເຂົ້າ |
| **ເປັນເອກະສານບັງຄັບ** | ແມ່ນ, ຖ້າແມ່ນສິນຄ້າທີ່ຖືກຈຳກັດ |
| **ຄ່າທຳນຽມ** | ບໍ່ເສຍຄ່າທຳນຽມ |
| **ໄລຍະເວລາທີ່ໃຊ້** | ຂຶ້ນກັບໃບຢັ້ງຢືນ ແລະ ໃບອະນຸຍາດທີ່ຕ້ອງການເຮັດ |
| **ຂໍ້ມູນຕິດຕໍ່** | No.2 Dong Chang'an Avenue,<br>Beijing China (100731)<br>ໂທ: +86-10-53771360 / 1362 / 1359 ແຟັກ: +86-10-53771311 |

ສິນຄ້າກະສິກຳແມ່ນບໍ່ຈຳເປັນຕ້ອງມີໃບອະນຸຍາດນຳເຂົ້າທົ່ວໄປ, ແຕ່ວ່າບາງສິນຄ້າເພື່ອນຳເຂົ້າອາດຈະຕ້ອງການໃບຢັ້ງຢືນການກວດກາ ແລະ ກັກກັນສິນຄ້າ (ທຸກໆສິນຄ້າຕ້ອງມີໃບລົງທະບຽນ AQSIQ ຫຼັງຈາກໄດ້ໃບຢັ້ງຢືນການກວດກາ). ເຂົ້າບາງປະເພດຕ້ອງມີໃບຢັ້ງຢືນໂຄຕາ. ຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ກາງ ຄວນຮ່ວມມືກັບຜູ້ນຳເຂົ້າ ເພື່ອຢືນຢັນວ່າໃບຢັ້ງຢືນ ຫຼື ໃບທະບຽນໃດທີ່ຈຳເປັນ.

ຂັ້ນຕອນ 4: ມາດຕະຖານສິນຄ້າຂອງຈີນ

4.1: ຂໍ້ກຳນົດກາໝາຍສິນຄ້າ

| | |
|---|---|
| **ສະຖານທີ່** | ຫ້ອງການກວດກາ ແລະ ກັກກັນພືດ ແລະ ສັດຂອງ ສປ ຈີນ |
| **ເອກະສານທີ່ຕ້ອງການ** | ແບບຟອມຂໍໃບຢັ້ງຢືນການກວດກາການຕິດສະຫຼາກສິນຄ້ານຳເຂົ້າ. ກຳນົດເອກະສານຕິດຄັດ:<br>• ຊື່ ແລະ ເຄື່ອງໝາຍການຄ້າຂອງສິນຄ້າ<br>• ສ່ວນປະສົມ<br>• ນໍ້າໜັກສຸດທິ ແລະ ສິ່ງທີ່ບັນຈຸ<br>• ຊື່, ທີ່ຢູ່ ແລະ ເບີໂທຕິດຕໍ່ຂອງຜູ້ຜະລິດ<br>• ວັນ, ເດືອນ, ປີ ທີ່ຜະລິດ ແລະ ຄຳແນະນຳໃນການເກັບຮັກສາສິນຄ້າ<br>• ຊື່ ແລະ ທີ່ຢູ່ ຜູ້ຫຸ້ມຫໍ່ ແລະ ຈຳໜ່າຍສິນຄ້າ<br>• ລະຫັດສິນຄ້າ<br>• ປະເທດຕົ້ນທາງ<br>• ການຢັ້ງຢືນມາດຕະຖານສິນຄ້າ ແລະ/ຫຼື ໄລຍະເກັບສິນຄ້າໄວ້ໄດ້ (ວັນເດືອນ/ເດືອນ/ປີ)<br>• ວິທີການໃຊ້<br>• ຄຳອະທິບາຍສິນຄ້າພາສາອັງກິດແປເປັນພາສາຈີນ |
| **ເອກະສານທີ່ໄດ້ຮັບ** | ອະນຸຍາດສະຫຼາກສິນຄ້າໂດຍຫ້ອງການກວດກາ ແລະ ກັກກັນພືດ ແລະ ສັດຂອງຈີນ |
| **ເປັນເອກະສານບັງຄັບ** | ແມ່ນ |
| **ຄ່າທຳນຽມ** | ຍັງບໍ່ຊັດເຈນ |
| **ໄລຍະເວລາທີ່ໃຊ້** | 1 ຫາ 2 ອາທິດ |

| | |
|---|---|
| **ຂໍ້ມູນຕິດຕໍ່** | ຫ້ອງການບໍລິຫານທົ່ວໄປຂອງການຄວບຄຸມຄຸນນະພາບ, ການກວດກາ ແລະ ກັກກັນພືດ ແລະ ສັດຂອງ ສປ ຈີນ<br>General Administration of Quality Supervision, Inspection and Quarantine<br>No. 9, Madian East Road<br>Haidian District<br>Beijing100088<br>People's Republic of China |

ການກວດກາ ແລະ ກັກກັນພືດ ແລະ ສັດຂອງຈີນ ແບບທາງການແມ່ນຈະຕ້ອງໄດ້ເຮັດການກວດກາສະຫຼາກສິນຄ້າຢູ່ຈຸດທີ່ນໍາສິນຄ້າເຂົ້າ. ການຢັ້ງຢືນສະຫຼາກສິນຄ້າຈະຕ້ອງໄດ້ຮັບການກວດກາຈາກຫ້ອງການກວດກາ ແລະ ກັກກັນພືດ ແລະ ສັດຂອງຈີນ. ຂັ້ນຕອນນີ້ແມ່ນໃຊ້ເວລາ 1 ຫາ 2 ອາທິດ. ຕອນແລ່ນເອກະສານນີ້ ທ່ານຕ້ອງພິຈາລະນາສິ່ງທີ່ໄດ້ລະບຸໃນສັນຍາກັບຜູ້ນໍາເຂົ້າ ຫຼື ຈັດຈໍາໜ່າຍວ່າທ່ານຍັງຄົງຮັກສາການເປັນເຈົ້າຂອງໃນສະຫຼາກສິນຄ້າ ຫຼັງຈາກໄດ້ຮັບການອະນຸຍາດແລ້ວ.

## 4.2: ຂໍ້ກໍານົດການຫຸ້ມຫໍ່

| | |
|---|---|
| **ສະຖານທີ່** | ຫ້ອງການກວດກາ ແລະ ກັກກັນພືດ ແລະ ສັດຂອງຈີນ |
| **ເອກະສານທີ່ຕ້ອງການ** | ບໍ່ມີເອກະສານ, ມີພຽງແຕ່ຕົວຢ່າງການຫຸ້ມຫໍ່ສິນຄ້າ |
| **ເອກະສານທີ່ໄດ້ຮັບ** | ອະຍາດການຫຸ້ມຫໍ່ຈາກຫ້ອງການກວດກາ ແລະ ກັກກັນພືດ ແລະ ສັດຂອງຈີນ |
| **ເປັນເອກະສານບັງຄັບ** | ແມ່ນ |
| **ຄ່າທໍານຽມ** | ຍັງບໍ່ຊັດເຈນ |
| **ໄລຍະເວລາທີ່ໃຊ້** | ເຮັດໃນຂະນະທີ່ນໍາເຂົ້າສິນຄ້າ |
| **ຂໍ້ມູນຕິດຕໍ່** | ຫ້ອງການບໍລິຫານທົ່ວໄປຂອງການຄວບຄຸມຄຸນນະພາບ, ການກວດກາ ແລະ ກັກກັນພືດ ແລະ ສັດຂອງ ສປ ຈີນ<br>General Administration of Quality Supervision, Inspection and Quarantine<br>No. 9, Madian East Road<br>Haidian District<br>Beijing 100088<br>People's Republic of China |

ການຫຸ້ມຫໍ່ສິນຄ້າຕ້ອງສອດຄ່ອງກັບລະບຽບຂອງທາງການແພດ ແລະ ຄວາມປອດໄພ, ໝາຍຄວາມວ່າການຫຸ້ມຫໍ່ຈະຕ້ອງບໍ່ເປັນພິດ ແລະ ອັນຕະລາຍ. ການຫຸ້ມຫໍ່ດ້ວຍໄມ້ຕ້ອງມີເຄື່ອງໝາຍ IPPC ຫຼື ສິນຄ້າຈະຕ້ອງມີຂໍ້ກໍານົດເພີ່ມຕື່ມອື່ນໆ.

ການຫຸ້ມຫໍ່ສິນຄ້າຕ້ອງປະຕິບ ດຕາມລະບຽບການຫຸ້ມຫໍ່ສິນຄ້າທີ່ເພີ່ມຂຶ້ນ. ພາຍໃຕ້ລະບຽບການຫຸ້ມຫໍ່ນີ້ຕ້ອງມີດັ່ງນີ້:

- ເຮັດຈາກວັດສະດຸທີ່ສາມາດແຍກອອກຈາກກັນໄດ້ງ່າຍ. ວັດສະດຸຫຸ້ມຫໍ່ທີ່ເຮັດມາຈາກວັດສະດຸທີ່ສາມາດນໍາກັບມາໃຊ້ໄດ້ແມ່ນຈະໄດ້ຮັບການພິຈາລະນາເປັນພິເສດ.
- ວັດສະດຸຫຸ້ມຫໍ່ຄວນມີຫຼາຍຮູບແບບ ແລະ ສາມາດພັບເກັບຮັກສາໄດ້.
- ຄວນຫຼີກລ່ຽງວັດສະດຸ ຫຸ້ມຫໍ່ທີ່ມີໂຄງສ້າງການຊັບຊ້ອນ ແລະ ທັບຊ້ອນກັນ.
- ວັດສະດຸ ຫຸ້ມຫໍ່ບໍ່ຄວນມີລາຄາສູງເກີນໄປ.

**ຂັ້ນຕອນທີ 5:** ການຮວບຮວມເອກະສານທີ່ກຳນົດ

| | |
|---|---|
| **ສະຖານທີ່** | ຜູ້ຊື້, ຜູ້ຂົນສົ່ງ, ແລະ ການສົ່ງຊື້ - ເອກະສານທີ່ກ່ຽວຂ້ອງ |
| **ເອກະສານທີ່ຕ້ອງການ** | • ໃບຢັ້ງຢືນ ຫຼື ໃບອະນຸຍາດທຸກຢ່າງທີ່ກ່ຽວຂ້ອງ (ຖ້າມີ)<br>• ແບບຟອມແຈ້ງພາສີ<br>• ໃບຂົນສົ່ງສິນຄ້າ<br>• ສັນຍາຊື້-ຂາຍ<br>• ໃບແຈ້ງລາຄາທາງການຄ້າ<br>• ລາຍການສິນຄ້າ<br>• ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ<br>• ລາຍລະອຽດ:<br>1. ຊື່ສິນຄ້າ<br>2. ວິທີການກະກຽມ ຫຼື ເກັບຮັກສາ (ໝາກຖົ່ວ, ແປ້ງ, ແລະ ອື່ນໆ. ຂົ້ວແລ້ວ ແລະ ບໍ່ມີກາເຟອີນ)<br>3. ປະເພດ ຫຼື ສາຍພັນ<br>4. ພື້ນທີ່ປູກພືດ; (ຈະໄດ້ໃຊ້ສຳລັບການແຈ້ງກັບພາສີຊຽງໄຮເທົ່ານັ້ນ)<br>5. ສາຍພັນກາເຟ (ຖ້າມີ)<br>6. ຍີ່ຫໍ້ |
| **ເອກະສານທີ່ໄດ້ຮັບ** | ບໍ່ມີຂໍ້ມູນ |
| **ເປັນເອກະສານບັງຄັບ** | ແມ່ນ |
| **ຄ່າທຳນຽມ** | ບໍ່ມີຂໍ້ມູນ |
| **ໄລຍະເວລາທີ່ໃຊ້** | ບໍ່ມີຂໍ້ມູນ |
| **ຂໍ້ມູນຕິດຕໍ່** | ບໍ່ມີຂໍ້ມູນ |

ທຸລະກິດຂະໜາດນ້ອຍ ແລະ ກາງຈະຕ້ອງຮວບຮວມເອກະສານທີ່ກ່ຽວຂ້ອງທີ່ພາສີຂອງຈີນກຳນົດໃຫ້ມີເມື່ອນຳເຂົ້າສິນຄ້າເຂົ້າຈີນ. ການຮັບປະກັນວ່າເອກະສານທຸກຢ່າງໄດ້ຖືກຮວບຮວມໝົດແລ້ວຈະຊ່ວຍປ້ອງກັນບໍ່ໃຫ້ການຂົນສົ່ງສິນຄ້າລ່າຊ້າ.

**ຂັ້ນຕອນທີ 6:** ການກະກຽມຕົວຢ່າງສິນຄ້າ

| | |
|---|---|
| **ສະຖານທີ່** | ເຮັດຢູ່ດ່ານກວດກາພາສີ |
| **ເອກະສານທີ່ຕ້ອງການ** | ບໍ່ມີຂໍ້ມູນ |
| **ເອກະສານທີ່ໄດ້ຮັບ** | ຫຼັງຈາກໄດ້ໃບຢັ້ງຢືນການກວດກາສິນຄ້າ |
| **ເປັນເອກະສານບັງຄັບ** | ແມ່ນ, ຖ້າມີ |
| **ຄ່າທຳນຽມ** | ບໍ່ມີຂໍ້ມູນ |
| **ໄລຍະເວລາທີ່ໃຊ້** | ຂຶ້ນກັບແຕ່ລະສິນຄ້າ |
| **ຂໍ້ມູນຕິດຕໍ່** | ຫ້ອງການບໍລິຫານທົ່ວໄປຂອງ ການຄວບຄຸມຄຸນນະພາບ, ການກວດກາ ແລະ ກັກກັນພືດ ແລະ ສັດຂອງ ສປ ຈີນ<br>General Administration of Quality Supervision, Inspection and Quarantine<br>No. 9, Madian East Road |

| | |
|---|---|
| | Haidian District<br>Beijing100088<br>People's Republic of China |

ໃນເວລານຳເຂົ້າສິນຄ້າ, ອົງການ AQSIQ ຈະກວດຕົວຢ່າງສິນຄ້າເພື່ອຮັບປະກັນວ່າໄດ້ປະຕິບັດຕາມກົດໝາຍ ແລະ ມາດຕະຖານຂອງຈີນ, ລວມທັງການຕິດສະຫຼາກ ແລະ ການຫຸ້ມຫໍ່. ທັນທີທີ່ສິນຄ້າໄດ້ຮັບອະນຸຍາດ ຈະໄດ້ໃບຢັ້ງຢືນການກວດກາສິນຄ້າ ແລະ ສິນຄ້າຈະໄດ້ຮັບການແຈ້ງເພື່ອນຳເຂົ້າ. ການຮັບປະກັນວ່າການຫຸ້ມຫໍ່ ແລະ ອື່ນໆ ທີ່ໄດ້ກຳນົດເປັນໄປຕາມເວລາຈະຊ່ວຍຮັບປະກັນວ່າການຂົນສົ່ງສິນຄ້າຈະບໍ່ລ່າຊ້າ

## **ຂັ້ນຕອນ 7:** ການຂົນສົ່ງເຄື່ອງ ແລະ ການຈ່າຍພາສີ

| | |
|---|---|
| **ສະຖານທີ່** | ຜູ້ຂົນສົ່ງ |
| **ເອກະສານທີ່ຕ້ອງການ** | ຕ້ອງຮອບຮວມເອກະສານທີ່ຜ່ານມາທັງໝົດ |
| **ເອກະສານທີ່ໄດ້ຮັບ** | ບໍ່ມີຂໍ້ມູນ |
| **ເປັນເອກະສານບັງຄັບ** | ແມ່ນ |
| **ຄ່າທຳນຽມ** | ຂຶ້ນກັບອັດຕາພາສີແຕ່ລະສິນຄ້າ |
| **ໄລຍະເວລາທີ່ໃຊ້** | ບໍ່ມີຂໍ້ມູນ |
| **ຂໍ້ມູນຕິດຕໍ່** | ຫ້ອງການສັງລວມບໍລິຫານພາສີຂອງ ສປ ຈີນ<br>General Administration of Customs of the People’s Republic of China<br>No.6. Jianguomennei Avenue, Dongcheng District, Beijing, China<br>Postcode: 100730<br>ແລະ ທ່ານ ຍັງສາມາດປະສານນຳຫ້ອງການທີ່ປຶກສາທູດເສດຖະກິດ ແລະ ການຄ້າ ປະຈຳ ສປ ຈີນ ທີ່ນະຄອນຫລວງປັກກິ່ງ<br>Address: 11 Salitun Dongsijie, Beijing 100600, China<br>ໂທຣ: + 86 106532 3601 ແຟັກ: + 866532 6748<br>ແລະ ທ່ານ ຍັງສາມາດປະສານນຳຫ້ອງການທີ່ປຶກສາທູດເສດຖະກິດ ແລະ ການຄ້າ ສປ ຈີນ ປະຈຳ ລາວ ທີ່ນະຄອນຫລວງວຽງຈັນ<br>ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ ນະຄອນຫລວງວຽງຈັນ<br>ໂທຣ: + 856-21 -315105 |

ຂັ້ນຕອນສັດທ້າຍຂອງການນຳເຂົ້າແມ່ນການຂົນສົ່ງສິນຄ້າ ແລະ ການຈ່າຍພາສີ. ວິສາຫະກິດຂະໜາດນ້ອຍ ແລະ ກາງ ຈະຕ້ອງພົວພັນໃກ້ຊິດກັບຜູ້ຂົນສົ່ງເພື່ອຮັບປະກັນວ່າການຂົນສົ່ງໄດ້ຜ່ານການແຈ້ງ ແລະ ໄດ້ຈ່າຍອັດຕາພາສີຖືກຕ້ອງ ແລະ ສຸດທ້າຍ ແມ່ນສຳລັບສິນຄ້າທີ່ຈະສົ່ງ ແລະ ອອກໄປຫາຜູ້ຊື້.

# 6. ສ່ວນເພີ່ມຕື່ມ

**6.1 ຂໍ້ກໍານົດເງື່ອນໄຂສຸຂານາໄມພືດກ່ຽວກັບການສົ່ງອອກຂອງ ສປປ ລາວ ໄປ ສປ ຈີນ ລະຫວ່າງກະຊວງກະສິກໍາ ແລະ ປ່າໄມ້ແຫ່ງ ສປປ ລາວ ແລະ ອົງການບໍລິຫານການຄຸ້ມຄອງ, ກວດກາຄຸນນະພາບ ແລະ ການກັກກັນພືດ ແລະ ສັດແຫ່ງ ສປປ ຈີນ**

ເພື່ອຮັບປະກັນຄວາມປອດໄພໃນການສົ່ງອອກເຂົ້າຂອງ ສປປ ລາວ ໄປ ສປ ຈີນ ແລະ ທັງຮັບປະກັນຄວາມປອດໄພຂອງຜົນຜະລິດກະສິກໍາ, ອຸດສາຫະກໍາປ່າໄມ້ ແລະ ນິເວດວິທະຍາຂອງ ສປ ຈີນ ໂດຍອີງໃສ່ຜົນການວິໄຈການປະເມີນຄວາມສ່ຽງສັດຕູພືດ ແລະ ຫຼັກການຂໍ້ກໍານົດເງື່ອນໄຂໃນການນໍາໃຊ້ມາດຕະການສຸຂາອານາໄມ ແລະ ສຸຂາອານາໄມພືດຂອງອົງການການຄ້າໂລກທີ່ກ່ຽວຂ້ອງ (SPS Protocal) ກະຊວງກະສິກໍາ ແລະ ປ່າໄມ້ແຫ່ງ ສປປ ລາວ (ຂຽນຫຍໍ້ວ່າ: ຝ່າຍລາວ) ແລະ ອົງການບໍລິຫານການຄຸ້ມຄອງ, ກວດກາຄຸນນະ ພາບ ແລະ ການກັກກັນພືດ ແລະ ສັດແຫ່ງ ສປ ຈີນ (ຂຽນຫຍໍ້ວ່າ: ຝ່າຍຈີນ) ຜ່ານການປຶກສາຫາລືປະສານສົມທົບກັນຢ່າງມິດໄມຕີ ແລະ ໄດ້ຕົກລົງກ່ຽວກັບຂໍ້ກໍານົດເງື່ອນໄຂ, ການກວດກາ ແລະ ກັກກັນ ສໍາລັບການນໍາເຂົ້າເຂົ້າຂອງ ສປປ ລາວມີຄືດັ່ງນີ້:

**ມາດຕາ 1** ຂໍ້ກໍານົດເງື່ອນໄຂສຸຂານາໄມພືດກ່ຽວກັບເຂົ້າ ສະບັບນີ້ໝາຍເຖິງເຂົ້າສານ (Oryza sativa L) ເຊິ່ງໄດ້ຂັດຂາວແລ້ວທີ່ໄດ້ຜ່ານການປຸງແຕ່ງດ້ວຍການສີໂດຍບໍ່ມີເປືອກ, ແກບ ແລະ ສິ່ງເຈືອປົນອື່ນໆ

**ມາດຕາ 2** ເຂົ້າສານທີ່ສົ່ງອອກໄປ ສປ ຈີນ ຕ້ອງໃຫ້ສອດຄ່ອງກັບເງື່ອນໄຂສຸຂານາໄມພືດຂອງ ສປ ຈີນ ຈະຕ້ອງໄດ້ປັດສະຈາກສັດຕູພືດກັກກັນທີ່ກ່ຽວຂ້ອງຕາມທີ່ຝ່າຍຈີນໄດ້ກໍານົດ (ເບິ່ງເອກະສານຄັດຕິດ) ແລະ ສິ່ງເຈືອປົນ ເຊັ່ນ: ຂີ້ແກບ, ຣໍາ, ກ້ານຕົ້ນເຂົ້າ, ເສດໃບ, ເມັດຫຍ້າ, ເສດເຫຼືອຊາກສັດ ແລະ ຊິ້ນສ່ວນເມັດດິນອື່ນໆ

ເຂົ້າສານທີ່ສົ່ງອອກໄປ ສປ ຈີນຕ້ອງໃຫ້ສອດຄ່ອງກັບມາດຕະຖານແຫ່ງຊາດ ແລະ ລະບຽບການກ່ຽວຂ້ອງຂອງ ສປ ຈີນ ກ່ຽວກັບສານເຄມີຕົກຄ້າງທີ່ອະນຸຍາດໃຫ້ ແລະ ສານເປັນພິດທີ່ອັນຕະລາຍ.

**ມາດຕາ 3** ຜູ້ປະກອບການທີ່ສົ່ງອອກ, ປຸງແຕ່ງ, ເກັບຮັກສາເຂົ້າເພື່ອສົ່ງອອກໄປ ສປ ຈີນ ຈະຕ້ອງໄດ້ຈົດທະບຽນວິຊາການ ຢູ່ ສປປ ລາວ ເສຍກ່ອນ ແລະ ຈະຕ້ອງໄດ້ເຫັນດີຮັບເອົາໂດຍຝ່າຍຈີນ, ບັນຊີການຈົດທະບຽນວິຊາການຈະຕ້ອງໄດ້ລວມເອົາຊື່, ທີ່ຢູ່ ແລະ ລະຫັດທະບຽນວິຊາການ ສໍາລັບການກວດສອບຄືນຫຼັງໄດ້ຢ່າງຖືກຕ້ອງ ເມື່ອເວລາສົ່ງສິນຄ້າອອກໄປແລ້ວບໍ່ເໝາະສົມກັບບົດບັນຍັດຂໍ້ກໍານົດເງື່ອນໄຂ ສະບັບນີ້ ແລະ ບັນຊີຜູ້ປະກອບການທີ່ຈົດທະບຽນແລ້ວນັ້ນຈະຕ້ອງໄດ້ສະໜອງໂດຍຝ່າຍລາວໃຫ້ຝ່າຍຈີນກ່ອນການສົ່ງອອກແຕ່ລະລະດູການໃນແຕ່ລະປີ.

**ມາດຕາ 4** ຝ່າຍລາວຈະຕ້ອງໄດ້ນໍາໃຊ້ມາດຕະການປ້ອງກັນສັດຕູພືດແບບປະສົມປະສານ ແລະ ມາດຕະການໃນການຄວບຄຸມສັດຕູພືດກັກກັນທີ່ກ່ຽວຂ້ອງກັບ ສປ ຈີນ ຢູ່ໃນເຂດພື້ນທີ່ປູກເຂົ້າເພື່ອແນ່ໃສ່ຫຼຸດຜ່ອນການເກີດແຜ່ຂອງສັດຕູພືດ

ຝ່າຍລາວ ຈະຕ້ອງໄດ້ດໍາເນີນການສໍາຫຼວດສືບຫາແມງມອດເຈາະເຂົ້າຊະນິດຢູ່ຕາມໂຮງສີ ແລະ ໂຮງປຸງແຕ່ງເຂົ້າ ແລະ ຈະຕ້ອງໄດ້ຕິດຕັ້ງອຸປະກອນກັບດັກແມງມອດເຫຼົ່ານີ້ຢູ່ຕາມໂຮງສີ ແລະ ໂຮງປຸງແຕ່ງ, ຈໍານວນອຸປະກອນກັບດັກແມງມອດນີ້ຈະຕ້ອງໄດ້ຕິດຕັ້ງ 1 ອັນຕໍ່ເນື້ອທີ່ 100 ຕາແມັດ ຜົນຂອງການເກັບແມງມອດ ຫຼື ແມງໄມ້ສັດຕູພືດທີ່ມາຕິດກັບດັກນັ້ນຈະຕ້ອງໄດ້ກວດສອບ ແລະ ຈົດບັນທຶກໄວ້ທຸກໆ ອາທິດ. ຝ່າຍລາວ ຈະຕ້ອງໄດ້ສະໜອງລາຍງານຜົນເຫຼົ່ານີ້ໃຫ້ຝ່າຍຈີນຮັບຊາບ.

ໃນກຳມະວິທີປຸງແຕ່ງ, ເກັບຮັກສາ ແລະ ຂົນສົ່ງເຂົ້າຂອງລາວ ສຳລັບສົ່ງໄປ ສປ ຈີນນັ້ນ, ຝ່າຍລາວຈະຕ້ອງໄດ້ໃຊ້ມາດຕະການປ້ອງກັນເພື່ອບໍ່ໃຫ້ເຂົ້າສານຕິກໂໝກ ຫຼື ມີສິ່ງເຈືອປົນຈາກເມັດດິນ, ເສດພືດ, ເມັດຫຍ້າຕະຫຼອດຮອດສິ່ງເຈືອປົນອື່ນໆ. ຫ້າມເດັດຂາດເພີ່ມຕື່ມແບບທຽມ ຫຼື ປະສົມເຂົ້າປົນກັບສິ່ງເຈືອປົນ ຫຼື ເມັດພືດອື່ນ. ຝ່າຍລາວຈະຕ້ອງໄດ້ສະໜອງຂໍ້ມູນກ່ຽວກັບການຈັດຕັ້ງປະຕິບັດມາດຕະການດັ່ງກ່າວຂ້າງເທິງນັ້ນໃຫ້ຝ່າຍຈີນ.

**ມາດຕາ 5** ສະຖານທີ່ຫຸ້ມຫໍ່ ແລະ ກຳມະວິທີບັນຈຸຫີບຫໍ່ເຂົ້າເພື່ອສົ່ງອອກໄປ ສປ ຈີນ ຈະຕ້ອງໄດ້ຮັກສາໃຫ້ຢູ່ໃນສະພາບທີ່ສະອາດ ແລະ ປັດສະຈາກການຕິດແປດທາງດ້ານຊີວະພາບທີ່ອັນຕະລາຍ. ເຂົ້າທີ່ໄດ້ປຸງແຕ່ງ ແລະ ຫຸ້ມຫໍ່ແລ້ວນັ້ນຈະຕ້ອງໄດ້ເກັບຮັກສາແຍກໄວ້ຕ່າງຫາກ.

ກ່ອງບັນຈຸເຂົ້າເພື່ອສົ່ງອອກໄປ ສປ ຈີນ ຈະຕ້ອງໄດ້ຂຽນຂໍ້ຄວາມໃສ່ເປັນພາສາຈີນ ແລະ ພາສາອັງກິດທັງສອງພາສາໃຫ້ຂຽນວ່າ: ສົ່ງອອກໄປ ສປ ຈີນ “To the People’s Republic of China” ພ້ອມທັງໃຫ້ລະ ບຸແຈ້ງຂໍ້ມູນແນວພັນເຂົ້າ, ໂຮງງານປຸງແຕ່ງ, ຊື່ຜູ້ສົ່ງອອກ, ເລກລະຫັດທະບຽນ ແລະ ທີ່ຢູ່ໃນໂຮງງານດັ່ງກ່າວ.

ພາຫະນະຂົນສົ່ງເຂົ້າ ເພື່ອສົ່ງອອກໄປ ສປ ຈີນນັ້ນ ຈະຕ້ອງໃຫ້ແທດເໝາະກັບຂໍ້ກຳນົດເງື່ອນໄຂຄວາມສະອາດປອດໄພ ແລະ ປັດສະຈາກສັດຕູພືດກັກກັນທີ່ກ່ຽວຂ້ອງຂອງຝ່າຍຈີນ, ປັດສະຈາກຂີ້ແກບ, ກ້ານຕົ້ນເຂົ້າ, ໃບເຂົ້າ, ເມັດຫຍ້າ ແລະ ເມັດດິນເມັດຊາຍ.

**ມາດຕາ 6** ການສົ່ງອອກ, ຝ່າຍລາວຈະຕ້ອງໄດ້ດຳເນີນການກວດກາ ແລະ ເຮັດກັກກັນດ້ານສຸຂານາໄມເຂົ້ານັ້ນເສຍກ່ອນ. ຝ່າຍລາວຈະຕ້ອງໄດ້ອອກໃບຢັ້ງຢືນສຸຂານາໄມພືດໃຫ້ເຂົ້າທີ່ຖືກຕ້ອງຕາມຂໍ້ກຳນົດເງື່ອນ ໄຂຂອງບົດບັນທຶກສະບັບນີ້ ແລະ ພິມຂໍ້ຄວາມໃສ່ບ່ອນ ແຈ້ງຂໍ້ມູນເພີ່ມຕື່ມໃນໃບຢັ້ງຢືນສຸຂານາໄມພືດວ່າ “ຊຸດລວມເຂົ້າສົ່ງອອກນີ້ແມ່ນເໝາະສົມກັບຂໍ້ກຳນົດເງື່ອນໄຂສຸຂານາໄມພືດກ່ຽວກັບການສົ່ງອອກເຂົ້າຂອງ ສປປ ລາວໄປ ສປ ຈີນ ແມ່ນບໍ່ມີສັດຕູພືດກັກກັນທີ່ກ່ຽວຂ້ອງຂອງ ສປ ຈີນ”. ຮູບແບບ ແລະ ຂະໜາດຂອງໃບຢັ້ງຢືນຈະຕ້ອງໃຫ້ສອດຄ່ອງກັບມາດຕະຖານສາກົນ ISPM12, ເຊິ່ງຕົວຢ່າງໃບຢັ້ງຢືນສຸຂານາໄມພືດຈະຕ້ອງໄດ້ສົ່ງໃຫ້ ສປ ຈີນ ເພື່ອຮັບຮູ້ ແລະ ລົງບັນທຶກໄວ້.

ຝ່າຍຈີນ ຈະໄດ້ກຳນົດອົງກອນໃດໜຶ່ງ ເພື່ອຊ່ວຍປະສານກັບຝ່າຍລາວໃນການດຳເນີນການປະຕິບັດສຸຂານາໄມການສົ່ງອອກເຂົ້າສານຂອງ ສປປ ລາວໄປ ສປ ຈີນ.

**ມາດຕາ 7** ກ່ອນການສົ່ງອອກເຂົ້າໄປ ສປ ຈີນນັ້ນຈະຕ້ອງໄດ້ດຳເນີນການຮົມຢາຂ້າເຊື້ອເພື່ອຮັບປະກັນວ່າເຂົ້າສຳລັບສົ່ງໄປ ສປ ຈີນ ບໍ່ມີແມງໄມ້ທີ່ມີຊີວິດ ໂດຍສະເພາະແມງໄມ້ສັດຕູພືດໃນເລົ້າສາງ ແລະ ຝ່າຍລາວຈະຕ້ອງໄດ້ອອກໃບຢັ້ງຢືນເປັນທາງການກ່ຽວກັບການຮົມຢາຂ້າເຊື້ອ. ຢາຮົມຂ້າເຊື້ອ ແລະ ວິທີການ ເຮັດອານາໄມຈະຕ້ອງໄດ້ກຳນົດຂຶ້ນຮ່ວມກັນໂດຍສອງຝ່າຍກ່ອນການບັນຈຸ ແລະ ຈັດສົ່ງ, ພາຫະນະຂົນສົ່ງຈະ ຕ້ອງໄດ້ດຳເນີນການໂດຍຜ່ານການກວດ ແລະ ການຂ້າເຊື້ອພະຍາດໃຫ້ລະອຽດເພື່ອປ້ອງກັນຊະນິດພະຍາດ ເຊື້ອຊີວະພາບທີ່ອັນຕະລາຍປົນໄປນຳເຂົ້ານັ້ນໄດ້.

**ມາດຕາ 8** ເມື່ອເວລາເຂົ້າຂອງລາວ ໄປເຖິງດ່ານນຳເຂົ້າ ສປ ຈີນ ຈະຕ້ອງໄດ້ປະຕິບັດການກວດກາ ແລະ ກັກກັນຕາມລະບຽບກົດໝາຍຂອງຕົນ. ເຈົ້າໜ້າທີ່ກວດກາ ແລະ ກັກກັນພືດປະຈຳດ່ານຈະໄດ້ກວດສອບເບິ່ງເອກະສານກ່ຽວກັບ “ໃບຢັ້ງຢືນສຸຂານາໄມພືດ Phytosanitary Certificate” ແລະ ເອກະສານອື່ນທີ່ກ່ຽວຂ້ອງພ້ອມທັງປະຕິບັດການກວດກາ ແລະ ກັກກັນໃນເວລານຳເຂົ້າ.

**ມາດຕາ 9** ຝ່າຍລາວຕ້ອງຮີບຮ້ອນລາຍງານໃຫ້ຝ່າຍຈີນຊາບໂດຍທັນທີກ່ຽວກັບການມີສັດຕູພືດຊະນິດໃໝ່ເກີດຂຶ້ນ ແລະ ນໍາໃຊ້ມາດຕະການຈໍາກັດທີ່ກ່ຽວຂ້ອງໃນກໍລະນີຈໍາເປັນ ພາຍຫຼັງໄດ້ຕົກລົງເຫັນດີໂດຍຝ່າຍລາວແລ້ວ, ຝ່າຍຈີນຈະໄດ້ສົ່ງຄະນະຊ່ຽວຊານກັກກັນພືດມາ ສປປ ລາວ ເພື່ອຮ່ວມກັນກວດສອບການເກີດມີສັດຕູພືດຂອງເຂົ້າ ແລະ ການປ້ອງກັນ, ຄວບຄຸມພະຍາດ ແລະ ສັດຕູພືດຂອງເຂົ້ານີ້ ໂດຍອີງໃສ່ສະພາບພະຍາດ ແລະ ສັດຕູພືດຂອງເຂົ້າທີ່ເກີດຂຶ້ນ ແລະ ສະພາບການພົບເຫັນການລະບາດພະຍາດ ແລະ ສັດຕູພືດ, ຝ່າຍຈີນຈະໄດ້ດໍາເນີນການປະເມີນຄວາມສ່ຽງສັດຕູພືດ ແລະ ທົບທວນຄືນຍ້ອນຫຼັງຕໍ່ຂໍ້ກໍານົດເງື່ອນໄຂ ດ້ານກັກກັນພືດດັ່ງກ່າວມາແລ້ວນັ້ນຕໍ່ໄປອີກ ບົນພື້ນຖານການປະສານສົມທົບກັບຝ່າຍລາວ, ຝ່າຍຈີນຈະໄດ້ປັບ ປຸງບັນຊີສັດຕູພືດກັກກັນ ແລະ ມາດຕະການດ້ານການກັກກັນພືດທີ່ກ່ຽວຂ້ອງ.

**ມາດຕາ 10** ໃນປີທໍາອິດພາຍຫຼັງການຄ້າດໍາເນີນຂຶ້ນຝ່າຍຈີນຈະໄດ້ສົ່ງຄະນະຜູ້ຊ່ຽວຊານມາເບິ່ງໂຮງງານປຸງແຕ່ງເຂົ້າຂອງລາວ ເພື່ອດໍາເນີນການສໍາຫຼວດສັດຕູພືດ ແລະ ການກວດກາ, ການຕຽມການແຈ້ງນໍາເຂົ້າ ສປ ຈີນ. ໃນເວລາດຽວກັນ ຖ້າວ່າສັດຕູພືດກັນກັນໃດໜຶ່ງຖືກກວດພົບໃນເວລານໍາເຂົ້າ, ຝ່າຍຈີນສາມາດດໍາເນີນການກວດສອບນີ້ອີກ. ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງໃນການສໍາຫຼວດ (ລວມທັງຄ່າຂົນສົ່ງລະຫວ່າງປະເທດ, ການເດີນທາງ, ກິນຢູ່ ແລະ ຄ່າໃຊ້ຈ່າຍທາງການອື່ນໆ) ແມ່ນຜູ້ສົ່ງອອກຂອງລາວເປັນຜູ້ຮັບຜິດຊອບ ແລະ ຝ່າຍ ລາວຈະຕ້ອງຮັບຜິດຊອບອອກໜັງສືເຊີນ ແລະ ຊ່ວຍຈັດການອໍານວຍຄວາມສະດວກການເດີນທາງໃຫ້ຝ່າຍຈີນ.

**ມາດຕາ 11** ທັງສອງຝ່າຍເຫັນດີເປັນເອກະພາບຮ່ວມກັນວ່າ: ຂໍ້ກໍານົດເງື່ອນໄຂສະບັບນີ້ແມ່ນບໍ່ຂັດ ແລະ ບໍ່ສົ່ງຜົນສະທ້ອນຕໍ່ການຈັດຕັ້ງປະຕິບັດລະບຽບກົດໝາຍຂອງແຕ່ລະປະເທດ.

**ມາດຕາ 12** ຂໍ້ກໍານົດເງື່ອນໄຂສະບັບນີ້ມີຜົນນໍາໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ມີອາຍຸນໍາໃຊ້ 2 ປີ ຖ້າຫາກຮອດກໍານົດເວລາພາຍໃນ 6 ເດືອນ, ບໍ່ມີຝ່າຍໃດສະເໜີປັບປຸງ ຫຼື ຮຽກຮ້ອງຢຸດຕິ ຖືວ່າຂໍ້ກໍານົດເງື່ອນໄຂນີ້ແມ່ນມີຜົນສັກສິດນໍາໃຊ້ໄປອີກ 2 ປີ ໂດຍອັດຕະໂນມັດ.

ຂໍ້ກໍານົດເງື່ອນໄຂ ສະບັບນີ້, ລົງນາມຄັ້ງວັນທີ 05 ມັງກອນ 2015 ທີ່ນະຄອນຫຼວງປັກກິ່ງ, ປະກອບດ້ວຍ 1 ຊຸດ 2 ສະບັບ, ແຕ່ລະສະບັບຂຽນເປັນ 3 ພາສາຄື: ລາວ, ຈີນ ແລະ ອັງກິດ. ທັງ 3 ພາສາມີຄ່າເທົ່າທຽມກັນ. ຖ້າຫາກມີຄວາມເຂົ້າໃຈແຕກຕ່າງກັນແມ່ນໃຫ້ຖືກເອົາພາສາອັງກິດເປັນຫຼັກ.

## ເອກະສານອ້າງອີງ


ກະຊວງກະສິກຳ ແລະ ປ່າໄມ້. (2013). ຂໍ້ກຳນົດດ້ານສຸກຂານາໄມພືດຂອງໃນສະຫະພາບເອີລົບສຳຫລັບການນຳເຂົ້າພືດທີ່ສຳຄັນຂອງ ສປປ ລາວ. ກະຊວງກະສິກຳ ແລະ ປ່າໄມ້.

___________________. (2015). ຍຸດທະສາດ ການພັດທະນາກະສິກຳ ປີ 2020 ແລະ ວິໄສທັດ ຮອດ ປີ 2030. ກະຊວງກະສິກາ ແລະ ປ່າໄມ້. ແຫລ່ງຂໍ້ມູນ: http://www.maf.gov.la/wp-content/uploads/2016/01/MDS-2025-and-Vision-to-2030-Eng.pdf (20 ມັງກອນ 2018).

___________________. (2017). ຄຳແນະນາກ່ຽວກັບການຈັດຕັ້ງປະຕິບັດວຽກງານ ສຸຂານາໄມ ພາຍໃຕ້ສັນຍາການຄ້າຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານແຫ່ງ ສສ ຫວຽດນາມ. ກະຊວງກະສິກຳ ແລະ ປ່າໄມ້.

International Trade Center. (2017). Export Management Guide: Step-by-step procedures to export agricultural products from Lao PDR to China. Retreive from: http://www.laotradeportal.gov.la/kcfinder/upload/files/Import-Export%20Guide%20(EN)%20v1.0.pdf (23 December 2017).

Chen Namchaisiri, 2017. Perspectives of Thai Agriculture and Aquaculture in the Future, RMUTL 1st ISHPMNB 2017, Bangkok, Thailand

Department of Foreign Trade, 2017. Thai Standard for Rice, Ministry of Commerce of Thailand. http://ocs.dft.go.th (access dated December 2017)

# ເອກະສານຊ້ອນທ້າຍ[1]

## ລາຍຊື່ແນວພັນ ແລະ ລັກສະນະປະຈຳພັນຂອງເຂົ້າລາວ

| ລັກສະນະປະຈຳພັນ | ພັນເຂົ້າລາວ | | | | |
|---|---|---|---|---|---|
| | ຫອມມະລິ 105 | ຫອມ ສະຫວັນ | ທ່າດອກຄຳ 1 | ທ່າດອກຄຳ 8 | ທ່າດອກຄຳ 11 |
| ປະລິມານອາໄມໂລສ (ເປີເຊັນຂອງນ້ຳໜັກ) | 13,0 ຫາ 18,0 | | | | |
| ຄວາມໄວຕໍ່ຊ່ວງແສງ | ໄວຕໍ່ຊ່ວງແສງ | | | | |
| ສີຂອງເຂົ້າເປືອກ | ເຟືອງ | | ເຟືອງ | | |
| ຫາງຂອງເຂົ້າເປືອກ | ບໍ່ມີ | | | | |
| ຄວາມຍາວເມັດເຂົ້າເປືອກ (mm) | 9,7 ຫາ 11,5 | | 10,05 | | |
| ຄວາມຍາວເມັດເຂົ້າກ້ອງ (mm) | 7,0 ຫາ 8.1 | | 7,19 | | |
| ອັດຕາສ່ວນຄວາມຍາວຕໍ່ຄວາມກວ້າງຂອງເມັດເຂົ້າກ້ອງ | ≥ 3,2 ຕໍ່ 1 | | 3,08 | | |
| ນ້ຳໜັກຂອງເຂົ້າເປືອກ 100 ເມັດ (ກລາມ) | 2,50 ຫາ 2,97 | | | | |
| ລະດັບຄ່າການສະລາຍເມັດໃນດ່າງ | 6,0 ຫາ 7,0 | | | | |

## ຕາຕະລາງ 1: ເຂົ້າ ແລະ ສິ່ງທີ່ອາດຈະປົນໄດ້ໃນເຂົ້າເປືອກສົດຂອງເຂົ້າຫອມມະລິ

| ເຂົ້າ ແລະ ວັດຖຸອື່ນທີ່ອາດປົນໄດ້ | ເກນການຍອມຮັບ (ເປີເຊັນໂດຍນ້ຳໜັກ) | ໝາຍເຫດ |
|---|---|---|
| ເຂົ້າເມັດສີ | ≤ 1,0 | ທົດສອບຈາກເຂົ້າກ້ອງ |
| ເຂົ້າເມັດລີບລວມວັດຖຸອື່ນໆ | ≤ 2,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ |
| ເຂົ້າເມັດອ່ອນ | ≤ 6,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ |

## ຕາຕະລາງ 2: ເຂົ້າ ແລະ ສິ່ງທີ່ອາດປົນໄດ້ໃນເຂົ້າເປືອກແຫ້ງຂອງເຂົ້າຫອມມະລິ

| ວັດຖຸອື່ນທີ່ອາດປົນໄດ້ | ເກນການຍອມຮັບ (ເປີເຊັນໂດຍນ້ຳໜັກ) | ໝາຍເຫດ |
|---|---|---|
| ເຂົ້າເມັດສີ | ≤ 1,0 | ທົດສອບຈາກເຂົ້າກ້ອງ |
| ເຂົ້າເມັດເຫລືອງ | ≤ 1,0 | ທົດສອບຈາກເຂົ້າກ້ອງແລະ/ຫລືເຂົ້າຂາວ |
| ເຂົ້າເມັດເສຍ | ≤ 1,0 | ທົດສອບຈາກເຂົ້າກ້ອງແລະ/ຫລືເຂົ້າຂາວ |
| ເຂົ້າເມັດລີບລວມວັດຖຸອື່ນໆ | ≤ 2,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ |
| ເຂົ້າເມັດອ່ອນ | ≤ 6,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ |
| ເຂົ້າເມັດທ້ອງໄຂ່ | ≤ 7,0 | ທົດສອບຈາກເຂົ້າຂາວ |

[1] ເອກະສານ ຊ້ອນທ້າຍ ໄດ້ຮັບການສະໜອງໂດຍ ກົມແຜນການ ແລະ ການຮ່ວມມື, ກະຊວງ ອຄ 22/8/2018

| | | |
|---|---|---|
| ເຂົ້າໜຽວ | ≤ 2,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ ແລະ/ຫລືເຂົ້າຂາວ |

**ຕາຕະລາງ 3: ເຂົ້າ ແລະ ສິ່ງທີ່ອາດຈະປົນໄດ້ໃນເຂົ້າເປືອກສົດຂອງເຂົ້າກອມສະຫວັນ**

| ເຂົ້າ ແລະ ວັດຖຸອື່ນທີ່ອາດປົນໄດ້ | ເກນການຍອມຮັບ (ເປີເຊັນໂດຍນໍ້າໜັກ) | ໝາຍເຫດ |
|---|---|---|
| ເຂົ້າເມັດສີ | ≤ 1,0 | ທົດສອບຈາກເຂົ້າກ້ອງ |
| ເຂົ້າເມັດລີບລວມວັດຖຸອື່ນໆ | ≤ 2,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ |
| ເຂົ້າເມັດອ່ອນ | ≤ 6,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ |

**ຕາຕະລາງ 4: ເຂົ້າ ແລະ ສິ່ງອາດປົນໄດ້ໃນເຂົ້າເປືອກແຫ້ງຂອງເຂົ້າຫອມສະຫວັນ**

| ວັດຖຸອື່ນທີ່ອາດປົນໄດ້ | ເກນການຍອມຮັບ (ເປີເຊັນໂດຍນໍ້າໜັກ) | ໝາຍເຫດ |
|---|---|---|
| ເຂົ້າເມັດສີ | ≤ 1,0 | ທົດສອບຈາກເຂົ້າກ້ອງ |
| ເຂົ້າເມັດເຫລືອງ | ≤ 1,0 | ທົດສອບຈາກເຂົ້າກ້ອງແລະ/ຫລືເຂົ້າຂາວ |
| ເຂົ້າເມັດເສຍ | ≤ 1,0 | ທົດສອບຈາກເຂົ້າກ້ອງແລະ/ຫລືເຂົ້າຂາວ |
| ເຂົ້າເມັດລີບລວມວັດຖຸອື່ນໆ | ≤ 2,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ |
| ເຂົ້າເມັດອ່ອນ | ≤ 6,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ |
| ເຂົ້າເມັດທ້ອງໄຂ່ | ≤ 7,0 | ທົດສອບຈາກເຂົ້າຂາວ |
| ເຂົ້າໜຽວ | ≤ 2,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ ແລະ/ຫລືເຂົ້າຂາວ |

**ຕາຕະລາງ 5: ເຂົ້າ ແລະ ສິ່ງທີ່ອາດຈະປົນໄດ້ໃນເຂົ້າເປືອກສົດຂອງເຂົ້າທ່າດອກຄໍາ 1**

| ເຂົ້າ ແລະ ວັດຖຸອື່ນທີ່ອາດປົນໄດ້ | ເກນການຍອມຮັບ (ເປີເຊັນໂດຍນໍ້າໜັກ) | ໝາຍເຫດ |
|---|---|---|
| ເຂົ້າເມັດສີ | ≤ 1,0 | ທົດສອບຈາກເຂົ້າກ້ອງ |
| ເຂົ້າເມັດລີບລວມວັດຖຸອື່ນໆ | ≤ 2,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ |
| ເຂົ້າເມັດອ່ອນ | ≤ 6,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ |

**ຕາຕະລາງ 6: ເຂົ້າ ແລະ ສິ່ງອາດປົນໄດ້ໃນເຂົ້າເປືອກແຫ້ງຂອງເຂົ້າທ່າດອກຄໍາ 1**

| ວັດຖຸອື່ນທີ່ອາດປົນໄດ້ | ເກນການຍອມຮັບ (ເປີເຊັນໂດຍນໍ້າໜັກ) | ໝາຍເຫດ |
|---|---|---|
| ເຂົ້າເມັດສີ | ≤ 1,0 | ທົດສອບຈາກເຂົ້າກ້ອງ |
| ເຂົ້າເມັດເຫລືອງ | ≤ 1,0 | ທົດສອບຈາກເຂົ້າກ້ອງແລະ/ຫລືເຂົ້າຂາວ |
| ເຂົ້າເມັດເສຍ | ≤ 1,0 | ທົດສອບຈາກເຂົ້າກ້ອງແລະ/ຫລືເຂົ້າຂາວ |
| ເຂົ້າເມັດລີບລວມວັດຖຸອື່ນໆ | ≤ 2,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ |
| ເຂົ້າເມັດອ່ອນ | ≤ 6,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ |
| ເຂົ້າເມັດທ້ອງໄຂ່ | ≤ 7,0 | ທົດສອບຈາກເຂົ້າຂາວ |

| | | |
|---|---|---|
| ເຂົ້າໜຽວ | ≤ 2,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ ແລະ/ຫລືເຂົ້າຂາວ |

**ຕາຕະລາງ 7: ເຂົ້າ ແລະ ສິ່ງອາດປົ່ນໄດ້ໃນເຂົ້າເປືອກສົດຂອງເຂົ້າທ່າດອກຄຳ 8**

| ເຂົ້າ ແລະ ວັດຖຸອື່ນທີ່ອາດປົ່ນໄດ້ | ເກນການຍອມຮັບ (ເປີເຊັນ ໂດຍນ້ຳໜັກ) | ໝາຍເຫດ |
|---|---|---|
| ເຂົ້າເມັດສີ | ≤ 1,0 | ທົດສອບຈາກເຂົ້າກ້ອງ |
| ເຂົ້າເມັດລີບລວມວັດຖຸອື່ນໆ | ≤ 2,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ |
| ເຂົ້າເມັດອ່ອນ | ≤ 6,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ |

**ຕາຕະລາງ 8: ເຂົ້າ ແລະ ສິ່ງອາດປົ່ນໄດ້ໃນເຂົ້າເປືອກແຫ້ງຂອງເຂົ້າທ່າດອກຄຳ 8**

| ວັດຖຸອື່ນທີ່ອາດປົ່ນໄດ້ | ເກນການຍອມຮັບ (ເປີເຊັນ ໂດຍນ້ຳໜັກ) | ໝາຍເຫດ |
|---|---|---|
| ເຂົ້າເມັດສີ | ≤ 1,0 | ທົດສອບຈາກເຂົ້າກ້ອງ |
| ເຂົ້າເມັດເຫລືອງ | ≤ 1,0 | ທົດສອບຈາກເຂົ້າກ້ອງແລະ/ຫລືເຂົ້າຂາວ |
| ເຂົ້າເມັດເສຍ | ≤ 1,0 | ທົດສອບຈາກເຂົ້າກ້ອງແລະ/ຫລືເຂົ້າຂາວ |
| ເຂົ້າເມັດລີບລວມວັດຖຸອື່ນໆ | ≤ 2,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ |
| ເຂົ້າເມັດອ່ອນ | ≤ 6,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ |
| ເຂົ້າເມັດທ້ອງໄຂ່ | ≤ 7,0 | ທົດສອບຈາກເຂົ້າຂາວ |
| ເຂົ້າໜຽວ | ≤ 2,0 | ທົດສອບຈາກເຂົ້າເປືອກ /ເຂົ້າກ້ອງ/ຫລືເຂົ້າຂາວ |

**ຕາຕະລາງ 9: ເຂົ້າ ແລະ ສິ່ງອາດປົ່ນໄດ້ໃນເຂົ້າເປືອກແຫ້ງຂອງເຂົ້າທ່າດອກຄຳ 11**

| ວັດຖຸອື່ນທີ່ອາດປົ່ນໄດ້ | ເກນການຍອມຮັບ (ເປີເຊັນ ໂດຍນ້ຳໜັກ) | ໝາຍເຫດ |
|---|---|---|
| ເຂົ້າເມັດສີ | ≤ 1,0 | ທົດສອບຈາກເຂົ້າກ້ອງ |
| ເຂົ້າເມັດເຫລືອງ | ≤ 1,0 | ທົດສອບຈາກເຂົ້າກ້ອງແລະ/ຫລືເຂົ້າຂາວ |
| ເຂົ້າເມັດເສຍ | ≤ 1,0 | ທົດສອບຈາກເຂົ້າກ້ອງແລະ/ຫລືເຂົ້າຂາວ |
| ເຂົ້າເມັດລີບລວມວັດຖຸອື່ນໆ | ≤ 2,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ |
| ເຂົ້າເມັດອ່ອນ | ≤ 6,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ |
| ເຂົ້າເມັດທ້ອງໄຂ່ | ≤ 7,0 | ທົດສອບຈາກເຂົ້າຂາວ |
| ເຂົ້າໜຽວ | ≤ 2,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ ແລະ/ຫລື ເຂົ້າຂາວ |

**ຕາຕະລາງ 10: ເຂົ້າ ແລະ ສິ່ງອາດປົ່ນໄດ້ໃນເຂົ້າເປືອກສົດຂອງເຂົ້າທ່າດອກຄຳ 11**

| ເຂົ້າ ແລະ ວັດຖຸອື່ນທີ່ອາດປົ່ນໄດ້ | ເກນການຍອມຮັບ (ເປີເຊັນ ໂດຍນ້ຳໜັກ) | ໝາຍເຫດ |
|---|---|---|
| ເຂົ້າເມັດສີ | ≤ 1,0 | ທົດສອບຈາກເຂົ້າກ້ອງ |
| ເຂົ້າເມັດລີບລວມວັດຖຸອື່ນໆ | ≤ 2,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ |
| ເຂົ້າເມັດອ່ອນ | ≤ 6,0 | ທົດສອບຈາກເຂົ້າເປືອກ ແລະ/ຫລືເຂົ້າກ້ອງ |

## ຕາຕະລາງ 11: ມາດຕະຖານເຂົ້າສານຂາວເຂົ້າຫອມມະລິ 105

| ຊະນິດເຂົ້າສານຂາວ | ສ່ວນປະສົມ (ເປີເຊັນຂອງນ້ຳໜັກ) | | | | | ສ່ວນຂອງເຂົ້າປະເພດ1 | ສ່ວນຂອງເຂົ້າຫັກ | ເຂົ້າ ແລະ ສິ່ງທີ່ອາດປົ່ນໄດ້ | | | | | | | ລະດັບການຂັດສີ |
|---|---|---|---|---|---|---|---|---|---|---|---|---|---|---|---|
| | ເຂົ້າເຕັມເມັດ (≥7mm) | ເຂົ້າປະເພດ 1 | ເຂົ້າຫັກ ແລະ ປາຍເຂົ້າ C1 | | | | | ເຂົ້າເມັດແດງ ແລະ/ຫລືເມັດຂັດສີຕ່ຳກວ່າມາດຕະຖານ (ເປີເຊັນຂອງນ້ຳໜັກ) | ເມັດເຫລືອງ (ເປີເຊັນໂດຍນ້ຳໜັກ) | ເມັດທ້ອງໄຂ່ (ເປີເຊັນໂດຍນ້ຳໜັກ) | ເມັດເສຍ (ເປີເຊັນໂດຍນ້ຳໜັກ) | ເຂົ້າໜຽວ (ເປີເຊັນໂດຍນ້ຳໜັກ) | ເມັດລີບ ເມັດອ່ອນ ເມັດພືດອື່ນ ວັດຖຸອື່ນ (ເປີເຊັນໂດຍນ້ຳໜັກ) | ເຂົ້າເປືອກ (ເມັດ/ກິໂລ) | |
| | | | ລວມ | ເຂົ້າຫັກທີ່ມີຄວາມຍາວຕ່ຳກວ່າກຳນົດ ແລະ ບໍ່ຜ່ານຕະແກງເບີ 7 | ປາຍເຂົ້າ C1 | | | | | | | | | | |
| 100% | ≥60,0 | ສ່ວນທີ່ເຫລືອ | ≤4,5 | ≤0,5 | ≤0,1 | ≥8,0 | ≥0,5 ຫາ <8,0 | ≤0,5 | ≤0,2 | ≤3,0 | ≤0,25 | ≤1,0 | ≤0,2 | ≤5 | ສີດີພິເສດ |
| 5% | ≥60,0 | ສ່ວນທີ່ເຫລືອ | ≤7,0 | ≤0,5 | ≤0,1 | ≥7,5 | ≥3,5 ຫາ <7,5 | ≤2,0 | ≤0,5 | ≤6,0 | ≤0,25 | ≤1,5 | ≤0,3 | ≤8 | ສີດີ |
| 10% | ≥55,0 | ສ່ວນທີ່ເຫລືອ | ≤12,0 | ≤0,7 | ≤0,3 | ≥7,0 | ≥3,5 ຫາ <7,0 | ≤2,0 | ≤1,0 | ≤7,0 | ≤0,5 | ≤1,5 | ≤0,4 | ≤13 | ສີດີ |
| 15% | ≥55,0 | ສ່ວນທີ່ເຫລືອ | ≤17,0 | ≤2,0 | ≤0,5 | ≥6,5 | ≥3,0 ຫາ <6,5 | ≤5,0 | ≤1,0 | ≤7,0 | ≤1,0 | ≤2,0 | ≤0,4 | ≤13 | ສີດີປານກາງ |

## ຕາຕະລາງ 12: ມາດຕະຖານເຂົ້າສານຂາວຫັກຂອງເຂົ້າຫອມມະລິ 105

| ຊະນິດເຂົ້າຫັກ | ເນື້ອເຂົ້າທີ່ໄດ້ຈາກການຂັດສີເຂົ້າຂາວ | ສ່ວນປະສົມ (ເປີເຊັນໂດຍນໍ້າໜັກ) | | | | | | ເຂົ້າ ແລະ ສິ່ງທີ່ອາດປົ່ນໄດ້ (ເປີເຊັນໂດຍນໍ້າໜັກ) | | |
|---|---|---|---|---|---|---|---|---|---|---|
| | | ເຂົ້າເຕັມເມັດ (≥7mm) | ເຂົ້າເຕັມເມັດລວມກັບເຂົ້າຫັກທີ່ມີຄວາມຍາວ ≥6,5 ສ່ວນ | ເຂົ້າຫັກທີ່ມີຄວາມຍາວ ≥5,0 ສ່ວນ | ເຂົ້າຫັກທີ່ມີຄວາມຍາວ <6,5 ສ່ວນ ແລະ ບໍ່ຜ່ານຕະແກງເບີ 7 | ເຂົ້າຫັກທີ່ມີຄວາມຍາວ <5,0 ສ່ວນແລະບໍ່ຜ່ານຕະແກງເບີ 7 | ປາຍເຂົ້າ C1 | ເຂົ້າໜຽວ | | ວັດຖຸອື່ນ |
| | | | | | | | | ທັງໝົດ(ລວມປາຍເຂົ້າ C1) | ປາຍເຂົ້າ C1 | |
| A1 ດີພິເສດ | 100% | ≤15 | | ≥74,0 | | ≤10 | ≤1,0 | ≤1,5 | ≤0,5 | ≤0,5 |
| A1 ດີ | 100%, 5%, 10% | | ≤15,0 | | ≥80,0 | | ≤5,0 | ≤1,5 | ≤0,5 | ≤0,5 |

## ຕາຕະລາງ 13: ມາດຕະຖານເຂົ້າກ້ອງຂອງເຂົ້າຫອມມະລິ 105

| ຊະນິດເຂົ້າກ້ອງ | ສ່ວນປະສົມ(ເປີເຊັນໂດຍນໍ້າໜັກ) | | | ສ່ວນຂອງເຂົ້າປະເພດ 1 | ສ່ວນຂອງເຂົ້າຫັກ | ເຂົ້າ ແລະ ສິ່ງທີ່ອາດປົ່ນໄດ້ (ເປີເຊັນໂດຍນໍ້າໜັກ) | | | | | | |
|---|---|---|---|---|---|---|---|---|---|---|---|---|
| | ເຂົ້າເຕັມເມັດ | ເຂົ້າປະເພດ1 | ເຂົ້າຫັກ | | | ເຂົ້າເມັດແດງ | ເມັດເຫລືອງ | ເມັດທ້ອງໄຂ່ | ເມັດເສຍ | ເຂົ້າໜຽວ | ເມັດລີບ ເມັດອ່ອນ ເມັດພືດອື່ນ | ເຂົ້າເປືອກ/ແກບ |
| 100% | ≥80,0 | ສ່ວນທີ່ເຫລືອ | ≤4,5 | ≥8,0 | ≥5,0 ຫາ <8,0 | ≤1,5 | ≤0,75 | ≤3,0 | ≤0,75 | ≤1,5 | ≤5,0 | ≤1,0 |
| 5% | ≥75,0 | ສ່ວນທີ່ເຫລືອ | ≤7,0 | ≥7,5 | ≥3,5 ຫາ <7,5 | ≤2,0 | ≤1,0 | ≤6,0 | ≤1,0 | ≤1,5 | ≤6,0 | ≤1,0 |
| 10% | ≥70,0 | ສ່ວນທີ່ເຫລືອ | ≤12,0 | ≥7,0 | ≥3,5 ຫາ <7,0 | ≤2,0 | ≤1,0 | ≤7,0 | ≤1,0 | ≤1,5 | ≤7,0 | ≤2,0 |
| 15% | ≥65,0 | ສ່ວນທີ່ເຫລືອ | ≤17,0 | ≥6,5 | ≥3,0 ຫາ <6,5 | ≤5,0 | ≤1,0 | ≤7,0 | ≤1,5 | ≤1,5 | ≤8,0 | ≤2,0 |